ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລາມລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

25-31 ມີນາ 2026
ປີທີ 15
ສະບັບທີ 1059
ລາຍສັປະດາ

## ກອງປະຊຸມຄັ້ງປະຖົມມະລຶກ ໄຂຂຶ້ນຢ່າງເປັນທາງການ



(ສພຊ) - ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ໄດ້ໄຂຂຶ້ນຢ່າງເປັນທາງການ ໃນຕອນເຊົ້າວັນຈັນທີ 23 ມີນານີ້ ທີ່ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງ

ອ່ານຕໍ່ໜ້າ 3

ຊາດ; ຮອງປະທານສະພາແຫ່ງຊາດ ຈຳນວນ 4 ທ່ານ: ທ່ານ ນາງ ສູນທອນ ໄຊຍະຈັກ, ທ່ານ ກອງແກ້ວ ໄຊສົງຄາມ, ທ່ານ ວິໄລວົງ ບຸດດາຄຳ ແລະ ທ່ານ ມອນໄຊ ລາວມົວຊື່ງ; ກຳມະການຄະນະປະຈຳສະພາແຫ່ງຊາດ ຈຳນວນ 6 ທ່ານ: ທ່ານ ບຸນຈັນ ສິວົງພັນ, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ, ທ່ານ ນາງ ທຸມມາລີ ວົງພະຈັນ, ທ່ານ ໂພໄຊ ໄຂຄຳພິທູນ, ທ່ານ ພົຈວ. ສຸລິໄຊ ພິຈິດ ແລະ ທ່ານ ຈັນທະບູນ

ອ່ານຕໍ່ໜ້າ 11



ແນວຄິດປະທານ

### ໄກສອນ ພົມວິຫານ

ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ພັກເຮົາຖືວ່າທີ່ດິນແມ່ນຂຶ້ນກັບກຳມະສິດຂອງວົງຄະນາຍາດແຫ່ງຊາດ ໂດຍແມ່ນລັດເປັນຕົວແທນ, ປະຊາຊົນໄດ້ຮັບສິດນຳໃຊ້ທີ່ດິນ ນັບທັງສິດສືບມູນ ແລະ ໂອນ ໂດຍຖືກຕ້ອງຕາມກົດໝາຍ ໃນຖານະທີ່ເຂົາເຈົ້າເປັນສະມາຊິກທີ່ເປັນເຈົ້າຂອງວົງຄະນາຍາດ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 327)

ເນື້ອໃນເສດຖະກິດລະບອບປະຊາທິປະໄຕປະຊາຊົນແມ່ນຂະຫຍາຍເສດຖະກິດສິນຄ້າ, ເປີດກວ້າງຕະຫຼາດ ເຊິ່ງລວມມີຕະຫຼາດເຄື່ອງບໍລິໂພກ-ອຸປະໂພກ, ຕະຫຼາດພາຫະນະການຜະລິດ, ຕະຫຼາດທຶນ, ຕະຫຼາດກຳລັງແຮງງານ.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 198)

ເສດຖະກິດສິນຄ້າ ແມ່ນການຜະລິດ ແລະ ການແລກປ່ຽນສິນຄ້າ ໂດຍຜ່ານເງິນ, ຜ່ານຕະຫຼາດ. ໂດຍຜ່ານການພົວພັນສິນຄ້າ-ເງິນຕານີ້ ເພື່ອຊຸກຍູ້ການຜະລິດໃຫ້ຂະຫຍາຍຕົວ, ຊຸກຍູ້ການແບ່ງງານສັງຄົມ, ຊຸກຍູ້ການດັດແປງເຕັກນິກ ແລະ ຍົກສູງຜະລິດຕະພາບຂອງງານ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 330-331)

ອ່ານຕໍ່ສະບັບໜ້າ

## ຮັບຮອງການເລືອກຕັ້ງຕຳແໜ່ງສຳຄັນ ແລະ ໂຄງປະກອບກົງຈັກການຈັດຕັ້ງອົງການອຳນາດລັດ



(ສພຊ) - ການດຳເນີນກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ໃນວັນທີ 23 ມີນານີ້ ໄດ້ພິຈາລະນາ ແລະ ຮັບຮອງເອົາການເລືອກຕັ້ງບັນດາຕຳແໜ່ງທີ່ສຳຄັນຂອງລັດ ແລະ ໂຄງປະກອບກົງຈັກການຈັດຕັ້ງຂອງອົງການອຳນາດລັດ ດັ່ງນີ້:

ທ່ານ ໄຊສົມພອນ ພົມວິຫານ ເປັນປະທານສະພາແຫ່ງ

## 5 ຄາດໝາຍຕົ້ນຕໍຂອງແຜນການ 5 ປີ ຄັ້ງທີ X



(ສພຊ) - ອີງຕາມບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ແລະ ທິດທາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ທີ່ທ່ານນາຍົກລັດຖະມົນຕີ ສອນໄຊ ສີພັນດອນ ສະເໜີຕໍ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ໃນຕອນບ່າຍວັນທີ 23 ມີນາຜ່ານມາ, ໂດຍສະເພາະແຜນການ 5 ປີ ຄັ້ງທີ X ເຊິ່ງເປັນແຜນສືບຕໍ່ພັດທະນາປະເທດໃຫ້ຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະ

ອ່ານຕໍ່ໜ້າ 5

## ໂຄງການທາງລົດໄຟ ແຕ່ຕົວເມືອງທ່າແຂກ ຫາ ມູຢ່າ ຊາຍແດນລາວ-ຫວຽດນາມ



(ສພຊ) - ວາລະກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ໃນຕອນເຊົ້າວັນທີ 24 ມີນານີ້, ທ່ານ ສະເຫຼີມໄຊ ກົມມະສິດ ຮອງນາຍົກລັດຖະມົນຕີ, ຜູ້ປະຈຳການໃນນາມປະທານຄະນະກຳມະການສົ່ງເສີມແລະຄຸ້ມຄອງການລົງທຶນ, ປະທານຄະນະກຳມະການຊີ້ນຳລະດັບຊາດ ໂຄງການກໍ່ສ້າງທາງລົດໄຟ ລາວ-ຫວຽດນາມ ໄດ້ລາຍງານກ່ຽວກັບໂຄງການພັດທະນາເສັ້ນທາງລົດໄຟ ລາວ-ຫວຽດນາມ ຊ່ວງທີ 1 ແຕ່ຕົວເມືອງທ່າແຂກ ແຂວງຄຳມ່ວນ ຫາ ມູຢ່າ (ຊາຍແດນລາວ-ຫວຽດນາມ) ໄລຍະທາງ 147 ກິໂລແມັດ (ກມ) ໃນຮູບແບບ BOT ເຊິ່ງເປັນ 1 ໃນ 3 ຊ່ວງໄລຍະຂອງໂຄງການທາງລົດໄຟ ລາວ-ຫວຽດນາມ ເລີ່ມຈາກນະຄອນຫຼວງວຽງຈັນ ຫາ ທ່າເຮືອຫວຸ້ງອ່າງ ສສ.ຫວຽດນາມ ມີໄລຍະທາງປະມານ 562.8 ກມ; ຜ່ານການສຶກສາທາງດ້ານເຕັກນິກ, ສັງຄົມ-ສິ່ງແວດລ້ອມ ແລະ ການຄົ້ນຄວ້າແຫຼ່ງທຶນ, ໄດ້ມີຜົນສຳເລັດດັ່ງນີ້:

1. ດ້ານເສດຖະກິດ-ເຕັກນິກ:

- ຖືກຮັບຮອງບົດທົບທວນຄືນການສຶກສາຄວາມເປັນໄປໄດ້ (FS) ທາງດ້ານເສດຖະກິດ-ເຕັກນິກໂຄງການແລ້ວ (ສະບັບເລກທີ 20915/ຍທຂ.ກທຟ, ລົງວັນທີ 19 ສິງຫາ 2022);
- ຖືກຮັບຮອງຜົນການ

ອ່ານຕໍ່ໜ້າ 11

## ຜົນສຳເລັດການເລືອກຕັ້ງ ແລະ ຢັ້ງຢືນຄຸນລັກສະນະ



(ສພຊ) - ວາລະຕອນເຊົ້າຂອງກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ໃນວັນທີ 23 ມີນາ 2026, ທ່ານ ນາງ ສີໃສ ລືເດດມູນສອນ ກຳມະການກົມການເມືອງສູນກາງພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກທັງເປັນຮອງປະທານຄະນະກຳມະການເລືອກຕັ້ງລະດັບຊາດ (ຄລຊ) ໄດ້ລາຍງານຜົນສຳເລັດຂອງການເລືອກຕັ້ງ ແລະ ຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ ຊຸດທີ V ເຊິ່ງມີເນື້ອໃນດັ່ງນີ້:

I. ການກະກຽມຄວາມພ້ອມໃນການເລືອກຕັ້ງສະມາ

ອ່ານຕໍ່ໜ້າ 9

### ກຳແໜ້ນວິທີ ການຈັດຕັ້ງປະຕິບັດ

(ໜ້າ 8)



8 ວິທີແກ້...

(ໜ້າ 10)




ໃຫ້ບຸລິມະສິດ...

(ໜ້າ 12)

## ຊົມເຊີຍກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ຢ່າງສຸດໃຈ!

# 4 ຄາດໝາຍສູ້ຊົນຂອງອົງການກວດກາແຫ່ງລັດ



(ສພຊ) - ຕອນບ່າຍວັນທີ 25 ມີນາຜ່ານມາ, ທ່ານ ວັນໄຊ ພອງສະຫວັນ ປະທານອົງການກວດກາແຫ່ງລັດ ໄດ້ລາຍງານຫຍໍ້ທິດທາງວຽກງານ 5 ປີ (2026-2030) ຂອງອົງການກວດກາແຫ່ງລັດຕໍ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ເຊິ່ງມີຄາດໝາຍສູ້ຊົນ 4 ດ້ານ ຄື:

1. ການເສີມສ້າງລະບົບກວດກາ: ສືບຕໍ່ປັບປຸງ ແລະ ພັດທະນາກົນໄກການກວດກາ ໃຫ້ຄົບຖ້ວນ ແລະ ທັນສະໄໝ ໂດຍການປັບປຸງກົດໝາຍ, ລະບຽບ ແລະ ຂໍ້ກຳນົດຕ່າງໆ ໃຫ້ສອດຄ່ອງກັບສະພາບການພັດທະນາເສດຖະກິດ-ສັງຄົມ, ໃຫ້ວຽກງານກວດກາເປັນກົນໄກສຳຄັນໃນການຄຸ້ມຄອງລັດ ໃຫ້ໂປ່ງໃສມີປະສິດທິພາບ.

2. ການຍົກສູງປະສິດທິຜົນຂອງວຽກງານກວດກາ:

- ການກວດກາໃຫ້ຄວບຄຸມໃນທຸກຂົງເຂດວຽກງານການຄຸ້ມຄອງບໍລິຫານລັດທຸກຂັ້ນ;

-ຕິດຕາມກວດກາຄວາມຮັບຜິດຊອບການເມືອງຫຼືການປະຕິບັດໜ້າທີ່ທີ່ໄດ້ຮັບມອບໝາຍ, ກວດກາການນຳໃຊ້ສິດອຳນາດຂອງຜູ້ນຳພາ ແລະ ຄຸ້ມຄອງບໍລິຫານລັດທຸກຂັ້ນ ດ້ວຍການແບ່ງຄວາມຮັບຜິດຊອບຢ່າງຈະແຈ້ງ;

-ເນັ້ນການກວດກາໃຫ້ເຂົ້າສູ່ລວງເລິກ, ກວດກາຂົງເຂດສຳຄັນ, ຂົງເຂດທີ່ມີຄວາມສ່ຽງເຊັ່ນ: ໂຄງການພັດທະນາຂອງລັດໃນຂົງເຂດຕ່າງໆ, ການຄຸ້ມຄອງ ແລະ ນຳໃຊ້ຊັບສິນສາທາລະນະ, ການຄຸ້ມຄອງການເງິນ ແລະ ການນຳໃຊ້ງົບປະມານ;

- ແກ້ໄຂຜົນຂອງການກວດກາໃຫ້ວ່ອງໄວຖືກຕ້ອງຕາມລະບຽບກົດໝາຍ, ເກັບກູ້ເອົາຊັບສິນ ແລະ ງົບປະມານທີ່ຕົກເຮ່ຍເສຍຫາຍ ເຂົ້າງົບປະມານຂອງລັດ.

3. ການປ້ອງກັນ ແລະ ຕ້ານການສໍ້ລາດບັງຫຼວງ:

- ສືບຕໍ່ໂຄສະນາເຜີຍແຜ່ກົດໝາຍ, ຂໍ້ກຳນົດ, ລະບຽບການຕ່າງໆ ເພື່ອປູກຈິດສຳນຶກໃຫ້ພະນັກງານ, ສະມາຊິກພັກ ແລະ ປະຊາຊົນ ເຂົ້າໃຈເຖິງຜົນຮ້າຍຂອງການສໍ້ລາດບັງຫຼວງ ແລະເຂົ້າຮ່ວມໃນຂະບວນການຕ້ານການສໍ້ລາດບັງຫຼວງໃຫ້ກວ້າງຂວາງ;

- ເຜີຍແຜ່ໃຫ້ການຈັດຕັ້ງ, ປະຊາຊົນ ແລະ ສັງຄົມ ຮັບຊາບຜົນຂອງການກວດກາຕາມຄວາມເໝາະສົມ;

- ສ້າງເງື່ອນໄຂໃຫ້ທຸກການຈັດຕັ້ງ, ສະມາຊິກພັກ, ພະນັກງານ, ສື່ມວນຊົນ ແລະ ປະຊາຊົນ ເຂົ້າຮ່ວມວຽກງານຕິດຕາມ, ກວດກາຢ່າງຕັ້ງໜ້າ.

4. ການພັດທະນາຄະນະກວດກາ ແລະ ພະນັກງານກວດກາ:

- ພັດທະນາວຽກງານກວດກາໃຫ້ມີຄວາມເຂັ້ມແຂງ, ໂປ່ງໃສ, ທັນສະໄໝ ແລະ ມີປະສິດທິຜົນ;

-ຍົກລະດັບຄຸນນະພາບຂອງພະນັກງານກວດກາ ດ້ວຍການເຝິກອົບຮົມ, ພັດທະນາທັກສະວິຊາການ, ຄວາມເປັນມືອາຊີບ;

- ສ້າງໃຫ້ມີຈັນຍາບັນ, ຈັນຍາທຳ, ມີວິໄນສູງ, ບໍ່ສວຍໃຊ້ໜ້າທີ່ໃນທາງທີ່ບໍ່ຖືກຕ້ອງໃນການປະຕິບັດໜ້າທີ່ວຽກງານ;

- ນຳໃຊ້ເຕັກໂນໂລຊີເຂົ້າໃນວຽກງານກວດກາ, ຄຸ້ມຄອງຂໍ້ມູນຫຼັກຖານຜົນຂອງການກວດກາ ເພື່ອໃຫ້ມີຄວາມຊັດເຈນແມ່ນຢຳ.

# ບາງຂໍ້ສະເໜີໃຫ້ອົງການກວດກາ ແລະ ອົງການກວດສອບ ເອົາໃຈໃສ່



(ສພຊ) - ທ່ານ ຈັນທະບູນ ສຸກອາລຸນ ປະທານກຳມາທິການເສດຖະກິດ ແລະ ການເງິນ ໄດ້ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດປະກອບຄຳເຫັນຕໍ່ບົດລາຍງານຂອງອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ ກ່ຽວກັບທິດທາງແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ໃນວາລະກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ເມື່ອຕອນບ່າຍວັນທີ 25 ມີນາຜ່ານມາ ເຊິ່ງສະເໜີໃຫ້ເອົາໃຈໃສ່ດັ່ງນີ້:

ຕໍ່ອົງການກວດກາແຫ່ງລັດ

1) ຄົ້ນຄວ້າສ້າງ, ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ຜັນຂະຫຍາຍບາງມາດຕາຂອງກົດໝາຍ ທີ່ຕົນຮັບຜິດຊອບໃຫ້ມີຄວາມຊັດເຈນແລະສາມາດຈັດຕັ້ງປະຕິບັດ ພ້ອມທັງເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ມະຕິກອງປະຊຸມສະພາແຫ່ງຊາດ ໃຫ້ແກ່ເປົ້າໝາຍທີ່ຖືກກວດກາ ແລະ ພາກສ່ວນທີ່ກ່ຽວຂ້ອງ ຮັບຮູ້

ອ່ານຕໍ່ໜ້າ 6

# ຈະຮັບຮອງການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກເປັນວາລະແຫ່ງຊາດ



(ສພຊ) - ຕອນບ່າຍວັນທີ 26 ມີນາຜ່ານມາ, ທ່ານ ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ລາຍງານແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສະພາແຫ່ງຊາດ ຕໍ່ກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ X ເຊິ່ງມີດັ່ງນີ້:

1. ດ້ານນິຕິບັນຍັດ

1) ຍົກສູງຄຸນນະພາບ ແລະ ປະສິດທິຜົນໃນການສ້າງ ແລະ ປັບປຸງກົດໝາຍ ໃຫ້ມີຄວາມສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ສະພາບການພັດທະນາເສດຖະກິດ-ສັງຄົມໃນໄລຍະໃໝ່ແລະມີຄວາມຍືນຍົງ; ສູ້ຊົນສ້າງ ແລະ ປັບປຸງກົດໝາຍ ໃຫ້ໄດ້ 91 ສະບັບ ໃນນີ້, ສ້າງໃໝ່ 20 ສະບັບ ແລະ ປັບປຸງ 71 ສະບັບ ເຊິ່ງກວມເອົາຂົງເຂດການປົກຄອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບແລະການຕ່າງປະເທດ.

2) ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານສ້າງ ແລະ ປັບປຸງກົດໝາຍ ໃຫ້ໄປຕາມຂັ້ນຕອນ ແລະ ວິທີການ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສ້າງນິຕິກຳ, ໃຫ້ຄວາມສຳຄັນການນຳເອົາຮ່າງກົດໝາຍໄປທາບທາມ ແລະ ປະເມີນຢ່າງກວ້າງຂວາງ ແລະ ແທດເຖິງເປົ້າໝາຍຕົວຈິງ ຢູ່ເຂດເລືອກຕັ້ງຕ່າງໆໃນຂອບເຂດທົ່ວປະເທດ.

3) ເປັນເຈົ້າການຄົ້ນຄວ້າ, ພິຈາລະນາ ການໃຫ້ສັດຕະຍາບັນແກ່ສົນທິສັນຍາຕ່າງໆ, ການເຂົ້າຮ່ວມເປັນພາຄີ, ການຍົກເລີກສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ຢ່າງໜ້ອຍ 5 ສະບັບຂຶ້ນໄປ.

4) ເອົາໃຈໃສ່ຄົ້ນຄວ້າຕີຄວາມໝາຍ, ອະທິບາຍລັດຖະທຳມະນູນ, ກົດໝາຍຕາມການສະເໜີຂອງພາກສ່ວນກ່ຽວຂ້ອງ.

5) ເພີ່ມທະວີການໂຄສະນາເຜີຍແຜ່ກົດໝາຍ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ໃຫ້ກວ້າງຂວາງເລິກເຊິ່ງດ້ວຍຫຼາຍຮູບແບບ, ຫຼາຍຊ່ອງທາງ ໂດຍນຳໃຊ້ສື່ມວນຊົນ, ສື່ສິ່ງພິມ ແລະ ສື່ອອນລາຍ ເພື່ອໃຫ້ອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງສັງຄົມ ແລະ ປະຊາຊົນບັນດາເຜົ່າໄດ້ຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງທົ່ວເຖິງ.

6) ເອົາໃຈໃສ່ຊຸກຍູ້ພາກສ່ວນກ່ຽວຂ້ອງ ໃນການຜັນຫຍາຍເນື້ອໃນບາງມາດຕາຂອງກົດໝາຍ ເປັນນິຕິກຳໃຕ້ກົດໝາຍ ຢ່າງໜ້ອຍໃຫ້ໄດ້ 80% ຂອງບັນດາມາດຕາທີ່ກົດໝາຍກຳນົດໃຫ້ອອກເປັນນິຕິກຳຕ່າງຫາກ.

2. ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ

1) ຮັບປະກັນໃຫ້ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ ແລະ ສະພາບຄວາມເປັນຈິງຂອງປະເທດ, ຜົນປະໂຫຍດລວມຂອງປະເທດຊາດ, ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ໝັ້ນທ່ຽງ ແລະ ຍືນຍົງ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໄດ້ຮັບການປັບປຸງໃຫ້ນັບມື້ດີຂຶ້ນ.

2) ຮັບປະກັນໃຫ້ມີຄຸນນະພາບ, ສ່ອງແສງເຖິງການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XII ແລະ ໂຄງການການເມືອງ ສະບັບທີ 3 ຂອງພັກ, ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກວາງອອກແຕ່ລະໄລຍະ, ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X; ສະເພາະໜ້າ ຈະມີການພິຈາລະນາຮັບຮອງເອົາການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ເປັນວາລະແຫ່ງຊາດ.

3) ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອປຶກສາຫາລືແລກປ່ຽນແລະເອກະພາບກ່ຽວກັບເນື້ອໃນແຕ່ລະບັນຫາ, ມີການສະໜອງຂໍ້ມູນໃຫ້ຖືກຕ້ອງ, ຊັດເຈນ, ຄົບຖ້ວນ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ; ສູ້ຊົນໃຫ້ມີການຈັດກອງປະຊຸມຮ່ວມຢ່າງໜ້ອຍປີລະ 2 ຄັ້ງ ກັບຄະນະລັດຖະບານ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດ ຕັ້ງມະຫາຊົນຂັ້ນສູນກາງ.

3. ດ້ານການຕິດຕາມກວດກາ

1) ຍົກສູງຄຸນນະພາບການຕິດຕາມກວດກາ ໃນການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງສະພາແຫ່ງຊາດ ແລະ ນິຕິກຳໃຕ້ກົດໝາຍຂອງບັນດາອົງການຈັດຕັ້ງລັດ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ໂດຍຜ່ານກອງປະຊຸມສພຊແລະ ສພຂ 2 ຄັ້ງຕໍ່ປີ; ຈັດຕັ້ງຄະນະລົງຕິດຕາມກວດກາໃນນາມ ຄປຈສພຊ, ກຳມາທິການ, ຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ ຢ່າງໜ້ອຍ 30 ຄັ້ງຂຶ້ນໄປຕໍ່ປີ.

2) ຕິດຕາມກວດກາການເຄື່ອນໄຫວປະຕິບັດໜ້າທີ່ຂອງອົງການລັດ ກໍຄືບຸກຄະລາກອນທີ່ ສພຊ ເລືອກຕັ້ງ ແລະ ຮັບຮອງເອົາການສະເໜີແຕ່ງຕັ້ງ ໂດຍຕິດພັນກັບການປະເມີນຄວາມໄວ້ວາງໃຈ ຢ່າງໜ້ອຍໃຫ້ໄດ້ 1-2 ຄັ້ງ.

3) ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ, ການລົງທຶນ; ການຈັດຕັ້ງປະຕິບັດການເຄົາລົບ ແລະ ປະຕິບັດກົດໝາຍຂອງບັນດາອົງການລັດ; ກວດກາການຈັດຕັ້ງປະຕິບັດມະຕິຂອງສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ແລະ ການແກ້ໄຂຄຳສະເໜີຂອງປະຊາຊົນຜ່ານສາຍດ່ວນ 156 ຂອງກອງປະຊຸມ ສພຊ.

4) ຕິດຕາມກວດກາບັນດາໂຄງການລົງທຶນຢູ່ເຂດເລືອກ

ອ່ານຕໍ່ໜ້າ 8

# ຈະສ້າງ ແລະ ປັບປຸງກົດໝາຍ 90 ສະບັບ



(ສພຊ) - ວາລະກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ໃນຕອນບ່າຍວັນທີ 26 ມີນາຜ່ານມາ, ທ່ານ ກອງແກ້ວ ໄຊສົງຄາມ ຮອງປະທານສະພາແຫ່ງຊາດຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ຂຶ້ນລາຍງານກ່ຽວກັບແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ແຕ່ປີ 2026-2030 ຂອງ ສພຊ ຊຸດທີ X ເຊິ່ງທ່ານໃຫ້ຮູ້ວ່າ: ຜ່ານການຄົ້ນຄວ້າການນຳສະເໜີຂອງພາກສ່ວນທີ່ກ່ຽວຂ້ອງ, ຄະນະປະຈຳສະພາແຫ່ງຊາດ ແລະ ລັດຖະບານ ໄດ້ເປັນເອກະພາບກຳນົດຮ່າງກົດໝາຍໃນຂົງເຂດຕ່າງໆ ເຂົ້າໃນແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງ ສພຊ ຊຸດທີ X ຈຳນວນ 90 ສະບັບ ໃນນັ້ນ ສ້າງໃໝ່ 19 ສະບັບ, ປັບປຸງ 71 ສະບັບ ທີ່ຈັດແບ່ງໃສ່ແຕ່ລະຂົງເຂດດັ່ງນີ້:

- ຂົງເຂດການປົກຄອງ ແລະ ຍຸຕິທຳ ມີ 10 ສະບັບ: ສ້າງໃໝ່ 4 ສະບັບ, ປັບປຸງ 6 ສະບັບ;
- ຂົງເຂດເສດຖະກິດ ມີ 49 ສະບັບ: ສ້າງໃໝ່ 11 ສະບັບ, ປັບປຸງ 38 ສະບັບ;
- ຂົງເຂດວັດທະນະທຳ-ສັງຄົມ ມີ 25 ສະບັບ: ສ້າງໃໝ່ 3 ສະບັບ, ປັບປຸງ 22 ສະບັບ;
- ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີ 6 ສະບັບ: ສ້າງໃໝ່ 1 ສະບັບ, ປັບປຸງ 5 ສະບັບ.

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ຊາດ ຊຸດທີ IX; ເຂົ້າຮ່ວມມີທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ, ບັນດາທ່ານການນຳຂັ້ນສູງແລະອະດີດການນຳຂັ້ນສູງຂອງພັກ-ລັດ, ທ່ານ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ ແລະ ບັນດາທ່ານສະມາຊິກລັດຖະບານ, ສະມາຊິກສະພາແຫ່ງຊາດ(ສສຊ) ຊຸດທີ X ຈາກ 18 ເຂດເລືອກຕັ້ງທົ່ວປະເທດ, ບັນດາທ່ານທູຕານຸທູດ, ຕາງໜ້າອົງການຈັດຕັ້ງສາກົນປະຈຳສປປລາວແລະແຂກຖືກເຊີນ.

ພາຍຫຼັງທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ກ່າວສູນທອນພົດເປີດກອງປະຊຸມຢ່າງເປັນທາງການ. ກອງປະຊຸມໄດ້ຮັບຟັງການລາຍງານຜົນສຳເລັດການເລືອກຕັ້ງ ແລະ ຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ຈາກທ່ານ ນາງ ສີໃສ ລືເດດມູນສອນ ຮອງປະທານຄະນະກຳມະການເລືອກຕັ້ງລະດັບຊາດ; ຈາກນັ້ນ, ທ່ານປະທານສະພາແຫ່ງຊາດ ຊຸດທີ IX ໄດ້ຂຶ້ນລາຍງານການປະຕິບັດໜ້າທີ່ໃນໄລຍະ 5 ປີຜ່ານມາ ແລະ ກ່າວອຳລາໜ້າທີ່; ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ຊຸດທີ IX ໄດ້ອ່ານໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ຊຸດທີIXກ່ຽວກັບມາດຕະຖານເງື່ອນໄຂຂອງປະທານສະພາແຫ່ງຊາດແລະເປົ້າໝາຍເລືອກຕັ້ງເປັນປະທານສະພາແຫ່ງຊາດ ຊຸດທີ X, ບັນດາທ່ານ ສສຊ ກໍໄດ້ລົງຄະແນນສຽງເລືອກຕັ້ງເອົາທ່ານ ປອ. ໄຊສົມພອນ ພົມວິຫານ ເປັນປະທານສະພາແຫ່ງຊາດ ຊຸດທີ X ເຊິ່ງເປັນສະໄໝທີສອງຕິດຕໍ່ກັນ.

ໃນການກ່າວຮັບໜ້າທີ່, ທ່ານ ປອ. ໄຊສົມພອນ ພົມວິຫານ ໃຫ້ຄຳໝັ້ນສັນຍາວ່າ ຈະສຸມທຸກສະຕິປັນຍາ, ເຫື່ອແຮງ, ຄວາມຮູ້ຄວາມສາມາດ ເຂົ້າໃນການປະຕິບັດໜ້າທີ່ທີ່ໄດ້ຮັບມອບໝາຍດ້ວຍຄວາມຮັບຜິດຊອບສູງ; ຈະສັດຊື່ບໍລິສຸດຕໍ່ຜົນປະໂຫຍດຂອງຊາດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ແລະ ຈະຮ່ວມກັບໝູ່ຄະນະ ກໍຄືສະມາຊິກສະພາແຫ່ງຊາດ ຊຸດທີ X ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກໂດຍສະເພາະມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ, ມະຕິກອງປະຊຸມສະພາແຫ່ງຊາດ ເຂົ້າໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ ຊຸດທີ X ຕາມທີ່ກຳນົດໃນລັດຖະທຳມະນູນ ແລະ ກົດໝາຍ ໃຫ້ມີໝາກຜົນຕົວຈິງ, ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ໃຫ້ນັບມື້ນັບເຂັ້ມແຂງ ແລະ ໝັກແໜ້ນ. ສະແດງຄວາມຫວັງອັນແຮງກ້າວ່າ ລັດຖະບານ, ບັນດາສະມາຊິກສະພາແຫ່ງຊາດ, ອົງການຈັດຕັ້ງພັກ-ລັດທຸກຂັ້ນ ກໍຄືປະຊາຊົນລາວບັນດາເຜົ່າ ຈະສືບຕໍ່ໃຫ້ການຮ່ວມມື, ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອສະພາແຫ່ງຊາດ ຊຸດທີ X ເພື່ອເຮັດໜ້າທີ່ອັນມີກຽດສະຫງ່າທີ່ພັກ ແລະ ປະຊາຊົນມອບໝາຍໃຫ້.

ຫຼັງຈາກນັ້ນ, ກອງປະຊຸມໄດ້ພິຈາລະນາແລະຮັບຮອງເອົາການເລືອກຕັ້ງບັນດາຕຳແໜ່ງທີ່ສຳຄັນຂອງລັດ ແລະ ໂຄງປະກອບກົງຈັກການຈັດຕັ້ງຂອງອົງການອຳນາດລັດ.

ຕາມວາລະຕອນບ່າຍ, ກອງປະຊຸມຈະໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030).

ກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ຊຸດທີ X ຈະດຳເນີນໄປຮອດວັນທີ 27 ມີນາ 2026, ຫ້ອງວ່າການສະພາແຫ່ງຊາດ ໄດ້ຈັດຕັ້ງໜ່ວຍງານເພື່ອຮັບເອົາຄຳຄິດຄຳເຫັນ ແລະ ຄຳສະເໜີໂດຍກົງຈາກປະຊາຊົນທີ່ຈະສົ່ງໄປຍັງກອງປະຊຸມ ເຊິ່ງສາມາດສົ່ງຕາມວິທີລຸ່ມນີ້:

- ສາຍດ່ວນໝາຍເລກ: 156 (ໃນໂມງລັດຖະການ)
- ອີເມວ: nalao.156@gmail.com
- ແອັບພລິເຄຊັນ: Lao Na

**(ນາງ ສຸພາວັນ ທອມສະນິດ)**

# ຄປຈສພຊ ສະເໜີໃຫ້ສະໜອງ ນ້ຳມັນເຊື້ອໄຟກັບຄືນສູ່ສະພາບປົກກະຕິ



(ສພຊ)-ໃນວາລະກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດຊຸດທີX ເມື່ອຕອນບ່າຍວັນທີ 23 ມີນາຜ່ານມາ, ທ່ານ ວິໄລວົງ ບຸດດາຄຳ ຮອງປະທານສະພາແຫ່ງຊາດ ໄດ້ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ມີຄຳເຫັນຕໍ່ພາກທິດທາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ໂດຍສະເໜີໃຫ້ລັດຖະບານເອົາໃຈໃສ່ບາງມາດຕະການເພີ່ມຕື່ມດັ່ງນີ້:

1. ເພີ່ມທະວີການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່, ເປັນເຈົ້າຕົນເອງໃນການເຊື່ອມໂຍງເຊື່ອມຈອດ ດ້ວຍການນຳໃຊ້ທ່າແຮງຂອງສູນກາງ ແລະ ທ້ອງຖິ່ນ ເຮັດໃຫ້ເສດຖະກິດມີສະຖຽນລະພາບ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ມີປະສິດທິພາບ, ມີປະສິດທິຜົນ, ມີຈຸດສຸມບຸລິມະສິດ, ສີຂຽວ ແລະ ຍືນຍົງ.

2. ສືບຕໍ່ປະຕິບັດຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ໃຫ້ບັນລຸຕາມແຜນການ ໂດຍສະເພາະສຸມໃສ່ແກ້ໄຂບັນຫາທີ່ເຄັ່ງຮ້ອນດ້ານເສດຖະກິດ-ສັງຄົມໃນປັດຈຸບັນ ເປັນຕົ້ນ:

1) ຄຸ້ມຄອງອັດຕາແລກປ່ຽນ, ຄຸ້ມຄອງລາຄາສິນຄ້າແລະການສະໜອງສິນຄ້າທີ່ຈຳເປັນຕໍ່ການດຳລົງຊີວິດ ໂດຍສະເພາະການສະໜອງນ້ຳມັນເຊື້ອໄຟໃນໄລຍະປັດຈຸບັນ ໃຫ້ສາມາດກັບຄືນສູ່ສະພາບປົກກະຕິ ແລະ ມີມາດຕະການແກ້ໄຂສະພາບການຂາດເຂີນນ້ຳມັນໃນໄລຍະຕໍ່ໜ້າ ໃຫ້ມີຄວາມຍືນຍົງ ເປັນຕົ້ນການຫັນໄປສູ່ການນຳໃຊ້ລົດໄຟຟ້າ;

2) ແກ້ໄຂບັນຫາຂາດຄູ, ຍົກສູງຄຸນນະພາບການຮຽນ-ການສອນ, ສະໜອງອຸປະກອນການຮຽນ-ການສອນ, ຄູສອນໃຫ້ພຽງພໍໃນເຂດຫ່າງໄກສອກຫຼີກ ແລະ ການອຸດໜູນຢ່າງເໝາະສົມຕໍ່ຄູ-ແພດອາສາສະໝັກ; ຮີບຮ້ອນການໂຮມກັນຂອງອົງການປະກັນສັງຄົມແລະຫ້ອງການປະກັນສຸຂະພາບ ໃຫ້ສຳເລັດ; ບໍລິການປິ່ນປົວໃຫ້ມີຄຸນນະພາບ ແລະ ຄຸ້ມຄອງລາຄາໃຫ້ສົມເຫດສົມຜົນ; ຍົກລະດັບສີມືແຮງງານ, ສ້າງວຽກເຮັດງານທຳ ແລະ ຂະຫຍາຍອັດຕາປົກຄຸມຂອງປະກັນສັງຄົມ;

3) ສືບຕໍ່ແກ້ໄຂບັນຫາຢາເສບຕິດ, ກຸ່ມຄຳເຊັນເຕີ, ສະແກມເມີ ແລະ ປາກົດການຫຍໍ້ທໍ້ດ້ານສັງຄົມ.

3. ຮີບຮ້ອນນຳໃຊ້ງົບປະມານໂຄງການລົງທຶນຂອງລັດປະຈຳປີ 2026 ເພື່ອກໍ່ສ້າງ, ບູລະນະ ແລະ ສ້ອມແປງເສັ້ນທາງທີ່ເປ່ເພ ໃຫ້ກັບຄືນສູ່ສະພາບປົກກະຕິໂດຍໄວ; ດຶງດູດການລົງທຶນຂອງທຸກພາກສ່ວນເສດຖະກິດໃນຮູບແບບຕ່າງໆ ເພື່ອກໍ່ສ້າງ ແລະ ບູລະນະພື້ນຖານໂຄງລ່າງ ໃຫ້ມີຄວາມສະດວກ, ຄວບຄຸມນ້ຳໜັກລົດບັນທຸກ ແລະ ມີມາດຕະການຕໍ່ຜູ້ລະເມີດຢ່າງເຂັ້ມງວດ, ຮີບຮ້ອນກໍ່ສ້າງຕາຝັ່ງເຈື່ອນທີ່ເປັນຈຸດລໍ່ແຫຼມ ແລະ ມີການເຊາະເຈື່ອນຢ່າງຮ້າຍແຮງ ໃຫ້ສຳເລັດ.

4. ຈັດສັນເຂດຜະລິດຢ່າງມີຈຸດສຸມ, ລະອຽດ ແລະ ຊັດເຈນ ໃນແຕ່ລະທ້ອງຖິ່ນ; ຊຸກຍູ້ການຜະລິດສະບຽງອາຫານໃຫ້ພຽງພໍຄ້ຳປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ; ຮັບປະກັນການຜະລິດກຸ້ມຕົນເອງທາງດ້ານແນວພັນ, ເຕັກນິກວິທະຍາສາດແລະປັດໄຈການຜະລິດ; ມີສິນຄ້າສົ່ງອອກເພີ່ມຂຶ້ນ, ຫັນຫົວໜ່ວຍການຜະລິດເປັນອຸດສາຫະກຳທັນສະໄໝ, ສ້າງຖານລາຍຮັບໃໝ່, ຍົກສູງຄຸນນະພາບ, ສ້າງມູນຄ່າເພີ່ມ ແລະ ມີຜະລິດຕະພັນຂອງລາວໃຫ້ຫຼາຍຂຶ້ນ; ສົ່ງເສີມການຮ່ວມມືລະຫວ່າງພາກລັດ-ຊາວກະສິກອນ-ວິສາຫະກິດ-ນັກຄົ້ນຄວ້າ-ທະນາຄານ-ຜູ້ຈຳໜ່າຍພາຍໃນ ແລະ ຕ່າງປະເທດ; ສົ່ງເສີມ ແລະ ສ້າງຄ່ານິຍົມໃນການຊົມໃຊ້ຜະລິດຕະພັນພາຍໃນແລະຊຸກຍູ້ການຄ້າພາຍໃນໃຫ້ເປັນຮູບປະທຳ.

5. ຄຸ້ມຄອງ ແລະ ສ້ອມແປງບັນດາໂຄງການຊົນລະປະທານ; ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ພ້ອມທັງມີກົນໄກການສະໜອງສິນເຊື່ອແກ່ຊາວກະສິກອນ ແລະ ຫົວໜ່ວຍທຸລະກິດ ທີ່ຜະລິດຝຸ່ນ, ປຸ໋ຍ, ແນວພັນ, ຢາຂ້າສັດຕູພືດ, ອຸປະກອນ ແລະ ເຄື່ອງມື ເຂົ້າໃນການຜະລິດ, ປຸງແຕ່ງກະສິກຳ, ອຸດສາຫະກຳປຸງແຕ່ງ ທີ່ນຳໃຊ້ວັດຖຸດິບພາຍໃນ ສ້າງມູນຄ່າເພີ່ມ ຈຳໜ່າຍພາຍໃນ, ຫຼຸດຜ່ອນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ ລວມທັງສິນຄ້າເອກະລັກຂອງຊາດ ກໍຄືຂອງແຕ່ລະທ້ອງຖິ່ນ ຄຽງຄູ່ກັບການສະໜອງດ້ານເຕັກນິກວິຊາການ, ຮັບປະກັນການສະໜອງທຶນຢ່າງມີຈຸດສຸມ, ຖືກຕ້ອງກັບນະໂຍບາຍ ແລະ ເປັນກິດຈະການທີ່ຂະແໜງການສົ່ງເສີມ.

6. ສືບຕໍ່ຄົ້ນຄວ້າມີນະໂຍບາຍສົ່ງເສີມດຶງດູດການລົງທຶນເຂົ້າໃນຂະແໜງອຸດສາຫະກຳໃຫ້ຫຼາຍຂຶ້ນ, ຮັບປະກັນການຜະລິດ, ປຸງແຕ່ງສິນຄ້າ ເພື່ອຈຳໜ່າຍພາຍໃນໃຫ້ມີຄວາມພຽງພໍ, ຫຼຸດຜ່ອນການນຳເຂົ້າ ແລະ ຫັນເປັນອຸດສາຫະກຳຄົບວົງຈອນແບບລະບົບຕ່ອງໂສ້ ໂດຍການນຳໃຊ້ວັດຖຸດິບພາຍໃນເຂົ້າໃນການປຸງແຕ່ງ, ສ້າງມູນຄ່າເພີ່ມເພື່ອສົ່ງອອກ ແລະ ຫັນອຸດສາຫະກຳເປັນທັນສະໄໝ.

7. ສືບຕໍ່ນຳໃຊ້ບັນດາເຄື່ອງມື ແລະ ຫັນເປັນທັນສະໄໝ ໃນການເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍ ໃຫ້ເປັນລະບົບຄົບຊຸດ, ລວມສູນ ແລະ ສາມາດເຊື່ອມຕໍ່ກັບທຸກຂະແໜງການ; ເກັບລາຍຮັບຈາກຖານລາຍຮັບທີ່ເປັນທ່າແຮງໃນປັດຈຸບັນ ແລະ ຖານລາຍຮັບທີ່ສ້າງໃໝ່ ໃຫ້ຄົບຖ້ວນ; ສືບຕໍ່ປະຕິຮູບລັດວິສາຫະກິດ ແລະ ທະນາຄານ ໃຫ້ມີປະສິດທິຜົນ, ມີກຳ

ອ່ານຕໍ່ໜ້າ 11

# ເຫັນດີຮັບຮອງດ້ານຫຼັກການແບບມີເງື່ອນໄຂ ໂຄງການທາງລົດໄຟ ຕົວເມືອງທ່າແຂກ-ມູຢ່າ



(ສພຊ) - ວັນທີ 24 ມີນານີ້, ທ່ານ ວິໄລວົງ ບຸດດາຄໍາ ຮອງປະທານສະພາແຫ່ງຊາດ ໄດ້ຕາງໜ້າໃຫ້ຄະນະປະຈໍາສະພາແຫ່ງຊາດ (ຄປຈສພຊ) ປະກອບຄໍາເຫັນຕໍ່ໂຄງການລົງທຶນກໍ່ສ້າງເສັ້ນທາງລົດໄຟ ແຕ່ຕົວເມືອງທ່າແຂກ ແຂວງຄໍາມ່ວນ ຫາ ມູຢ່າຊາຍແດນລາວ-ຫວຽດນາມ ເຊິ່ງ ຄປຈສພຊ ເຫັນດີຮັບຮອງເອົາດ້ານຫຼັກການແບບມີເງື່ອນໄຂ ໂດຍໃຫ້ລັດຖະບານເຈລະຈາແລະເຊັນສັນຍາສໍາປະທານໂຄງການ, ພາຍຫຼັງເຊັນສັນຍາແລ້ວ ຕ້ອງຮ່າງເອກະສານຊ້ອນທ້າຍ 29 ສະບັບ ໃຫ້ສໍາເລັດພາຍໃນ 6 ເດືອນ; ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດໂຄງການມີປະສິດທິພາບ, ປະສິດທິຜົນສູງ ແລະ ຮັບປະກັນຜົນປະໂຫຍດສູງສຸດໃຫ້ແກ່ປະເທດຊາດ ກໍຄືການເກັບລາຍຮັບໃຫ້ລັດຖະບານ, ຈຶ່ງສະເໜີບາງຄໍາເຫັນໃຫ້ລັດຖະບານເອົາໃຈໃສ່ດັ່ງນີ້:

1. ຊີ້ນໍາຄະນະເຈລະຈາ ຫຼື ຄະນະຮັບຜິດຊອບໂຄງການ ກວດກາຄືນຮ່າງສັນຍາສໍາປະທານໃຫ້ລະອຽດ, ຮັດກຸມ, ບໍ່ໃຫ້ລັດພວກເຮົາເສຍປຽບແລະໃຫ້ຖືເອົາພາສາລາວເປັນຫຼັກ ພ້ອມທັງແຕ່ງຕັ້ງຄະນະຮັບຜິດຊອບຄົ້ນຄວ້າເອກະສານຊ້ອນທ້າຍ 29 ສະບັບ ໃຫ້ມີຄວາມຊັດເຈນ, ຮັດກຸມ ແລະ ມີທີ່ປຶກສາທາງດ້ານກົດໝາຍເບື້ອງລັດຖະບານ ໃນການຕີຄວາມໝາຍເນື້ອໃນຮ່າງສັນຍາ ແລະ ເນື້ອໃນເອກະສານທີ່ຕິດພັນກັບສັນຍາສໍາປະທານ ເພື່ອຮັບປະກັນດ້ານເນື້ອໃນໃຫ້ມີຄວາມລະອຽດຈະແຈ້ງ, ຮັດກຸມ ແລະ ສໍາເລັດຕາມເວລາທີ່ກໍານົດ.

2. ການຊົດເຊີຍຜົນກະທົບໃຫ້ແກ່ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ ຕ້ອງມີການສຶກສາ, ເກັບກໍາ ແລະ ປະເມີນຜົນກະທົບຢ່າງລະອຽດຮອບຄອບ ແລະ ຄົບຖ້ວນ ຕໍ່ຜົນກະທົບດ້ານເສດຖະກິດ, ວັດທະນະທໍາ-ສັງຄົມ ແລະ ສິ່ງແວດລ້ອມ; ພ້ອມກັນນັ້ນ, ລາຄາຫົວໜ່ວຍຊົດເຊີຍ ຕ້ອງກໍານົດໃຫ້ລະອຽດ ແລະ ສົມເຫດສົມຜົນ, ບໍ່ໃຫ້ຜູ້ຖືກຜົນກະທົບອັບປະໂຫຍດ ແລະ ບໍ່ໃຫ້ລາຄາຫົວໜ່ວຍຫຼຸດໂຕນກັນຫຼາຍກັບລາຄາຫົວໜ່ວຍຕາມທ້ອງຕະຫຼາດ, ໃຫ້ຈ່າຍຄ່າຊົດເຊີຍສໍາເລັດກ່ອນການຈັດຕັ້ງປະຕິບັດ.

3. ສໍາລັບທາງເຂົ້າ-ອອກ ສະຖານີຂົນສົ່ງໂດຍສານ ແລະ ສິນຄ້າຕ້ອງໄດ້ສຶກສາສໍາຫຼວດ-ອອກແບບ, ກໍ່ສ້າງ ແລະ ຊົດເຊີຍໃຫ້ສໍາເລັດ ຈຶ່ງຈັດຕັ້ງປະຕິບັດ; ຄົ້ນຄວ້າຈຸດຖິ້ມສິ່ງເສດເຫຼືອອອກຈາກເຂດກໍ່ສ້າງ ຫຼື ອຸໂມງ ໃສ່ດິນເປົ່າວ່າງ ຫຼື ດິນປະຊາຊົນຕ້ອງໄດ້ຮັບການຍິນຍອມຈາກເຈົ້າຂອງດິນ ພ້ອມທັງເຮັດບົດບັນທຶກສອງຝ່າຍທີ່ມີພາກລັດເປັນພະຍານຮັບຮູ້.

4. ຊີ້ນໍາກະຊວງການເງິນ ກໍານົດກົນໄກການຄຸ້ມຄອງ ແລະ ຕິດຕາມກວດກາການນໍາເຂົ້າວັດສະດຸ-ອຸປະກອນ, ພາຫະນະກົນຈັກ ແລະ ສິນຄ້າອື່ນ ທີ່ນໍາເຂົ້າຊົ່ວຄາວຢ່າງເຄັ່ງຄັດ ເພື່ອບໍ່ໃຫ້ມີການສວຍໃຊ້ໂອກາດ ແລະ ເປັນຊ່ອງວ່າງ ນໍາໄປໃຊ້ເຂົ້າໃນເປົ້າໝາຍອື່ນຢ່າງບໍ່ຖືກຕ້ອງ; ພາຍຫຼັງກໍ່ສ້າງສໍາເລັດ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຢ່າງເຂັ້ມງວດ ໂດຍກໍານົດໃຫ້ເປັນພັນທະຂອງຜູ້ທີ່ໄດ້ຮັບສໍາປະທານຮັບຜິດຊອບໂດຍກົງ ແລະ ກໍານົດໃຫ້ເປັນໜ້າທີ່ຂອງຜູ້ຕາງໜ້າລັດຖະບານ (ຫົວໜ້າໂຄງການ) ຕິດຕາມກວດກາຢ່າງເຂັ້ມງວດ (ບໍ່ປ່ອຍປະໃຫ້ພາຫະນະນໍາເຂົ້າຊົ່ວຄາວ ຖືກນໍາໃຊ້ຜິດກົດໝາຍອີກ).

5. ຄົ້ນຄວ້າພິຈາລະນາແບ່ງຄວາມຮັບຜິດຊອບໃຫ້ອົງການປົກຄອງທ້ອງຖິ່ນ ເປັນເຈົ້າການໃນການຄຸ້ມຄອງ, ຕິດຕາມກວດກາໃນໄລຍະກໍ່ສ້າງ ພ້ອມທັງມີກົນໄກການປະສານງານພາຍໃນຂະແໜງການດຽວກັນ ຫຼື ຂະແໜງການທີ່ກ່ຽວຂ້ອງລະຫວ່າງຂັ້ນສູນກາງແລະທ້ອງຖິ່ນ ໃຫ້ມີຄວາມກົມກຽວໄປລວງດຽວກັນ, ຫຼີກລ່ຽງການຖິ້ມຄວາມຮັບຜິດຊອບ.

6. ການຄົ້ນຄວ້າເນື້ອໃນຮ່າງສັນຍາຄວນມີຫຼາຍພາກສ່ວນເຂົ້າຮ່ວມແຕ່ຫົວທີ ເປັນຕົ້ນກໍາມາທິການກ່ຽວຂ້ອງຂອງສະພາແຫ່ງຊາດ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ອົງການໄອຍະການປະຊາຊົນສູງສຸດ; ພ້ອມກັນນັ້ນ, ຕ້ອງກໍານົດເອົາໂຄງການນີ້ ເປັນໂຄງການເປົ້າໝາຍຕິດຕາມກວດກາເລີ່ມແຕ່ຫົວທີ ເພື່ອຮັບປະກັນຄວາມຖືກຕ້ອງ, ໂປ່ງໃສ ແລະ ກວດສອບໄດ້.

7. ຄົ້ນຄວ້ານະໂຍບາຍແຮງງານ ເພື່ອດຶງດູດແຮງງານລາວເຂົ້າຮັບໃຊ້ໂຄງການດັ່ງກ່າວ ເພື່ອຫຼຸດຜ່ອນໄປອອກແຮງງານຢູ່ຕ່າງປະເທດ.



# ໄລຍະ 5 ປີ ການຂໍອຸທອນຄະດີ ບໍ່ໃຫ້ເກີນ 15%



(ສພຊ) - ວັນທີ 24 ມີນາຜ່ານມາ, ທ່ານ ໄພວີ ສີບົວລິພາ ປະທານສານປະຊາຊົນສູງສຸດໄດ້ລາຍງານແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສານປະຊາຊົນ ຕໍ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ເຊິ່ງມີ 5 ຄາດໝາຍສູ້ຊົນຄື:

1. ສ້າງຜູ້ພິພາກສາ, ພະນັກງານຂອງສານ ມີຄຸນທາດການເມືອງ, ຄຸນສົມບັດສິນທໍາປະຕິວັດ, ມີຈັນຍາບັນ-ຈັນຍາທໍາ, ສ້າງເປັນມືອາຊີບສະເພາະດ້ານ, ສ້າງຜູ້ພິພາກສາດີ-ເກັ່ງໃຫ້ໄດ້ຫຼາຍກວ່າ 85%.

2. ຂະຫຍາຍການຈັດຕັ້ງສານປະຊາຊົນເຂດ ໃຫ້ໄດ້ຢ່າງໜ້ອຍ 5 ແຫ່ງ (ເຂດ 4 ແຂວງຈໍາປາສັກ, ເຂດ 6 ແຂວງສະຫວັນນະເຂດ, ເຂດ 3 ແຂວງຄໍາມ່ວນ, ເຂດ 4 ແຂວງຫົວພັນ ແລະ ເຂດ 3 ແຂວງຫຼວງນໍ້າທາ) ທັງປັບປຸງກົງຈັກການຈັດຕັ້ງໃຫ້ກະທັດຮັດ, ເປັນລະບົບຄົບຊຸດ, ໜັກແໜ້ນເຂັ້ມແຂງ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ.

3. ສ້າງກົນໄກການບໍລິຫານຄະດີແບບໃໝ່ ເຮັດໃຫ້ມີຄວາມໂປ່ງໃສທຸກຂັ້ນຕອນໃນການດໍາເນີນຄະດີຢູ່ສານເພື່ອຮັບປະກັນໃຫ້ການພິຈາລະນາແກ້ໄຂຄະດີມີຄວາມວ່ອງໄວ ບັນລຸຕາມມະຕິສະພາແຫ່ງຊາດກໍານົດຄື: ຄະດີແພ່ງ-ການຄ້າ 76% ຂຶ້ນໄປ, ຄະດີຄອບຄົວ-ເດັກ-ແຮງງານ ແລະ ປົກຄອງ 85% ຂຶ້ນໄປ ແລະ ຄະດີອາຍາ 90% ຂຶ້ນໄປ ທັງຮັບປະກັນຄຸນນະພາບ, ອັດຕາການຂໍອຸທອນແຕ່ລະປະເພດຄະດີບໍ່ໃຫ້ເກີນ 15% ແລະ ຄວາມພໍໃຈຂອງຄູ່ຄວາມຕໍ່ກັບການຕັດສິນ, ພິພາກສາ ແລະ ນໍາໄປຈັດຕັ້ງປະຕິບັດໃຫ້ຫຼາຍຂຶ້ນເພື່ອເຮັດໃຫ້ການຂໍລົບລ້າງຫຼຸດລົງໃນແຕ່ລະປີ.

4. ສ້າງ ແລະ ປັບປຸງກົດໝາຍທີ່ຢູ່ໃນຄວາມຮັບຜິດຊອບໃຫ້ສໍາເລັດ 4 ສະບັບ (ກົດໝາຍວ່າດ້ວຍການດໍາເນີນຄະດີເດັກ, ກົດໝາຍວ່າດ້ວຍຄ່າທໍານຽມສານ, ກົດໝາຍວ່າດ້ວຍການດໍາເນີນຄະດີປົກຄອງ ແລະ ກົດໝາຍວ່າດ້ວຍສານປະຊາຊົນ) ຕາມແຜນການສ້າງ ແລະ ປັບປຸງກົດໝາຍທີ່ສະພາແຫ່ງຊາດຮັບຮອງ ແລະ ອອກນິຕິກໍາໃຕ້ກົດໝາຍໃຫ້ໄດ້ຢ່າງໜ້ອຍປີລະ 10 ສະບັບ.

5. ສືບຕໍ່ຄົ້ນຄວ້າກົນໄກການບໍລິຫານສານ ໃຫ້ມີຄຸນນະພາບ ແລະ ເຂົ້າສູ່ທັນສະໄໝ, ສ້າງພື້ນຖານໂຄງລ່າງຂອງສານປະຊາຊົນແຕ່ລະຂັ້ນ ໃຫ້ຮອງຮັບການປະຕິບັດພາລະບົດບາດຂອງອົງການຕຸລາການ ຕາມທີ່ກົດໝາຍກໍານົດໄວ້.

# ຮັບຮອງເອົາສະມາຊິກສະພາຜູ້ພິພາກສາ



(ສພຊ)-ໃນວາລະຕອນບ່າຍວັນທີ 24 ມີນາຜ່ານມາ, ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ໄດ້ຮັບຮອງເອົາການສະເໜີແຕ່ງຕັ້ງສະມາຊິກສະພາຜູ້ພິພາກສາຂອງສານປະຊາຊົນສູງສຸດ 15 ທ່ານ ດັ່ງນີ້:

1. ທ່ານ ໄພວີ ສີບົວລິພາ ປະທານສານປະຊາຊົນສູງສຸດ;

2. ທ່ານ ບຸນຂວາງ ທະວີສັກ ຮອງປະທານສານປະຊາຊົນສູງສຸດ;

3. ທ່ານ ປອ. ອານົງ ຍອຍສາຍຄໍາ ຮອງປະທານສານປະຊາຊົນສູງສຸດ;

4. ທ່ານ ຊຸນສຸວັນ ສຸທໍາມະວົງ ຮອງປະທານສານປະຊາຊົນສູງສຸດ;

5. ທ່ານ ພັອ. ວັນ ສີເຟືອງ ຜູ້ພິພາກສາຊັ້ນສີ່, ຮອງປະທານສານປະຊາຊົນສູງສຸດ;

6. ທ່ານ ສົມຈິດ ແກ້ວມະນີໄລ ຜູ້ພິພາກສາຊັ້ນສີ່, ຫົວໜ້າຄະນະສານອາຍາ;

7. ທ່ານ ນາງ ທັນສະໄໝ ຊາມຸນຕີ ຜູ້ພິພາກສາຊັ້ນສີ່, ຫົວໜ້າຄະນະສານຄອບຄົວ;

8. ທ່ານ ນາງ ຈັນຖະໜອມ ສີລິວັດ ຜູ້ພິພາກສາຊັ້ນສີ່, ຫົວໜ້າຄະນະສານການຄ້າ;

9. ທ່ານ ແສງສຸວັນ ຈັນທະລຸນນະວົງ ຜູ້ພິພາກສາຊັ້ນສີ່, ຫົວໜ້າກົມຄຸ້ມຄອງວິຊາການ ແລະ ສະຖິຕິສານ;

10. ທ່ານ ໄຊສົມພອນ ເພັດຊົມພູ ຜູ້ພິພາກສາຊັ້ນສີ່, ຫົວໜ້າສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມ;

11. ທ່ານ ຈິດຕາວັນ ວົງໄຊ ຜູ້ພິພາກສາຊັ້ນສີ່, ຮັກສາການຫົວໜ້າຄະນະສານແຮງງານ;

12. ທ່ານ ນາລີສອນ ສາຍສຸລິຍາ ຜູ້ພິພາກສາຊັ້ນສີ່, ຮັກສາການຫົວໜ້າຄະນະສານແພ່ງ;

13. ທ່ານ ສັກກຸນາ ຍະພິຈິດ ຜູ້ພິພາກສາຊັ້ນສີ່, ຮັກສາການຫົວໜ້າຄະນະສານປົກຄອງ;

14. ທ່ານ ນາງ ຈອມພັນ ຈັນທະວີ ຜູ້ພິພາກສາຊັ້ນສີ່, ຮອງຫົວໜ້າຄະນະສານອາຍາ;

15. ທ່ານ ສີວັນ ບຸນທະລາ ຜູ້ພິພາກສາຊັ້ນສີ່, ຮອງຫົວໜ້າຄະນະສານການຄ້າ.

ສະພາຜູ້ພິພາກສາ ແມ່ນຄະນະນໍາຂອງສານປະຊາຊົນສູງສຸດ ເຊິ່ງປະກອບດ້ວຍປະທານ, ບັນດາຮອງປະທານ, ບັນດາຫົວໜ້າຄະນະສານ ແລະ ຜູ້ພິພາກສາຈໍານວນໜຶ່ງຂອງສານປະຊາ

ອ່ານຕໍ່ໜ້າ 12

# ມອບ-ຮັບໜ້າທີ່ປະທານກຳມາທິການ



(ສພຊ) - ຕອນແລງວັນທີ 25 ມີນາຜ່ານມາ ໄດ້ມີພິທີມອບ-ຮັບໜ້າທີ່ລະຫວ່າງທ່ານ ນາງ ປິ່ງຄຳ ລາຊະສິມມາ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີແລະສິ່ງແວດລ້ອມ ແລະ ທ່ານ ລີເບີ ລີບີ່ວປາວ ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ກັບ ທ່ານ ຈັນທະບູນ ສຸກອາລຸນປະທານກຳມາທິການເສດຖະກິດແລະການເງິນຂອງສະພາແຫ່ງຊາດ ຊຸດທີ X ໂດຍມີທ່ານ ວິໄລວົງ ບຸດດາຄຳ ຮອງປະທານສະພາແຫ່ງຊາດ, ບັນດາທ່ານຄະນະປະຈຳສະພາແຫ່ງຊາດ ແລະຮອງປະທານກຳມາທິການ ສພຊ ຊຸດທີ IX ແລະ ຊຸດທີ X ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.

ໃນພິທີ, ໄດ້ຮັບຟັງການຜ່ານລັດຖະດຳລັດຂອງປະທານປະເທດ ແຫ່ງ ສປປລາວ ສະບັບເລກທີ 021/ປປທ, ລົງວັນທີ 16 ກຸມພາ 2026 ວ່າດ້ວຍການແຕ່ງຕັ້ງຮອງປະທານອົງການກວດກາແຫ່ງລັດ ແລະ ຮອງຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ, ລັດຖະດຳລັດຂອງປະທານປະເທດແຫ່ງ ສປປລາວ ສະບັບເລກທີ 038/ປປທ, ລົງວັນທີ 16 ມີນາ 2026 ວ່າດ້ວຍການແຕ່ງຕັ້ງປະທານສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ ແລະ ຜົນການຮັບຮອງເອົາການເລືອກຕັ້ງປະທານກຳມາທິການກໍຄືກຳມະການຄະນະປະຈຳສະພາແຫ່ງຊາດ ຊຸດທີ X ຄັ້ງວັນທີ 23 ມີນາ 2026; ຫຼັງຈາກນັ້ນ, ກໍໄດ້ເຊັນບົດບັນທຶກມອບ-ຮັບໜ້າທີ່ລະຫວ່າງປະທານກຳມາທິການຜູ້ເກົ່າ ແລະ ຜູ້ໃໝ່.

ໃນຕອນທ້າຍ, ທ່ານ ວິໄລວົງ ບຸດດາຄຳ ມີຄຳເຫັນວ່າ: ການມອບ-ຮັບໜ້າທີ່ຄັ້ງນີ້ແມ່ນການສືບຕໍ່ປັບປຸງສັບຊ້ອນບຸກຄະລາກອນເຂົ້າໃນຕຳແໜ່ງສຳຄັນຂອງກົງຈັກລັດ ເພື່ອຮັບປະກັນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ, ການຈັດຕັ້ງປະຕິບັດມະຕິກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ທີ່ໄດ້ຮັບຮອງເອົາການແຕ່ງຕັ້ງຜ່ານມານີ້ເຂົ້າໃນການເຄື່ອນໄຫວວຽກງານຂອງກົງຈັກລັດ ໂດຍສະເພາະແມ່ນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ໃຫ້ໄດ້ຮັບຜົນສຳເລັດ, ນຳຜົນປະໂຫຍດມາສູ່ປະເທດຊາດ ແລະ ປະຊາຊົນລາວບັນດາເຜົ່າ; ພ້ອມນັ້ນ, ທ່ານຍັງສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານຜົນສຳເລັດທີ່ທັງສອງກຳມາທິການຂອງ ສພຊ ຊຸດທີ IX ຍາດມາໄດ້ໃນໄລຍະ 5 ປີຜ່ານມາ.

**(ນາງ ສຸພາວັນ ທອມສະນິດ)**

# ຈະດຳເນີນການກວດສອບໃຫ້ບັນລຸ 620 ເທື່ອເປົ້າໝາຍ

(ສພຊ) - ຕອນບ່າຍວັນທີ 25 ມີນາຜ່ານມາ, ທ່ານ ວຽງທະວີສອນ ເທບພະຈັນ ປະທານອົງການກວດສອບແຫ່ງລັດ ໄດ້ລາຍງານແຜນການເຄື່ອນໄຫວວຽກງານຂອງອົງການກວດສອບແຫ່ງລັດ 5 ປີ (2026-2030) ຕໍ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ເຊິ່ງມີ 8 ຄາດໝາຍສູ້ຊົນດັ່ງນີ້:



1. ປັບປຸງກົດໝາຍວ່າດ້ວຍການກວດສອບແຫ່ງລັດໃຫ້ສອດຄ່ອງກັບລັດຖະທຳມະນູນສະບັບປັບປຸງປີ 2025.

2. ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍທີ່ສຳຄັນ ໃຫ້ໄດ້ຢ່າງໜ້ອຍ 7 ສະບັບ, ໃນນັ້ນ: ສ້າງໃໝ່ 5 ສະບັບ ແລະ ປັບປຸງ 2 ສະບັບ.

3. ດຳເນີນການກວດສອບໃຫ້ບັນລຸ 620 ເທື່ອເປົ້າໝາຍ, ໃນນັ້ນ: ຂົງເຂດງົບປະມານ 151 ເທື່ອເປົ້າໝາຍ, ຂົງເຂດໂຄງການເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າ 92 ເທື່ອເປົ້າໝາຍ, ຂົງເຂດໂຄງການລົງທຶນຂອງລັດ 50 ເທື່ອເປົ້າໝາຍ, ຂົງເຂດທະນາຄານ 34 ເທື່ອເປົ້າໝາຍ, ຂົງເຂດວິສາຫະກິດ 74 ເທື່ອເປົ້າໝາຍ ແລະ ຫົວຂໍ້ສະເພາະ 219 ເທື່ອເປົ້າໝາຍ.

4. ລົງເຄື່ອນໄຫວຕິດຕາມ, ຊຸກຍູ້ການແກ້ໄຂຜົນການກວດສອບ ໃຫ້ກວມເອົາ 80% ຂອງຈຳນວນເປົ້າໝາຍທີ່ດຳເນີນການກວດສອບສຳເລັດໃນແຕ່ລະປີ.

5. ລາຍງານຜົນການກວດສອບປະຈຳປີຕໍ່ຄະນະປະຈຳສະພາແຫ່ງຊາດ 5 ຄັ້ງ (5 ບົດ) ແລະ ລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ 5 ຄັ້ງ (5 ບົດ).

6. ບຳລຸງກໍ່ສ້າງພະນັກງານກວດສອບຕາມມາດຕະຖານເງື່ອນໄຂຂອງນັກກວດສອບແຫ່ງລັດ ໃຫ້ໄດ້ 220 ຄົນ, ໃນນັ້ນ: ນັກກວດສອບ ຂັ້ນ 1 ຈຳນວນ 170 ຄົນ, ນັກກວດສອບຂັ້ນ 2 ຈຳນວນ 50 ຄົນ ແລະ ກະກຽມຄວາມພ້ອມໃນການກໍ່ສ້າງນັກກວດສອບ ຂັ້ນ 3 ໃຫ້ສຳເລັດ.

7. ກໍ່ສ້າງພະນັກງານນຳພາ-ຄຸ້ມຄອງ ໃຫ້ໄປຍົກລະດັບທິດສະດີການເມືອງ ໃຫ້ໄດ້ 25 ຄົນ.

8. ເຝິກອົບຮົມການນຳໃຊ້ລະບົບ E-Audit ໃຫ້ພະນັກງານກວດສອບ ໃຫ້ໄດ້ 70 ຄົນ, ສ້າງຄູເຝິກ ໃຫ້ໄດ້ 10 ຄົນ, ເຝິກອົບຮົມການນຳໃຊ້ປັນຍາປະດິດ (AI) ໃຫ້ພະນັກງານ-ນັກກວດສອບແຫ່ງລັດ ໃຫ້ໄດ້ 200 ຄົນ.

## 5 ຄາດໝາຍ..

(ຕໍ່ຈາກໜ້າ 1)

ນາຢ່າງມີຄຸນນະພາບ ແລະ ໂລ່ງລຽນ, ພາຍໃຕ້ຄຳຂວັນ "ຍົກສູງຈິດໃຈມຸ່ງໝັ້ນພັດທະນາຢ່າງແຮງກ້າ, ຕັ້ງໜ້າສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ, ນຳໃຊ້ທຸກທ່າແຮງຢ່າງມີປະສິດທິຜົນ, ພັດທະນາເສດຖະກິດ-ສັງຄົມຕາມທິດວ່ອງໄວ, ສີຂຽວ ແລະ ຍືນຍົງ" ທີ່ມີ 5 ຄາດໝາຍຕົ້ນຕໍດັ່ງນີ້:

1. ຄາດໝາຍດ້ານເສດຖະກິດ

- ສູ້ຊົນໃຫ້ GDP ຂະຫຍາຍຕົວສະເລ່ຍ 6% ຕໍ່ປີຂຶ້ນໄປ;

- GDP ຕໍ່ຫົວຄົນ ໃຫ້ໄດ້ 3,104 ໂດລາ ແລະ GNI ຕໍ່ຫົວຄົນ ໃຫ້ໄດ້ 2,914 ໂດລາ ໃນປີ 2030;

- ສູ້ຊົນເກັບລາຍຮັບງົບປະມານແຫ່ງລັດໃຫ້ໄດ້ 554,400 ຕື້ກີບ ເທົ່າກັບ 20.95% ຂອງ GDP ຂຶ້ນໄປ, ລາຍຈ່າຍງົບປະມານຢູ່ໃນລະດັບ 528,400 ຕື້ກີບ ເທົ່າກັບ 19.96% ຂອງ GDP ແລະ ເກີນດຸນງົບປະມານ 26 ພັນຕື້ກີບ ເທົ່າກັບ 0.98% ຂອງ GDP;

- ສູ້ຊົນຫຼຸດຜ່ອນໜີ້ສິນສາທາລະນະໃຫ້ຢູ່ໃນລະດັບຕໍ່າກວ່າ 70% ຂອງ GDP;

- ຮັບປະກັນສະຖຽນລະພາບດ້ານເງິນຕາ ໂດຍຄວບຄຸມອັດຕາເງິນເຟີ້ໃຫ້ຢູ່ໃນລະດັບບໍ່ເກີນ 5% (±2%), ຄັງສຳຮອງເງິນຕາຕ່າງປະເທດ ໃຫ້ສາມາດກຸ້ມການນຳເຂົ້າ 5 ເດືອນຂຶ້ນໄປ, ຄຸ້ມຄອງການສົ່ງອອກ-ນຳເຂົ້າຜ່ານລະບົບທະນາຄານ ແລະ ນຳເງິນຕາຕ່າງປະເທດຈາກການສົ່ງອອກເຂົ້າມາ ໃຫ້ໄດ້ຢ່າງໜ້ອຍ 75%;

- ສູ້ຊົນລະດົມການລົງທຶນໃຫ້ໄດ້ 636,178 ຕື້ກີບ ເທົ່າກັບ 24% ຂອງ GDP ຂຶ້ນໄປ;

- ສູ້ຊົນການຜະລິດເຂົ້າໃຫ້ໄດ້ 4 ລ້ານໂຕນຕໍ່ປີ, ການສົ່ງອອກຜະລິດຕະພັນກະສິກຳ ແລະ ປ່າໄມ້ ໃຫ້ໄດ້ 1.9 ຕື້ໂດລາຕໍ່ປີ;

- ດຶງດູດນັກທ່ອງທ່ຽວຕ່າງປະເທດໃຫ້ໄດ້ 22 ລ້ານເທື່ອຄົນ ສ້າງລາຍຮັບປະມານ 8 ຕື້ໂດລາ;

- ສູ້ຊົນຜະລິດກະແສໄຟຟ້າໃຫ້ໄດ້ 333,562.60 ລ້ານກິໂລວັດໂມງ;

- ມູນຄ່າການຜະລິດ ແລະ ປຸງແຕ່ງແຮ່ທາດ ໃຫ້ໄດ້ 284,432.8 ຕື້ກີບ.

2. ຄາດໝາຍດ້ານວັດທະນະທຳ-ສັງຄົມ

- ສູ້ຊົນເຮັດໃຫ້ອັດຕາເຂົ້າຮຽນຂອງເດັກອາຍຸ 5 ປີ ບັນລຸໄດ້ 90%, ອັດຕາປະລະການຮຽນຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນ ບໍ່ໃຫ້ເກີນ 8%;

- ຈຳນວນນັກສຶກສາທີ່ຮຽນຈົບອາຊີວະສຶກສາ ແລະ ອົບຮົມວິຊາຊີບຕາມຫຼັກສູດທາງການ ໃຫ້ບັນລຸ 50 ພັນຄົນ;

- ສູ້ຊົນເຮັດໃຫ້ອັດຕາການຕາຍຂອງເດັກນ້ອຍເກີດໃໝ່ ໃຫ້ຕໍ່າກວ່າ 10/1,000 ຄົນເດັກນ້ອຍເກີດມີຊີວິດ, ອັດຕາການຕາຍຂອງເດັກນ້ອຍລຸ່ມ 5 ປີ ໃຫ້ຕໍ່າກວ່າ 25/1,000 ຄົນເດັກນ້ອຍເກີດມີຊີວິດ;

- ສູ້ຊົນພັດທະນາສີມືແຮງງານໃຫ້ໄດ້ 650 ພັນຄົນ ແລະ ການຈັດຫາວຽກເຮັດງານທຳເຂົ້າສູ່ຕະຫຼາດແຮງງານພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ 411 ພັນຄົນ;

- ສູ້ຊົນເຮັດໃຫ້ອັດຕາຄວາມທຸກຍາກຫຼຸດລົງຍັງເຫຼືອໜຶ່ງຕົວເລກ, ສ້າງຄອບຄົວພົ້ນທຸກໃຫ້ໄດ້ຫຼາຍກວ່າ 1 ແສນຄອບຄົວ;

- ຫຼຸດຜ່ອນອັດຕາເດັກນ້ອຍລຸ່ມ 5 ປີ ທີ່ຂາດສານອາຫານກະທັນຫັນ ໃຫ້ຍັງເຫຼືອ 5% ຂອງປະຊາກອນເປົ້າໝາຍ;

- ສູ້ຊົນສະເໜີແຫຼ່ງມໍລະດົກອຸທິຍານແຫ່ງຊາດ ນາກາຍ-ນໍ້າເທີນ ໃຫ້ເປັນມໍລະດົກໂລກ, ເສົາຫີນຕັ້ງ ແຂວງຫົວພັນ ແລະ ທາດອິງຮັງ ເຂົ້າບັນຊີສຳຮອງມໍລະດົກໂລກ ໂດຍອົງການອຸຍແນັສໂກ ແລະ ສູ້ຊົນສະເໜີ "ລາບ, ພິທີສູ່ຂວັນ, ປູ່ເຍີຍ່າເຍີ, ບຸນປີໃໝ່ລາວ, ເຂົ້າຕົ້ມ-ເຂົ້າຫຼາມ" ເຂົ້າເປັນມໍລະດົກວັດທະນະທຳນາມມະທຳຂອງມວນມະນຸດ.

3. ຄາດໝາຍດ້ານສິ່ງແວດລ້ອມ:

- ສູ້ຊົນເຮັດໃຫ້ເນື້ອທີ່ປົກຫຸ້ມປ່າໄມ້ ບັນລຸ 65% ຂອງເນື້ອທີ່ດິນທົ່ວປະເທດ;

-ສູ້ຊົນຂຶ້ນທະບຽນອອກໃບຕາດິນຢູ່ນອກເຂດທີ່ດິນປ່າໄມ້ທີ່ຍັງບໍ່ທັນສຳເລັດ ໃຫ້ໄດ້ 150 ພັນຕອນ;

- ຫຼຸດຜ່ອນການປ່ອຍ ແລະ ເພີ່ມການດູດຊັບທາດອາຍເຮືອນແກ້ວ ໃຫ້ໄດ້ 60% ທຽບໃສ່ລະດັບການປ່ອຍປົກກະຕິ;

- ອັດຕາການນຳໃຊ້ພະລັງງານສະອາດໃນພາຫະນະຂົນສົ່ງ ໃຫ້ໄດ້ຢ່າງໜ້ອຍ 30% ຂອງພະຫະນະທັງໝົດ;

- ຂະຫຍາຍຕາໜ່າງສະຖານີອຸຕຸນິຍົມຢູ່ບັນດາເມືອງທີ່ຍັງບໍ່ທັນມີ ໃຫ້ໄດ້ 35 ແຫ່ງ, ຂະຫຍາຍຕາໜ່າງສະຖານີອຸທົກກະສາດໃນເຂດທີ່ມີຄວາມສ່ຽງໄພນໍ້າຖ້ວມ ໃຫ້ໄດ້ 25 ແຫ່ງ.

4. ຄາດໝາຍດ້ານການຮ່ວມມື ແລະ ເຊື່ອມໂຍງກັບສາກົນ

- ກໍ່ສ້າງ, ປັບປຸງ ແລະ ຍົກລະດັບເສັ້ນທາງຫຼວງແຫ່ງຊາດ ທີ່ເປັນເສັ້ນທາງຫຼວງອາຊຽນຕາມແລວເສດຖະກິດ ໃຫ້ສາມາດຮັບນໍ້າໜັກລົດບັນທຸກໄດ້ 11 ໂຕນ/ເພົາ ໃຫ້ໄດ້ 1,450 ກມ (ໃນນັ້ນ ສູ້ຊົນໃຫ້ພາກເອກະຊົນເຂົ້າມີສ່ວນຮ່ວມດ້ວຍຮູບແບບ OBPRC ໃຫ້ໄດ້ 1 ພັນ ກມ);

- ຫຼຸດຜ່ອນເວລາການອອກອະນຸຍາດ, ຢັ້ງຢືນການນຳເຂົ້າ ແລະ ສົ່ງອອກສິນຄ້າ ໃຫ້ໄດ້ 40% ໃນປີ 2030 ແລະ ສົ່ງອອກສິນຄ້າພາຍໃຕ້ສິດທິພິເສດທາງການຄ້າ ໃຫ້ກວມເອົາ 45% ຂອງມູນຄ່າການສົ່ງອອກທັງໝົດ.

5. ຄາດໝາຍດ້ານການປົກຄອງ, ການບໍລິຫານລັດແລະວຽກງານຍຸຕິທຳ

- ສູ້ຊົນສ້າງແຂວງເປັນຫົວໜ່ວຍຍຸດທະສາດ ໃຫ້ໄດ້ 3 ແຂວງ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ໃຫ້ໄດ້ 18 ເມືອງ ແລະ ສ້າງຕັ້ງຕາແສງ ໃຫ້ໄດ້ 617 ຕາແສງ;

- ສູ້ຊົນສ້າງຕັ້ງສູນບໍລິການຜ່ານປະຕູດຽວ ຢ່າງໜ້ອຍໃຫ້ໄດ້ 35 ສູນ;

- ສູ້ຊົນຕັດສິນຄະດີອາຍາ ໃຫ້ໄດ້ 90% ຂຶ້ນໄປ ແລະ ຄະດີແພ່ງ 75% ຂຶ້ນໄປ ຂອງຄະດີທັງໝົດ.

# ໄອຍະການປະຊາຊົນ ຈະແກ້ໄຂຄະດີໃຫ້ບັນລຸ 95%



(ສພຊ) - ຕອນບ່າຍວັນທີ 24 ມີນາຜ່ານມາ, ທ່ານ ພົຈວ. ນາງ ລິວົງ ລາວລີ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ໄດ້ລາຍງານແຜນການເຄື່ອນໄຫວວຽກງານໄອຍະການປະຊາຊົນ 5 ປີ (2026-2030) ຕໍ່ກອງປະຊຸມສະໄໝສາມັນຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ເຊິ່ງມີ 6 ຄາດໝາຍສູ້ຊົນຄື:

1. ຍົກສູງຄຸນນະພາບການຕິດຕາມກວດກາການເຄົາລົບ, ປະຕິບັດກົດໝາຍ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານ ໃຫ້ບັນລຸ 95% ຂຶ້ນໄປ ຂອງການຄົ້ນຄວ້າແກ້ໄຂຄະດີ ແລະ ໃຫ້ບັນລຸ 95% ທີ່ສານຕັດສິນເອົາຕາມຄຳຖະແຫຼງຂອງໄອຍະການ.

2. ປັບປຸງກົງຈັກການຈັດຕັ້ງຂອງອົງການໄອຍະການປະຊາຊົນ ແລະ ອົງການໄອຍະການທະຫານຂັ້ນຕ່າງໆ ໃຫ້ເຂັ້ມແຂງ, ໜັກແໜ້ນ, ສາມາດປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ໃຫ້ມີປະສິດທິພາບສູງຂຶ້ນ.

3. ຖັນແຖວພະນັກງານໄອຍະການປະຊາຊົນ ແລະ ໄອຍະການທະຫານທຸກລະດັບ ໄດ້ຮັບການພັດທະນາທັງທາງດ້ານຈຳນວນ ແລະ ຄຸນນະພາບເປັນກ້າວໆ ໂດຍຖືສຳຄັນທາງດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຈັນຍາບັນ, ຈັນຍາທຳ ໄປຄຽງຄູ່ກັບຍົກລະດັບຄວາມຮູ້ຄວາມສາມາດດ້ານວິຊາສະເພາະ, ພາສາຕ່າງປະເທດ ແລະດ້ານອື່ນທີ່ເຫັນວ່າມີຄວາມຈຳເປັນ, ແລະ ຕ້ອງໄດ້ຮັບການປະເມີນການປະຕິບັດໜ້າທີ່ວຽກງານໃນແຕ່ລະປີ.

4. ຄົ້ນຄວ້າ, ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່.

5. ປັບປຸງກົນໄກ ແລະ ວິທີການ ໃນການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ, ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ, ການປະຕິບັດພາລະບົດບາດຕິດຕາມກວດກາການປະຕິບັດກົດໝາຍ ແລະ ການໂຕ້ຖຽງໃນທີ່ປະຊຸມສານ, ການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ, ການປະຕິບັດຄຳຕັດສິນຂອງສານ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ຮັບປະກັນໃຫ້ວຽກງານດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດໄປຕາມຂັ້ນຕອນທີ່ກົດໝາຍກຳນົດໄວ້.

6. ເພີ່ມທະວີການຈັດຕັ້ງປະຕິບັດກົນໄກການປະສານງານຮ່ວມກັບພາກສ່ວນກ່ຽວຂ້ອງ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານຂອງອົງການໄອຍະການປະຊາຊົນ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຮັບປະກັນຄວາມຮັບຜິດຊອບການເມືອງໃຫ້ສູງຂຶ້ນ.

## ບາງຂໍ້ສະເໜີ...

(ຕໍ່ຈາກໜ້າ 2)

ເພື່ອໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກວດກາ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

2) ຊຸກຍູ້ແກ້ໄຂຜົນກວດກາຢ່າງຈິງຈັງ, ການເປັນເຈົ້າການໃນການເຂົ້າຮ່ວມແກ້ໄຂຜົນການກວດກາຢ່າງແຂງແຮງ ແລະ ການເກັບກູ້ຄືນລາຍຮັບກວດກາເຫັນທີ່ຍັງຄ້າງໃນໄລຍະຜ່ານມາ ໃຫ້ສຳເລັດຕາມແຜນ.

3) ປະສານສົມທົບກັບເປົ້າໝາຍຖືກກວດກາ, ໄຈ້ແຍກລາຍຮັບ, ໜີ້ຕ້ອງຮັບ ທີ່ກວດກາເຫັນໄລຍະຜ່ານມາ ອັນໃດສາມາດເກັບກູ້ໄດ້ ແລະ ອັນໃດບໍ່ສາມາດເກັບກູ້ຄືນໄດ້, ມີຕົວຕົນ ຫຼື ບໍ່ມີຕົວຕົນ ເພື່ອສະເໜີສະພາແຫ່ງຊາດ ພິຈາລະນາ.

4) ກໍ່ສ້າງພະນັກງານ-ນັກກວດກາ ໃຫ້ຍົກສູງຄຸນທາດການເມືອງ, ຈັນຍາບັນ-ຈັນຍາທຳ, ເປັນມືອາຊີບ, ນຳໃຊ້ອຸປະກອນ, ເຄື່ອງມື ແລະ ເຕັກໂນໂລຊີທີ່ທັນສະໄໝ ເພື່ອສ້າງຄວາມເຊື່ອໝັ້ນ ແລະ ຮັບປະກັນຄຸນນະພາບວຽກກວດກາ.

5) ຫັນວຽກງານກວດກາເປັນທັນສະໄໝ ເພື່ອໃຫ້ການກວດກາມີຄວາມວ່ອງໄວ, ໂປ່ງໃສ, ສາມາດກວດກາໄດ້ ແລະ ຮັບປະກັນຄວາມຖືກຕ້ອງຕາມກົດໝາຍ.

ຕໍ່ອົງການກວດສອບແຫ່ງລັດ

1) ຄົ້ນຄ້ວາສ້າງ, ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍທີ່ຕົນຮັບຜິດຊອບ ໃຫ້ມີຄວາມຊັດເຈນ ແລະ ສາມາດຈັດຕັ້ງປະຕິບັດ ພ້ອມທັງເຜີຍແຜ່ໃຫ້ອົງການຄຸ້ມຄອງ ແລະ ເປົ້າໝາຍຖືກກວດສອບ ຮັບຮູ້, ເຂົ້າໃຈ ແລະ ໃຫ້ການຮ່ວມມື, ເຂົ້າຮ່ວມໃນການຈັດຕັ້ງປະຕິບັດວຽກງານກວດສອບ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

2) ປະສານສົມທົບກັບເປົ້າໝາຍຖືກກວດສອບ, ໄຈ້ແຍກລາຍຮັບ-ລາຍຈ່າຍ, ໜີ້ຕ້ອງຮັບ, ຈ່າຍລ່ວງໜ້າ ໃນລະບົບຄັງເງິນແຫ່ງຊາດ ທີ່ກວດສອບເຫັນໄລຍະຜ່ານມາອັນໃດສາມາດເກັບກູ້ໄດ້ ແລະ ອັນໃດບໍ່ສາມາດເກັບກູ້ຄືນໄດ້, ມີຕົວຕົນ ຫຼື ບໍ່ມີຕົວຕົນ ເພື່ອສະເໜີສະພາແຫ່ງຊາດ ພິຈາລະນາ.

3) ເພີ່ມທະວີການກວດສອບແຕ່ຫົວທີບັນດາໂຄງການລົງທຶນຂອງລັດຂະໜາດໃຫຍ່, ລັດຮ່ວມທຶນ ຫຼື ລັດຄ້ຳປະກັນໂຄງການ ເພື່ອບໍ່ໃຫ້ເກີດຄວາມສ່ຽງຈະສ້າງໜີ້ສິນຫຼືບໍ່ມີປະສິດທິຜົນ.

4) ກໍ່ສ້າງພະນັກງານ, ນັກກວດສອບ ໃຫ້ມີຈັນຍາບັນ, ມີຄວາມຊື່ສັດບໍລິສຸດ ແລະ ມີຄວາມຊຳນານທາງດ້ານວິຊາສະເພາະ.

5) ຫັນວຽກງານກວດສອບເປັນທັນສະໄໝໂດຍການສ້າງຖານຂໍ້ມູນກວດສອບທີ່ເຊື່ອມໂຍງຂໍ້ມູນການເງິນ ກັບເປົ້າໝາຍຖືກກວດສອບ ເພື່ອໃຫ້ການກວດສອບມີຄວາມວ່ອງໄວ, ໂປ່ງໃສ ແລະ ຮັບປະກັນຄວາມຖືກຕ້ອງຕາມກົດໝາຍ.

6) ເພີ່ມທະວີການປະສານງານ, ສະໜອງຂໍ້ມູນ ໃຫ້ແກ່ອົງການກວດກາແຫ່ງລັດ, ກຳມາທິການຂອງສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ມີຄວາມວ່ອງໄວ, ຄົບຖ້ວນ ແລະ ທັນເວລາ.

# ຄປຈສພຊ ສະເໜີ 7 ທັດສະນະ ຕໍ່ວຽກງານສານ ແລະ ໄອຍະການ



(ສພຊ) - ທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການກົດໝາຍ ແລະ ຍຸຕິທຳ ໄດ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ປະກອບຄຳເຫັນຕໍ່ບົດລາຍງານກ່ຽວກັບແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ໃນວາລະກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ຊຸດທີ X ເມື່ອຕອນບ່າຍວັນທີ 24 ມີນາຜ່ານມາ ເຊິ່ງສະເໜີໃຫ້ເອົາໃຈໃສ່ດັ່ງນີ້:

**ສານປະຊາຊົນສູງສຸດ**

1. ເພີ່ມທະວີຄວາມຮັບຜິດຊອບການເມືອງຂອງຄະນະພັກ, ຄະນະນຳ, ສະມາຊິກພັກ ແລະ ພະນັກງານ ໃນການເຊື່ອມຊຶມກຳແໜ້ນ ແລະ ຈັດຕັ້ງຜັນຂະຫຍາຍໂຄງການການເມືອງ ແລະ ບັນດາມະຕິຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ X ຫັນເປັນອັນລະອຽດເຂົ້າໃນວຽກງານຕົວຈິງ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

2. ສືບຕໍ່ປັບປຸງກົງຈັກການຈັດຕັ້ງແຕ່ລະຂັ້ນ ໃຫ້ມີຄວາມເຂັ້ມແຂງໜັກແໜ້ນ, ຄົ້ນຄວ້າສ້າງຕັ້ງສານປະຊາຊົນເຂດ ແລະ ໜ່ວຍງານຂອງສານປະຊາຊົນເຂດປະຈຳເມືອງ ລວມທັງຂັ້ນຕາແສງ ໃຫ້ສອດຄ່ອງກັບສະພາບການໃນໄລຍະໃໝ່ ເພື່ອສ້າງເງື່ອນໄຂໃຫ້ພົນລະເມືອງສາມາດເຂົ້າເຖິງການດຳເນີນຄະດີຂອງສານປະຊາຊົນໄດ້ສະດວກຂຶ້ນ.

3. ຖືສຳຄັນການສຶກສາອົບຮົມການເມືອງແນວຄິດ ແລະ ການບຳລຸງສ້າງຜູ້ພິພາກສາ ໃຫ້ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຈັນຍາບັນ-ຈັນຍາທຳ, ມີຄວາມຮູ້ຄວາມສາມາດ, ມີຄວາມຊຳນານງານໃນການດຳເນີນ ແລະ ຕັດສິນຄະດີ, ຜູ້ພິພາກສາຄະດີຕ້ອງຮັບປະກັນຫຼັກການດຳເນີນຄະດີຕາມກົດໝາຍຢ່າງເຂັ້ມງວດ.

4. ການດຳເນີນຄະດີຂອງສານປະຊາຊົນແຕ່ລະຂັ້ນໃຫ້ຮັບປະກັນຄຸນນະພາບ, ຮັບປະກັນສິດຂອງຄູ່ຄວາມ, ໂຈດ, ຈຳເລີຍ ແລະ ບຸກຄົນທີສາມໃນການແກ້ຂໍ້ກ່າວຫາ ແລະ ສິດໃນການໂຕ້ແຍ່ງ-ໂຕ້ຖຽງໃນການດຳເນີນຄະດີ ໃຫ້ມີຄວາມໂປ່ງໃສ, ກວດສອບໄດ້ ແລະ ສູ້ຊົນພິຈາລະນາແກ້ໄຂຄະດີ ໃຫ້ບັນລຸຕາມຄາດໝາຍທີ່ກຳນົດໄວ້.

5. ປັບປຸງແບບແຜນວິທີເຮັດວຽກ, ກົນໄກການບໍລິຫານຄະດີ ໃນການດຳເນີນຄະດີ ໃຫ້ມີຄວາມຖືກຕ້ອງ, ເປັນທຳ, ທັນກຳນົດເວລາ; ສຸມໃສ່ແກ້ໄຂປາກົດການລະເມີດກົດໝາຍໃນການດຳເນີນຄະດີຢູ່ສານປະຊາຊົນແຕ່ລະຂັ້ນໃຫ້ໄດ້ຢ່າງເດັດຂາດ.

6. ຄົ້ນຄວ້າເນື້ອໃນມາດຕາຂອງກົດໝາຍທີ່ຈະສ້າງ ຫຼື ປັບປຸງ ໃຫ້ເລິກເຊິ່ງ ແລະ ມີຈຸດສຸມ, ສຸມໃສ່ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍທີ່ຢູ່ໃນຄວາມຮັບຜິດຊອບ ໃຫ້ສຳເລັດຕາມແຜນການຢ່າງມີຄຸນນະພາບ.

7. ເພີ່ມທະວີຄວາມເປັນເຈົ້າການໃນການຄົ້ນຄວ້າ ເພື່ອສ້າງ ແລະ ປັບປຸງກົນໄກການປະສານງານຮ່ວມກັບພາກສ່ວນທີ່ກ່ຽວຂ້ອງໃນການດຳເນີນຄະດີ ແນໃສ່ເຮັດໃຫ້ການຄົ້ນຄວ້າ, ແກ້ໄຂຄະດີ ມີຄວາມເປັນເອກະພາບ, ໂລ່ງລ່ຽນ, ວ່ອງໄວ, ເປັນທຳ ແລະ ສາມາດຮັບໃຊ້ປະຊາຊົນຢ່າງແທ້ຈິງ.

**ໄອຍະການປະຊາຊົນສູງສຸດ**

1. ເພີ່ມທະວີຄວາມຮັບຜິດຊອບການເມືອງຂອງຄະນະພັກ, ຄະນະນຳ, ສະມາຊິກພັກ ແລະ ພະນັກງານຂອງອົງການໄອຍະການປະຊາຊົນ ໃນການເຊື່ອມຊຶມກຳແໜ້ນ ແລະ ຈັດຕັ້ງຜັນຂະຫຍາຍໂຄງການການເມືອງ ແລະ ບັນດາມະຕິຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ X ຫັນເປັນອັນລະອຽດເຂົ້າໃນວຽກງານຕົວຈິງ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

2. ປັບປຸງລະບົບກົງຈັກການຈັດຕັ້ງແຕ່ລະຂັ້ນ ໃຫ້ມີຄວາມເຂັ້ມແຂງໜັກແໜ້ນ, ເປັນລະບົບຄົບຊຸດ ໂດຍສະເພາະແມ່ນຂັ້ນຕາແສງ; ຄົ້ນຄວ້າການສ້າງຕັ້ງອົງການໄອຍະການປະຊາຊົນເຂດ ແລະ ຫ້ອງການໄອຍະການປະຊາຊົນເຂດປະຈຳເມືອງ ໃຫ້ສອດຄ່ອງກັບສະພາບການ ແລະ ເງື່ອນໄຂຕົວຈິງ.

3. ບຳລຸງສ້າງພະນັກງານທາງດ້ານປະລິມານ ແລະ ຄຸນນະພາບ ເພື່ອຮັບປະກັນໃຫ້ພະນັກງານໄອຍະການ ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຈັນຍາບັນ-ຈັນຍາທຳ, ມີຄວາມຮູ້ຄວາມສາມາດ ແລະ ຄວາມຊຳນານດ້ານວິຊາສະເພາະ ໃນການດຳເນີນຄະດີຢ່າງເປັນມືອາຊີບ.

4. ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ຕ້ອງຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ແລະ ຄວາມເປັນຈິງ, ຮອບດ້ານ, ຄົບຖ້ວນ, ພາວະວິໄສ ເພື່ອເຮັດໃຫ້ຜູ້ກະທຳຜິດຕ້ອງຖືກລົງໂທດຕາມກົດໝາຍ ແລະ ຜູ້ບໍ່ໄດ້ກະທຳຜິດ ຈະບໍ່ຖືກລົງໂທດ; ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ໃຫ້ບັນລຸຄາດໝາຍ 95% ຕາມທີ່ໄດ້ກຳນົດໄວ້.

5. ເພີ່ມທະວີການຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍຂອງເຈົ້າໜ້າທີ່ສືບສວນ-ສອບສວນ ໃນການດຳເນີນຄະດີອາຍາແຕ່ຫົວທີ, ຮັບປະກັນໃຫ້ການນຳໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນຂອງເຈົ້າໜ້າທີ່ສືບສວນ-ສອບສວນ ໃຫ້ມີຄວາມຖືກຕ້ອງເຂັ້ມງວດຕາມກົດໝາຍ.

6. ຄົ້ນຄວ້າຜັນຂະຫຍາຍແນວທາງ, ແຜນນະໂຍບາຍຂອງພັກ ເຂົ້າໃນການປັບປຸງ ແລະ ສ້າງກົດໝາຍ ລວມທັງນິຕິກຳໃຕ້ກົດໝາຍທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບ ໃຫ້ສາມາດແກ້ໄຂບັນຫາທີ່ເກີດຂຶ້ນຕົວຈິງ ທັງຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່.

7. ສຸມໃສ່ປັບປຸງກົນໄກການປະສານງານຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ໃນການດຳເນີນຄະດີໃຫ້ມີຄວາມຖືກຕ້ອງ, ສອດຄ່ອງກັບແນວທາງຂອງພັກ, ລັດຖະທຳມະນູນ, ກົດໝາຍ ແລະ ຄວາມເປັນຈິງ ພ້ອມທັງເຮັດໃຫ້ການປະສານສົມທົບມີຄວາມໂລ່ງລ່ຽນ, ວ່ອງໄວ ແລະ ສາມາດຮັບໃຊ້ປະຊາຊົນຢ່າງແທ້ຈິງ ແນໃສ່ເຮັດໃຫ້ການດຳເນີນຄະດີຕາມຂະບວນການຍຸຕິທຳມີຄຸນນະພາບ, ໂປ່ງໃສ ແລະ ກວດສອບໄດ້.

# ສູນທອນພິດເປີດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X

(ສພຊ) - ໃນພິທີເປີດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດຊຸດທີ IX ໄດ້ກ່າວສູນທອນພິດເປີດກອງປະຊຸມວ່າ: ມື້ນີ້, ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ໄດ້ຈັດຂຶ້ນຢ່າງເປັນທາງການ ໃນບັນຍາກາດທີ່ທົ່ວພັກ, ທົ່ວກອງທັບ, ທົ່ວປວງຊົນລາວທັງຊາດພວມສຸມໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ, ໂຄງການການເມືອງສະບັບທີ 3 ຂອງພັກ ເຂົ້າໃນທຸກຂົງເຂດວຽກງານ ແລະ ມີຄວາມເບີກບານມ່ວນຊື່ນຕໍ່ຜົນສຳເລັດຂອງການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີX ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ທີ່ຈັດຂຶ້ນໃນວັນທີ 22 ກຸມພາ 2026 ຜ່ານມາ.

ໃນໂອກາດທີ່ມີຄວາມໝາຍສຳຄັນນີ້, ກອງປະຊຸມສະແດງຄວາມປິຕິຊົມຊື່ນ ແລະ ຊົມເຊີຍຕໍ່ບັນດາທ່ານທີ່ໄດ້ຮັບຄວາມໄວ້ວາງໃຈ, ໄດ້ຮັບຄວາມເຊື່ອໝັ້ນຈາກປະຊາຊົນຜູ້ມີສິດເລືອກຕັ້ງໃນຂອບເຂດທົ່ວປະເທດ ທີ່ໄດ້ເລືອກເອົາບັນດາທ່ານເປັນສະມາຊິກສະພາແຫ່ງຊາດ ຊຸດທີ X ເຊິ່ງໄດ້ເຂົ້າຮ່ວມກອງປະຊຸມຄັ້ງນີ້ຢ່າງພ້ອມພຽງ.

ກອງປະຊຸມຂໍສະແດງຄວາມຂໍ່ານັບຊົມເຊີຍມາຍັງທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສປປລາວ ທີ່ໃຫ້ກຽດເຂົ້າຮ່ວມກອງປະຊຸມຄັ້ງນີ້ຢ່າງສຸດອົກສຸດໃຈ.

ກອງປະຊຸມຂໍສະແດງຄວາມຂໍ່ານັບຊົມເຊີຍບັນດາທ່ານຜູ້ນຳຂັ້ນສູງພັກ-ລັດ, ບັນດາທ່ານອະດີດການນຳຂັ້ນສູງ, ພະນັກງານປະຕິວັດອາວຸໂສ, ຜູ້ຊົງຄຸນວຸດທິ, ອະດີດຄະນະປະຈຳສະພາແຫ່ງຊາດ ຊຸດທີ IX, ບັນດາທ່ານທີ່ຕາງໜ້າອົງການຈັດຕັ້ງພັກ-ລັດ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດ, ອົງການຈັດຕັ້ງມະຫາຊົນ, ບັນດາທ່ານທູຕານຸທູດ ແລະ ຜູ້ຕາງໜ້າອົງການຈັດຕັ້ງສາກົນ ປະຈຳ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ບັນດາທ່ານນັກທຸລະກິດທີ່ໃຫ້ກຽດເຂົ້າຮ່ວມກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X.




ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ໃນວັນທີ 22 ກຸມພາ 2026 ທີ່ຜ່ານມາ ໄດ້ດຳເນີນໄປດ້ວຍບັນຍາກາດຟົດຟື້ນແລະ ໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍ, ເລືອກຕັ້ງໄດ້ສະມາຊິກສະພາແຫ່ງຊາດ ຊຸດທີ X ຈຳນວນ 175 ທ່ານ, ຍິງ 52 ທ່ານ (ເທົ່າກັບ 29.71% ຂອງຈຳນວນສະມາຊິກສະພາແຫ່ງຊາດ).

ຜົນສຳເລັດໃນການເລືອກຕັ້ງຄັ້ງນີ້ ໄດ້ສະແດງເຖິງຄວາມຮັບຜິດຊອບສູງຂອງການຈັດຕັ້ງທຸກຂັ້ນ, ສະແດງໃຫ້ເຫັນສະຕິຕື່ນຕົວທາງດ້ານການເມືອງ ແລະ ການເສີມຂະຫຍາຍສິດປະຊາທິປະໄຕ ໃນການປະຕິບັດສິດ ແລະ ພັນທະພື້ນຖານຂອງພົນລະເມືອງ, ສະແດງເຖິງຄວາມສາມັກຄີເປັນປຶກແຜ່ນພາຍໃຕ້ການນຳພາຂອງພັກ ແລະ ຢັ້ງຢືນເຖິງຄວາມໄວ້ວາງໃຈ, ຄວາມເຊື່ອໝັ້ນຂອງປະຊາຊົນຕໍ່ການນຳພາຂອງພັກ, ການຕິດຕາມກວດກາຢ່າງເຄັ່ງຄັດຂອງສະພາແຫ່ງຊາດ ແລະ ການບໍລິຫານຂອງລັດຖະບານ ກໍຄືຕໍ່ລະບອບປະຊາທິປະໄຕປະຊາຊົນລາວຂອງພວກເຮົາ.

ໃນໂອກາດອັນສະຫງ່າລາສີນີ້, ຂ້າພະເຈົ້າ ສະເໜີມາຍັງກອງປະຊຸມ ຈົ່ງພ້ອມກັນຊົມເຊີຍຕໍ່ຜົນສຳເລັດຂອງການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ຢ່າງສຸດອົກສຸດໃຈ.

ໄລຍະ 5 ປີຜ່ານມາ, ພາຍໃຕ້ການນຳພາຂອງພັກ, ທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວບັນດາເຜົ່າ ໄດ້ເປັນເຈົ້າການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີXI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ເຊິ່ງສາມາດຍາດໄດ້ຜົນສຳເລັດທີ່ສຳຄັນເປັນພື້ນຖານໃນຫຼາຍດ້ານເປັນຕົ້ນ: ສະຖຽນລະພາບທາງດ້ານການເມືອງມີຄວາມໜັກແໜ້ນ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງປະເທດຊາດ ໄດ້ຮັບການປົກປັກຮັກສາໄວ້ຢ່າງໝັ້ນຄົງ, ສັງຄົມມີຄວາມສະຫງົບປອດໄພ ແລະ ມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ກົງຈັກການຈັດຕັ້ງຂັ້ນສູນກາງ ແລະ ທ້ອງຖິ່ນ ໄດ້ຮັບການປັບປຸງໃຫ້ກະທັດຮັດ, ໂລ່ງລ່ຽນ ແລະ ມີປະສິດທິຜົນ ແນໃສ່ຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມຂອງປະເທດເຮົາດ້ວຍກົດໝາຍ ໃຫ້ນັບມື້ມີປະສິດທິຜົນຍິ່ງໆຂຶ້ນ, ເສດຖະກິດແຫ່ງຊາດໄດ້ຂະຫຍາຍຕົວຢ່າງຕໍ່ເນື່ອງ, ຂົງເຂດວັດທະນະທຳ-ສັງຄົມ ໄດ້ຮັບການຂະຫຍາຍຕົວຮອບດ້ານ, ຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າ ໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ, ຖານະບົດບາດ ແລະ ອິດທິພົນຂອງ ສປປ ລາວ ສືບຕໍ່ໄດ້ຮັບການຍົກສູງໃນເວທີພາກພື້ນ ແລະ ສາກົນ.

ສະພາແຫ່ງຊາດ ໃນຖານະເປັນອົງການອຳນາດລັດສູງສຸດ, ເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ໄດ້ເປັນເຈົ້າການຈັດຕັ້ງປະຕິບັດພາລະບົດບາດຂອງຕົນດ້ວຍຄວາມຮັບຜິດຊອບສູງເຊິ່ງໄລຍະ5ປີຜ່ານມາ, ສະພາແຫ່ງຊາດ ຊຸດທີ IX ໄດ້ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນດ້ວຍຈິດໃຈຫ້າວຫັນແລະເປັນເຈົ້າການ ເຊິ່ງເດັ່ນກວ່າໝູ່ແມ່ນການປັບປຸງລັດຖະທຳມະນູນສະບັບປີ 2025 ແລະ ກົດໝາຍຈຳນວນໜຶ່ງທີ່ກ່ຽວຂ້ອງ, ໄດ້ມີການປັບປຸງກົງຈັກການຈັດຕັ້ງ ແລະບຸກຄະລາກອນສະພາແຫ່ງຊາດ ຊຸດທີ X ສຳເລັດໂດຍພື້ນຖານ, ເປັນເຈົ້າການປະຕິບັດພາລະບົດບາດນິຕິບັນຍັດ, ການຕົກລົງບັນຫາສຳຄັນຂອງປະເທດຊາດ ແລະ ການຕິດຕາມກວດກາຢ່າງມີປະສິດທິຜົນ ເຮັດໃຫ້ສະພາແຫ່ງຊາດ ຊຸດທີ IX ສາມາດສຳເລັດໜ້າທີ່ການເມືອງທີ່ພັກ-ລັດ ແລະ ປະຊາຊົນມອບໝາຍໃຫ້ເປັນຢ່າງດີ, ອັນໄດ້ປະກອບສ່ວນສຳຄັນເຂົ້າໃນການຈັດຕັ້ງປະຕິບັດສອງໜ້າທີ່ຍຸດທະສາດຄື: ການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຕາມຈຸດໝາຍທີ່ໄດ້ກຳນົດໄວ້.

ໃນກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ຈະໄດ້ສຸມໃສ່ພິຈາລະນາ ແລະ ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດດັ່ງນີ້:

1) ຮັບຟັງລາຍງານຂອງຄະນະກຳມະການເລືອກຕັ້ງລະດັບຊາດ ກ່ຽວກັບຜົນສຳເລັດຂອງການເລືອກຕັ້ງ ແລະ ການຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V;

2) ພິຈາລະນາ ແລະ ຮັບຮອງເອົາການເລືອກຕັ້ງບັນດາຕຳແໜ່ງທີ່ສຳຄັນຂອງລັດ ແລະ ໂຄງປະກອບກົງຈັກການຈັດຕັ້ງຂອງອົງການອຳນາດລັດ;

3) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030);

4) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກ່ຽວກັບການພິຈາລະນາ, ຮັບຮອງດ້ານຫຼັກການ ໂຄງການລົງທຶນກໍ່ສ້າງທາງລົດໄຟຈາກຕົວເມືອງທ່າແຂກ ແຂວງຄຳມ່ວນ ຫາ ມູຢາ ຊາຍແດນລາວ-ຫວຽດນາມ ດ້ວຍຮູບແບບ BOT;

5) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກ່ຽວກັບແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສານປະຊາຊົນສູງສຸດ;

6) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກ່ຽວກັບແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການໄອຍະການປະຊາຊົນສູງສຸດ;

7) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກ່ຽວກັບແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການກວດກາແຫ່ງລັດ;

8.) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກ່ຽວກັບແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການກວດສອບແຫ່ງລັດ;

9) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກ່ຽວກັບແຜນການເຄື່ອນໄຫວ 5 ປີ ແຕ່ປີ (2026-2030) ຂອງສະພາແຫ່ງຊາດ ຊຸດທີ X;

10) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກ່ຽວກັບແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ (2026-2030) ຂອງສະພາແຫ່ງຊາດ ຊຸດທີ X.

ການດຳເນີນກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ເປັນກອງປະຊຸມທີ່ມີຄວາມໝາຍສຳຄັນຍິ່ງ ເພາະຈະໄດ້ມີການພິຈາລະນາ ແລະ ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດໃນ5ປີຕໍ່ໜ້າ. ສະນັ້ນ, ຂ້າພະເຈົ້າຮຽກຮ້ອງມາຍັງບັນດາທ່ານສະມາຊິກສະພາແຫ່ງຊາດ ຈົ່ງພ້ອມກັນຍົກສູງຄວາມຮັບຜິດຊອບການເມືອງຂອງຕົນ, ສຸມທຸກສະຕິປັນຍາ, ຄວາມຮູ້ຄວາມສາມາດ ເຂົ້າໃນການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນຢ່າງມີປະຊາທິປະໄຕ ແລະ ສອດຄ່ອງຕາມກົດໝາຍ ກ້າວໄປເຖິງການຕົກລົງ ແລະ ຮັບຮອງບັນດາເນື້ອໃນທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້.

ຮຽກຮ້ອງມາຍັງສະມາຊິກລັດຖະບານ, ຜູ້ຕາງໜ້າອົງການຈັດຕັ້ງພັກ-ລັດ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງໄດ້ເຂົ້າຮ່ວມກອງປະຊຸມຄັ້ງນີ້ຕາມວະລາທີ່ໄດ້ກຳນົດໄວ້, ພ້ອມທັງຮຽກຮ້ອງມາຍັງປະຊາຊົນບັນດາເຜົ່າ ຈົ່ງໄດ້ຕິດຕາມການດຳເນີນກອງປະຊຸມໂດຍຜ່ານພາຫະນະສື່ມວນຊົນ ແລະ ສະເໜີຄຳຄິດເຫັນໂດຍຜ່ານສາຍດ່ວນສະພາແຫ່ງຊາດ.

ໃນໂອກາດທີ່ມີຄວາມໝາຍສຳຄັນນີ້, ໃນນາມປະທານກອງປະຊຸມ, ຂ້າພະເຈົ້າ ຂໍປະກາດເປີດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີX ນັບແຕ່ເວລານີ້ເປັນຕົ້ນໄປ.






# ກຳແໜ້ນວິທີການຈັດຕັ້ງປະຕິບັດ

\# ທິດດີ

ເມື່ອເວົ້າເຖິງການຈັດຕັ້ງປະຕິບັດມະຕິຕ່າງໆຂອງສູນກາງພັກ ກໍຄືລັດຖະບານ ເພື່ອໃຫ້ບັນລຸຜົນສຳເລັດສູງສຸດນັ້ນ... ຜູ້ຂຽນຄິດເຖິງຄຳກ່າວໄວ້ຂອງປະທານ ໄກສອນ ພົມວິຫານ ຜູ້ນຳທີ່ເຄົາລົບຮັກຂອງປະຊາຊົນລາວບັນດາເຜົ່າ ເຊິ່ງເພິ່ນຖືວ່າ ມັນເປັນທັງວິທະຍາສາດ ທັງເປັນສິລະປະ. ເພິ່ນກ່າວໄວ້ວ່າ: "...ບັນຫາການຈັດຕັ້ງປະຕິບັດທັງເປັນວິທະຍາສາດທັງເປັນສິລະປະ ມັນເປັນວິທະຍາສາດ ກໍຍ້ອນວ່າຢາກຈັດຕັ້ງປະຕິບັດໄດ້ດີແມ່ນຕ້ອງເຊື່ອມຊຶມແນວທາງ ແລະ ທັດສະນະຂອງພັກ ຕ້ອງກຳສະພາບຕົວຈິງ (ຫຼືບໍ່) ຊັດເຈນ ຮູ້ໄຈ້ແຍກສະພາບການຕົວຈິງຢ່າງສັດຈະວິພາກ; ຈາກນັ້ນ, ຈຶ່ງຈະສາມາດວາງແຜນນະໂຍບາຍໂຄງການເຄື່ອນໄຫວ ແລະ ເລືອກເອົາໂຄງການທີ່ດີເລີດໄດ້; ໝາຍຄວາມວ່າໂຄງການທີ່ສິ້ນເປືອງແຮງງານໜ້ອຍສຸດ ແຕ່ຫາກບັນລຸປະສິດທິຜົນສູງສຸດ, ບົນພື້ນຖານດັ່ງກ່າວນັ້ນ ຈຶ່ງຈັດວາງສັບຊ້ອນກຳລັງເຂົ້າສູ່ການກະທຳຕົວຈິງ. ບັນຫາຈັດຕັ້ງປະຕິບັດ ເປັນສິລະປະກໍຍ້ອນວ່າ ໃນເມື່ອໄດ້ວາງແຜນນະໂຍບາຍໂຄງການ ແລະ ຈັດວາງກຳລັງແລ້ວ ຕ້ອງຮູ້ຈັກກຳເອົາກາລະໂອກາດທີ່ອຳນວຍເພື່ອເຄື່ອນໄຫວໃຫ້ຖືກກັບກາລະໂອກາດນັ້ນ ຕ້ອງຮູ້ນຳໃຊ້ຮູ້ສົມທົບທຸກກຳລັງ ແລະ ການເຄື່ອນໄຫວທຸກດ້ານຢ່າງເຂົ້າແກັບເຂົ້າເກຍ ແລະ ເປັນຈັງຫວະດຽວກັນ; ຮູ້ວາງນະໂຍບາຍໄມ້ງັດອອກ ໂດຍກຳແໜ້ນບັນດາການພົວພັນທາງດ້ານຜົນປະໂຫຍດເພື່ອປຸກລະດົມມະຫາຊົນຊຸກຍູ້ຂະບວນການໃນການເຄື່ອນໄຫວນັ້ນ ຕ້ອງມີການກຳນົດອັນໃດເປັນຈຸດໜັກ ອັນໃດເປັນຈຸດທົ່ວໄປ ແລະ ຕ້ອງຮູ້ຊອກຮູ້ສ້າງແບບຢ່າງ ແລະ ແຜ່ຂະຫຍາຍແບບຢ່າງນັ້ນອອກຢ່າງກວ້າງຂວາງ..." (ໄກສອນ ພົມວິຫານ ນິພົນເລືອກເຟັ້ນເຫຼັ້ມ 3 ໜ້າທີ 120-121).

ສະນັ້ນ, ຢາກປະຕິບັດຄຳສັ່ງເລກທີ 02/ຄລສພ, ລົງວັນທີ 30 ມັງກອນ 2026 ຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ ນັ້ນ ບັນດາຄະນະພັກ, ບັນດາກະຊວງ, ອົງການ, ຄະນະພັກນະຄອນຫຼວງວຽງຈັນ ແລະ ບັນດາແຂວງທົ່ວປະເທດ ຕ້ອງກຳໃຫ້ແໜ້ນວິທີການຈັດຕັ້ງປະຕິບັດ ດັ່ງນີ້:

ວິທີການຈັດຕັ້ງປະຕິບັດ.

ບົນຈິດໃຈບັນດາເອກະສານເຊື່ອມຊຶມ ກໍຄືໂຄງການການເມືອງ ສະບັບທີ 3, ເນື້ອໃນລາຍງານການເມືອງຕໍ່ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ X, ກົດລະບຽບພັກ ສະໄໝທີ XII ນັ້ນ, ຄະນະພັກແຕ່ລະຂັ້ນ ຕ້ອງໄດ້ຄົ້ນຄວ້າ, ເຊື່ອມຊຶມ, ກຳແໜ້ນ ແລະ ຜັນຂະຫຍາຍຢ່າງເປັນເອກະພາບເຂົ້າສູ່ວຽກງານຕົວຈິງ.

• ໃນການເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ, ຄະນະພັກແຕ່ລະຂັ້ນ ຕ້ອງເອົາໃຈໃສ່ບາງບັນຫາດັ່ງນີ້:

1. ການເຊື່ອມຊຶມມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ຕ້ອງຮັບປະກັນໃຫ້ທຸກເປົ້າໝາຍ ໄດ້ເຂົ້າຮ່ວມຢ່າງທົ່ວເຖິງ, ທັງຮັບປະກັນການອະທິບາຍເນື້ອໃນຢ່າງຮັດກຸມ, ມີຈຸດສຸມ ແລະ ແທດເໝາະກັບແຕ່ລະເປົ້າໝາຍ ພາຍໃຕ້ການນຳພາໂດຍກົງຂອງສະຫາຍກຳມະການສູນກາງພັກ ແລະ ເລຂາຄະນະພັກຢູ່ແຕ່ລະຂັ້ນ.

2. ໃຫ້ຄະນະພັກກະຊວງ, ອົງການ, ນະຄອນຫຼວງວຽງຈັນ, ແຂວງ ຈັດຕັ້ງການເຊື່ອມຊຶມເອກະສານໃຫ້ສະມາຊິກພັກ, ພະນັກງານຫຼັກແຫຼ່ງໃນທົ່ວອົງຄະນະພັກຂອງຕົນ ນັບແຕ່ມື້ອອກຄຳສັ່ງສະບັບນີ້ເປັນຕົ້ນໄປ ແລະ ໃຫ້ສຳເລັດພາຍໃນເດືອນມີນາ 2026.

- ສຳລັບກະຊວງ, ອົງການໃດ ມີຈຳນວນພົນຫຼາຍ ກໍອາດຈະເຮັດເປັນ 2-3 ຊຸດ, ມອບໃຫ້ສະຫາຍເລຂາຄະນະພັກ ເປັນຜູ້ຮັບຜິດຊອບ; ຈາກນັ້ນ, ມອບໃຫ້ແຕ່ລະຮາກຖານພັກ ສືບຕໍ່ນຳໄປເຊື່ອມຊຶມແລະຄົ້ນຄວ້າ, ຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງຂອງຕົນ.

- ສ່ວນຢູ່ຂັ້ນທ້ອງຖິ່ນ ແມ່ນໃຫ້ຈັດຕັ້ງເຊື່ອມຊຶມໃຫ້ພະນັກງານຫຼັກແຫຼ່ງຂັ້ນນະຄອນຫຼວງວຽງຈັນ-ແຂວງ, ເລຂາພັກນະຄອນ-ເມືອງ, ຄະນະປະຈຳພັກນະຄອນ-ເມືອງ ໂດຍມອບໃຫ້ສະຫາຍເລຂາຄະນະພັກນະຄອນຫຼວງວຽງຈັນ-ແຂວງ ເປັນຜູ້ຮັບຜິດຊອບ; ຈາກນັ້ນ, ເລຂາຄະນະພັກຮາກຖານ, ເລຂາໜ່ວຍພັກ ຂອງຂະແໜງການອ້ອມຂ້າງນະຄອນຫຼວງ-ແຂວງ ສືບຕໍ່ນຳໄປເຊື່ອມຊຶມ ແລະ ຄົ້ນຄວ້າ, ຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງຂອງຕົນ.

ສຳລັບຢູ່ຂັ້ນເມືອງ ແມ່ນມອບໃຫ້ສະຫາຍເລຂາຄະນະພັກນະຄອນ-ເມືອງນຳໄປຈັດຕັ້ງເຊື່ອມຊຶມຢູ່ຂັ້ນຂອງຕົນ ໂດຍເຕົ້າໂຮມພະນັກງານຫຼັກແຫຼ່ງຂັ້ນເມືອງ, ເລຂາຄະນະພັກຮາກຖານ, ເລຂາໜ່ວຍພັກຮາກຖານ ຂອງນະຄອນ-ເມືອງ ແລະ ຕາແສງ ເຂົ້າຮ່ວມ ແລະ ສືບຕໍ່ຄົ້ນຄວ້າ, ຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງຂອງຕົນ.

ສຳລັບການເຜີຍແຜ່, ເຊື່ອມຊຶມໃຫ້ແກ່ປະຊາຊົນຢູ່ຂັ້ນບ້ານ ແມ່ນມອບໃຫ້ສະຫາຍເລຂາຄະນະພັກຮາກຖານຕາແສງ ເປັນຜູ້ນຳພາຊີ້ນຳການຈັດຕັ້ງປະຕິບັດໃຫ້ແທດເໝາະກັບສະພາບຈຸດພິເສດ ແລະ ເງື່ອນໄຂຕົວຈິງຂອງແຕ່ລະບ່ອນ ພາຍໃຕ້ການຊີ້ນຳຂອງຄະນະປະຈຳພັກນະຄອນ-ເມືອງ.

3. ບັນດາສະຫາຍກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ ແບ່ງກັນລົງຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດຕົວຈິງ (ລະອຽດຈະມີແຜນ ແລະ ແຈ້ງໃຫ້ຊາບຕາມພາຍຫຼັງ).

4. ໃຫ້ຄະນະພັກແຕ່ລະຂັ້ນ ນຳໃຊ້ສື່ມວນຊົນປະເພດຕ່າງໆ ເຜີຍແຜ່ບັນດາເນື້ອໃນຕົ້ນຕໍຂອງກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ກໍຄືມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນ; ພ້ອມກັນນັ້ນ, ກໍເຜີຍແຜ່ຜົນສຳເລັດຂອງການຈັດຕັ້ງຜັນຂະຫຍາຍໃນແຕ່ລະໄລຍະຕິດພັນກັບນຳສະເໜີຜົນງານ, ຕົວແບບ ກໍຄືບຸກຄົນດີເດັ່ນ ທີ່ເກີດຂຶ້ນໃນຂະບວນການຕົວຈິງໃນແຕ່ລະຂົງເຂດວຽກງານຢ່າງຕໍ່ເນື່ອງເພື່ອປຸກລະດົມຂະບວນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ໃຫ້ຟົດຟື້ນ, ແຂງແຮງ ແລະ ໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງອອກ.

5. ມອບໃຫ້ຄະນະໂຄສະນາອົບຮົມສູນກາງພັກ ຄົ້ນຄວ້າອອກບົດແນະນຳລະອຽດ, ຄັດຈ້ອນ, ອະທິບາຍເນື້ອໃນສຳຄັນຕົ້ນຕໍຂອງມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ເພື່ອເຜີຍແຜ່, ໂຄສະນາໃຫ້ເປົ້າໝາຍຕ່າງໆ ຢູ່ສູນກາງ ແລະ ທ້ອງຖິ່ນຮາກຖານ; ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ດຳເນີນເປັນໂຄງການຄົ້ນຄວ້າ, ສ້າງເປັນຫຼັກສູດ ແລະ ນຳເຂົ້າສິດສອນຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ, ບັນດາໂຮງຮຽນການເມືອງ ແລະ ການປົກຄອງແຂວງໃນຂອບເຂດທົ່ວປະເທດ.

6. ມອບໃຫ້ຄະນະຈັດຕັ້ງສູນກາງພັກແລະຄະນະກວດກາສູນກາງພັກຮີບຮ້ອນອອກບົດແນະນຳການປະຕິບັດກົດລະບຽບຂອງພັກ ສະໄໝທີ XII ພ້ອມທັງໃຫ້ຈັດຕັ້ງເຊື່ອມຊຶມໃຫ້ສະມາຊິກພັກໄປພ້ອມກັບການເຊື່ອມຊຶມເນື້ອໃນສຳຄັນຕ່າງໆຂອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ; ພ້ອມນັ້ນ, ກໍຄົ້ນຄວ້າອອກນິຕິກຳຕ່າງໆ ເພື່ອຜັນຂະຫຍາຍຂໍ້ກຳນົດໃນກົດລະບຽບຂອງພັກ ສະໄໝທີ XII ໃຫ້ເປັນອັນລະອຽດ ເພື່ອນຳສະເໜີຄະນະບໍລິຫານງານສູນກາງພັກ, ກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ຕົກລົງ.

7. ມອບໃຫ້ກະຊວງການເງິນ ອອກຄຳແນະນຳ, ອະທິບາຍເນື້ອໃນສຳຄັນ ແລະ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ X ພ້ອມທັງຈັດພິມເປັນປຶ້ມ.

8. ມອບໃຫ້ຫ້ອງວ່າການສູນກາງພັກ ສົມທົບກັບພາກສ່ວນກ່ຽວຂ້ອງ ຊ່ວຍກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ຕິດຕາມ, ຊຸກຍູ້ ແລະ ປະເມີນຜົນການຈັດຕັ້ງປະຕິບັດຢ່າງປົກກະຕິ.

9. ພາຍຫຼັງໄດ້ຮັບຄຳສັ່ງສະບັບນີ້, ຄະນະພັກກະຊວງ, ອົງການ, ນະຄອນຫຼວງວຽງຈັນ, ແຂວງ ຈົ່ງຮີບຮ້ອນປຶກສາຫາລື, ແບ່ງວຽກ, ແບ່ງຄວາມຮັບຜິດຊອບໃຫ້ກັນຢ່າງລະອຽດ, ຈະແຈ້ງ ແລະ ວາງແຜນຈັດຕັ້ງເຊື່ອມຊຶມ, ຜັນຂະຫຍາຍຢ່າງເປັນລະບົບ ແລະ ໃຫ້ທັນເວລາ ທັງໄດ້ຮັບຜົນດີ.

ທັງໝົດນັ້ນ ຄືໝາກຫົວໃຈຂອງຄຳສັ່ງທີ່ຢາກໃຫ້ກຳແໜ້ນ ເພື່ອຈັດຕັ້ງປະຕິບັດໃຫ້ບັນລຸຜົນສູງສຸດຕາມຄາດໝາຍວາງອອກ.

## ຈະຮັບຮອງ...

(ຕໍ່ຈາກໜ້າ 2)

ຕັ້ງຕ່າງໆ ທີ່ມີຜົນກະທົບທີ່ຮ້າຍແຮງຕໍ່ສິ່ງແວດລ້ອມ ແລະ ທຳມະຊາດ, ຕໍ່ພື້ນຖານໂຄງລ່າງ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ຢ່າງໜ້ອຍປີລະ 5 ຄັ້ງຂຶ້ນໄປ.

5) ຄົ້ນຄວ້າ ແລະ ພິຈາລະນາແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ທີ່ສົ່ງເຂົ້າມາຫາ ສພຊ ໃຫ້ໄດ້ 80% ຂຶ້ນໄປ.

4. ການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ

1) ສືບຕໍ່ປັບປຸງກົງຈັກການຈັດຕັ້ງຂອງ ສພຊ ແລະ ສພຂ, ສັບຊ້ອນບຸກຄະລາກອນທີ່ເປັນເສນາທິການໃຫ້ມີຄວາມສອດຄ່ອງກັບຄວາມຮູ້, ຄວາມສາມາດ, ວິຊາສະເພາະ ເພື່ອຮັບປະກັນຄຸນນະພາບຂອງການປະຕິບັດໜ້າທີ່ການເມືອງ.

2) ເອົາໃຈໃສ່ບຳລຸງສ້າງ ແລະ ຍົກສູງຂີດຄວາມສາມາດໃຫ້ແກ່ ສສຊ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ແລະ ພະນັກງານ-ລັດຖະກອນດ້ວຍການຝຶກອົບຮົມ, ສຳມະນາ ແລະ ສົ່ງໄປບຳລຸງຍົກລະດັບຢູ່ພາຍໃນ ແລະ ຕ່າງປະເທດ 200 ເທື່ອຄົນຂຶ້ນໄປ.

3) ຈັດຊຸດເຝິກອົບຮົມທິດສະດີການເມືອງ-ການປົກຄອງໄລຍະສັ້ນ ໃຫ້ແກ່ພະນັກງານວິຊາການໜຸ່ມນ້ອຍໃຫ້ໄດ້ປີລະ 1-2 ຊຸດ; ສົ່ງໄປເຝິກອົບຮົມຂັ້ນກາງ ແລະ ຂັ້ນສູງ ຢູ່ພາຍໃນ ແລະ ຕ່າງປະເທດ ປີລະ 5 ຄົນຂຶ້ນໄປ.

4) ຄົ້ນຄວ້າ ແລະ ກຳນົດນະໂຍບາຍທີ່ຈຳເປັນ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານຂອງ ສພຊ ແລະ ສພຂ ຕາມນະໂຍບາຍຂອງພັກ-ລັດທີ່ກຳນົດອອກແຕ່ລະໄລຍະ.

5. ການເຄື່ອນໄຫວຕ່າງປະເທດ

1) ຄົ້ນຄວ້າ, ເຊື່ອມຊຶມ, ກຳແໜ້ນຢ່າງເລິກເຊິ່ງ ແນວທາງນະໂຍບາຍການຕ່າງປະເທດຂອງພັກ-ລັດ.

2) ກຳນົດແຜນການເຄື່ອນໄຫວວຽກງານການຕ່າງປະເທດຢ່າງມີຈຸດສຸມແລະສອດຄ່ອງກັບຄວາມສາມາດດ້ານງົບປະມານ.

3) ເສີມຂະຫຍາຍການພົວພັນຮ່ວມມືກັບປະເທດເພື່ອນມິດຍຸດທະສາດ, ເປີດກວ້າງການຮ່ວມມືໃນຂອບການພົວພັນຮ່ວມມືແບບສອງຝ່າຍ ແລະ ຫຼາຍຝ່າຍ ໃນປະເທດອາຊຽນ, ລັດຖະສະພາບັນດາປະເທດພາກພື້ນ ແລະ ສາກົນ ໂດຍມີການແລກປ່ຽນຢ້ຽມຢາມເຊິ່ງກັນແລະກັນຂອງຄະນະຜູ້ແທນຂັ້ນສູງ, ຂັ້ນກຳມາທິການ ແລະ ຫ້ອງວ່າການ ຂອງ ສພຊ ແລະ ສພຂ ຢ່າງໜ້ອຍປີລະ 30-50 ຄັ້ງຂຶ້ນໄປ.

4) ເອົາໃຈໃສ່ບຳລຸງຍົກລະດັບດ້ານພາສາຕ່າງປະເທດໃຫ້ແກ່ ສສຊ, ສສຂ ແລະ ພະນັກງານເສນາທິການ ດ້ວຍການຈັດຊຸດເຝິກອົບຮົມພາສາອັງກິດ ແລະ ພາສາຫວຽດນາມ ຢ່າງໜ້ອຍປີລະ 2 ຊຸດ.

5) ເອົາໃຈໃສ່ການຕິດຕາມ, ຄົ້ນຄວ້າ, ວິເຄາະ, ວິໄຈສະພາບການພາກພື້ນ ແລະ ສາກົນຢ່າງປົກກະຕິແລະລາຍງານໃຫ້ ສສຊ, ສສຂ ແລະ ພະນັກງານໃນຂົງເຂດສະພາ ຢ່າງທັນການ ເພື່ອເປັນເອກະພາບໃນການເອົາທັດສະນະໃຫ້ແກ່ການເຄື່ອນໄຫວວຽກງານຕ່າງປະເທດ.

## ຜົນສຳເລັດ...

(ຕໍ່ຈາກໜ້າ 1)

ຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ, ນະຄອນຫຼວງ ຊຸດທີ V

ເພື່ອຮັບປະກັນເຮັດໃຫ້ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງ, ແຂວງ ຊຸດທີ V ດຳເນີນຖືກຕ້ອງຕາມຫຼັກການ ແລະ ຂັ້ນຕອນ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊົນຂັ້ນແຂວງ ທັງຮັບປະກັນເຮັດໃຫ້ການເລືອກຕັ້ງຄັ້ງນີ້ກາຍເປັນໜ້າທີ່ແລະຄວາມຮັບຜິດຊອບຂອງພົນລະເມືອງລາວທຸກຄົນທີ່ມີອາຍຸ 18 ປີຂຶ້ນໄປແມ່ນມີສິດປ່ອນບັດເລືອກຕັ້ງ, ຄະນະປະຈຳສະພາແຫ່ງຊາດ ຈຶ່ງໄດ້ລາຍງານຕໍ່ກົມການເມືອງສູນກາງພັກ ເພື່ອຂໍທິດຊີ້ນຳໃນການກະກຽມໃຫ້ແກ່ການເລືອກຕັ້ງ ແລະ ກົມການເມືອງສູນກາງພັກໄດ້ອອກມະຕິສະບັບເລກທີ 26/ກມສພ, ລົງວັນທີ 12 ກັນຍາ 2025 ວ່າດ້ວຍການເພີ່ມທະວີການນຳພາ-ຊີ້ນຳຂອງອົງຄະນະພັກທຸກຂັ້ນ ຕໍ່ວຽກງານການເລືອກຕັ້ງ ແນໃສ່ເຮັດໃຫ້ການເລືອກຕັ້ງຄັ້ງນີ້ ດຳເນີນໄປຢ່າງຖືກຕ້ອງ ແລະ ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

ເພື່ອປະຕິບັດຕາມພາລະບົດລາດ ແລະ ຄວາມຮັບຜິດຊອບຂອງຕົນ, ຄະນະປະຈຳສະພາແຫ່ງຊາດ ຈຶ່ງໄດ້ອອກມະຕິສະບັບເລກທີ 277/ຄປຈ, ລົງວັນທີ 07 ຕຸລາ 2025 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບຊາດ ໂດຍມອບໝາຍໃຫ້ ຄລຊ ຮັບຜິດຊອບຊີ້ນຳ-ນຳພາທຸກເຂດເລືອກຕັ້ງ, ສຳນັກງານອົງການ, ກົມກອງໃນທົ່ວປະເທດ ເພື່ອກະກຽມ ແລະ ດຳເນີນການເລືອກຕັ້ງພ້ອມທັງຊີ້ນຳຄະນະກຳມະການເລືອກຕັ້ງຂັ້ນທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ກະກຽມເງື່ອນໄຂ ແລະ ອຳນວຍຄວາມສະດວກດ້ານຕ່າງໆ ໃຫ້ແກ່ການເລືອກຕັ້ງໃນທົ່ວປະເທດ.

ໂດຍປະຕິບັດຕາມລັດຖະທຳມະນູນ ແຫ່ງ ສປປລາວ ສະບັບປັບປຸງປີ2025, ປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດສະບັບເລກທີ 311/ປປທ, ລົງວັນທີ 01 ທັນວາ 2025 ວ່າດ້ວຍການປະກາດວັນເລືອກຕັ້ງ ໃນວັນທີ22 ກຸມພາ 2026 ແລະ ລັດຖະດຳລັດສະບັບເລກທີ 338/ປປທ, ລົງວັນທີ 30 ທັນວາ 2025 ວ່າດ້ວຍການປະກາດຈຳນວນຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ໃນແຕ່ລະເຂດເລືອກຕັ້ງ.

ເພື່ອຈັດຕັ້ງປະຕິບັດລັດຖະດຳລັດຂອງທ່ານປະທານປະເທດ 2 ສະບັບດັ່ງກ່າວ, ຄະນະກຳມະການເລືອກຕັ້ງລະດັບຊາດ ໄດ້ອອກນິຕິກຳຕ່າງໆ ພ້ອມທັງຊີ້ນຳຄະນະກຳມະການເລືອກຕັ້ງຂັ້ນທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ກະກຽມເງື່ອນໄຂ ແລະ ອຳນວຍຄວາມສະດວກດ້ານຕ່າງໆ ໃຫ້ແກ່ການເລືອກຕັ້ງຢູ່ແຕ່ລະເຂດເລືອກຕັ້ງໃນທົ່ວປະເທດເຊິ່ງໄດ້ສຸມໃສ່ວຽກຕົ້ນຕໍຈຳນວນໜຶ່ງຄື:

1. ຄະນະກຳມະການເລືອກຕັ້ງລະດັບຊາດ ໄດ້ຈັດກອງປະຊຸມເຜີຍແຜ່ບັນດານິຕິກຳທີ່ກ່ຽວຂ້ອງກັບການເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ໃຫ້ແກ່ບັນດາທ່ານໃນຄະນະກຳມະການເລືອກຕັ້ງຂັ້ນແຂວງ, ກະຊວງ-ອົງການ ເພື່ອນຳເອົາເນື້ອໃນຈິດໃຈ ໄປເຜີຍແຜ່ແນະນຳໃຫ້ພະນັກງານຫຼັກແຫຼ່ງທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ພ້ອມທັງຈັດຕັ້ງເຊື່ອມຊຶມໃຫ້ແກ່ສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ກຳມະກອນແລະປະຊາຊົນລາວບັນດາເຜົ່າ ໃນທົ່ວປະເທດໄດ້ຢ່າງກວ້າງຂວາງ ແນໃສ່ຮັບປະກັນໃຫ້ການເລືອກຕັ້ງໄດ້ດຳເນີນໄປຖືກຕ້ອງຕາມກົດໝາຍ, ເສີມຂະຫຍາຍສິດປະຊາທິປະໄຕຂອງຜູ້ມີສິດເລືອກຕັ້ງຢ່າງເຕັມສ່ວນ, ທັງຮັບປະກັນໃຫ້ຜູ້ມີສິດເລືອກຕັ້ງ ໄປໃຊ້ສິດເລືອກຕັ້ງຢ່າງຄົບຖ້ວນ, ລົງຄະແນນສຽງຖືກຕາມກົດໝາຍ, ຮັກສາໄດ້ຄວາມສະຫງົບປອດໄພ, ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມໂປ່ງໃສ ແລະ ທັນຕາມກຳນົດເວລາ; ເພື່ອຮັບປະກັນໃຫ້ ສສຊ ຊຸດທີ X ແລະ ສສຂ ຊຸດທີ V ທີ່ເປັນເພດຍິງ ມີຈຳນວນເພີ່ມຂຶ້ນ, ຄລຊ ໄດ້ຈັດຕັ້ງການເຝິກອົບຮົມສະເພາະໃຫ້ຜູ້ສະໝັກເພດຍິງກະກຽມຄວາມພ້ອມດ້ານຕ່າງໆ.

2. ຜ່ານການເຜີຍແຜ່, ເຊື່ອມຊຶມ ບັນດາເອກະສານຕ່າງໆທີ່ກ່ຽວຂ້ອງກັບການເລືອກຕັ້ງ ເຮັດໃຫ້ຜູ້ເຂົ້າຮ່ວມທຸກເປົ້າໝາຍ ຮັບຮູ້ພາລະບົດບາດ, ສິດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນນະຄອນຫຼວງ, ແຂວງ; ເຫັນໄດ້ຄວາມໝາຍສຳຄັນຂອງການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງ, ແຂວງ ຊຸດທີ V; ຮັບຮູ້, ເຂົ້າໃຈກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແລະ ນິຕິກຳອື່ນໆໄດ້ສົມຄວນ; ເປັນການເຊີດຊູສະຕິເປັນເຈົ້າຂອງປະເທດຊາດ, ຍົກສູງນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ ແລະ ຄວາມສາມັກຄີເປັນປຶກແຜ່ນໃນທົ່ວປວງຊົນຢ່າງໜັກແໜ້ນ, ຍົກລະດັບຄວາມຮັບຮູ້ຂອງປະຊາຊົນລາວບັນດາເຜົ່າກ່ຽວກັບການປະຕິບັດສິດ ແລະ ພັນທະພື້ນຖານຂອງພົນລະເມືອງຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ, ປະຊາຊົນລາວບັນດາເຜົ່າ ໄດ້ເປັນເຈົ້າການໃນການເລືອກຕັ້ງຄັ້ງນີ້ ເຮັດໃຫ້ການເລືອກຕັ້ງດຳເນີນໄປຢ່າງຖືກຕ້ອງ ແລະ ບັນລຸໄດ້ຕາມຄາດໝາຍທີ່ກຳນົດໄວ້.

3. ສຳລັບດ້ານໂຄງປະກອບ ແລະ ບຸກຄະລາກອນຂອງສະມາຊິກສະພາ, ຄະນະກຳມະການເລືອກຕັ້ງລະດັບຊາດ ໄດ້ມອບໃຫ້ຄະນະພັກ, ກະຊວງ-ອົງການ ແລະ ອົງການປົກຄອງທ້ອງຖິ່ນ ຮັບຜິດຊອບຄົ້ນຄວ້າຄັດເລືອກເປົ້າໝາຍທີ່ມີມາດຕະຖານ, ເງື່ອນໄຂຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອລົງສະໝັກຮັບເລືອກຕັ້ງເປັນ ສສຊ ຊຸດທີ X ແລະ ສສຂ ຊຸດທີ V ເຊິ່ງໂຄງປະກອບຂອງຜູ້ສະໝັກຮັບເລືອກຕັ້ງໃນຄັ້ງນີ້ ປະກອບມີຕົວແທນຈາກຫຼາຍຂົງເຂດວຽກງານ, ຂະແໜງການ, ລັດວິສາຫະກິດ ແລະ ວິສາຫະກິດພາກເອກະຊົນ ຢູ່ສູນກາງ ແລະ ທ້ອງຖິ່ນ, ປະກອບມີຮຸ່ນໜຸ່ມ, ຮຸ່ນກາງ, ຮຸ່ນອາວຸໂສ ແລະ ມີໂຄງປະກອບດ້ານເພດ, ເຜົ່າ ໃນອັດຕາສ່ວນທີ່ເໝາະສົມ; ໃນການເລືອກຕັ້ງຄັ້ງນີ້ ມີຜູ້ສະໝັກຮັບເລືອກຕັ້ງທັງໝົດຈຳນວນ 1,284 ທ່ານ, ໃນນັ້ນຜູ້ສະໝັກຮັບເລືອກຕັ້ງເປັນ ສສຊ ຊຸດທີ X ຈຳນວນ 243 ທ່ານ, ຍິງ 66 ທ່ານ ແລະ ສສຂ ຊຸດທີ V ຈຳນວນ 1,041 ທ່ານ ເປັນຍິງ 290 ທ່ານ.

4. ວຽກງານໂຄສະນາ, ປຸກລະດົມຂະບວນການ ແມ່ນໄດ້ນຳໃຊ້ພາຫະນະສື່ມວນຊົນເພື່ອໂຄສະນາເຜີຍແຜ່ການກະກຽມ ແລະ ດຳເນີນການເລືອກຕັ້ງຢ່າງກວ້າງຂວາງ ທັງຜ່ານລະບົບອອນລາຍ, ໜັງສືພິມ, ວິທະຍຸ ແລະ ໂທລະພາບ ເພື່ອເຮັດໃຫ້ພົນລະເມືອງລາວທຸກຄົນ ແລະ ຊາວຕ່າງປະເທດ ຮັບຮູ້-ເຂົ້າໃຈກ່ຽວກັບການກະກຽມ ແລະ ດຳເນີນການປ່ອນບັດເລືອກຕັ້ງຄັ້ງນີ້; ໄປຄຽງຄູ່ກັບການໂຄສະນາ, ໄດ້ມີການຊຸກຍູ້ຂະບວນການດ້ານຕ່າງໆ ເປັນຕົ້ນ ຊຸກຍູ້ການຜະລິດກະສິກຳ, ການກໍ່ສ້າງຮາກຖານການເມືອງ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ປະກອບສ່ວນໃນຂະບວນການຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ຕ່າງໆ, ສາມາດປຸກລະດົມປະຊາຊົນລາວບັນດາເຜົ່າ ໃຫ້ມີຄວາມຕື່ນຕົວເຂົ້າຮ່ວມຂະບວນການກະກຽມ ແລະ ດຳເນີນການເລືອກຕັ້ງຢ່າງເປັນເຈົ້າການ.

5. ຄະນະກຳມະການເລືອກຕັ້ງລະດັບຊາດຍັງໄດ້ຊີ້ນຳ, ຊຸກຍູ້ຄະນະກຳມະການເລືອກຕັ້ງທຸກຂັ້ນ ກະກຽມເງື່ອນໄຂ ແລະ ອຳນວຍຄວາມສະດວກໃນດ້ານຕ່າງໆ ເພື່ອຮັບປະກັນໃຫ້ແກ່ການເລືອກຕັ້ງ ໄດ້ບັນລຸຕາມຄາດໝາຍທີ່ວາງໄວ້ ເປັນຕົ້ນ ອຸປະກອນຮັບໃຊ້, ງົບປະມານ, ການສະໜອງຂໍ້ມູນຂ່າວສານ ແລະ ດ້ານອື່ນໆທີ່ຈຳເປັນ.

6. ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ໄດ້ແບ່ງອອກເປັນ 18 ເຂດເລືອກຕັ້ງ, ມີໜ່ວຍປ່ອນບັດເລືອກຕັ້ງທົ່ວປະເທດທັງໝົດ 8,351 ໜ່ວຍ, ທົ່ວປະເທດມີຜູ້ມີສິດປ່ອນບັດເລືອກຕັ້ງທັງໝົດຈຳນວນ 4,764,384 ທ່ານ, ຍິງ 2,384,104 ທ່ານ ແລະ ມີຜູ້ໄປໃຊ້ສິດປ່ອນບັດເລືອກຕັ້ງຕົວຈິງຈຳນວນ 4,620,353 ທ່ານ, ເທົ່າກັບ 96.97% ຂອງຈຳນວນຜູ້ມີສິດເລືອກຕັ້ງ ໃນນີ້, ຜູ້ມີສິດປ່ອນບັດເລືອກຕັ້ງຢູ່ຕ່າງປະເທດ ມີຈຳນວນ 23,378 ທ່ານ, ຍິງ 7,782 ທ່ານ; ຜ່ານການເລືອກຕັ້ງໃນວັນທີ 22 ກຸມພາ 2026 ສາມາດເລືອກຕັ້ງໄດ້ສະມາຊິກສະພາແຫ່ງຊາດ ຊຸດທີ X ຈຳນວນທັງໝົດ 175 ທ່ານ, ຍິງ 52ທ່ານ(ກວມເອົາ29.71%).

ເຖິງຢ່າງໃດກໍຕາມ, ຖ້າອີງໃສ່ກົດໝາຍ, ການຊີ້ນຳຂອງກົມການເມືອງສູນກາງພັກ ແລະ ຂອງຄະນະກຳມະການເລືອກຕັ້ງລະດັບຊາດແລ້ວ ຍັງມີວຽກງານຈຳນວນໜຶ່ງເຮັດບໍ່ທັນໄດ້ດີ; ດັ່ງນັ້ນ, ເພື່ອເປັນບົດຮຽນໃຫ້ແກ່ການເລືອກຕັ້ງ ຄັ້ງຕໍ່ໄປ ຈະຕ້ອງໄດ້ເອົາໃຈໃສ່ບາງດ້ານ ດັ່ງນີ້:

1. ການເພີ່ມທະວີວຽກງານສຶກສາອົບຮົມການເມືອງແນວຄິດຂອງອົງຄະນະພັກແຕ່ລະຂັ້ນ ໃຫ້ແກ່ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນຢ່າງກວ້າງຂວາງເປັນປັດໄຈໜຶ່ງທີ່ສຳຄັນ ມີລັກສະນະຕັດສິນຜົນສຳເລັດຂອງການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ເນື່ອງຈາກວ່າການເລືອກຕັ້ງຄັ້ງນີ້ ໄດ້ມີການນຳຂັ້ນສູງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນລົງສະໝັກຮັບເລືອກຕັ້ງເປັນຈຳນວນຫຼາຍ, ເປັນການຍົກສູງບົດບາດຂອງອົງການນິຕິບັນຍັດ ໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ໄດ້ຢ່າງຄົບຖ້ວນ;

2. ຖືສຳຄັນວຽກງານການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ເປັນໜ້າທີ່ ແລະ ຄວາມຮັບຜິດຊອບໂດຍກົງຂອງຄະນະພັກແຕ່ລະຂັ້ນ ໃນການຊີ້ນຳ-ນຳພາຢ່າງແທດເຖິງ ເພື່ອບັນລຸຜົນສຳເລັດຕາມລະດັບຄາດໝາຍ;

3. ການຄັດເລືອກເປົ້າໝາຍອອກສະໝັກເລືອກຕັ້ງໃນຕໍ່ໜ້າ ຄວນມີເວລາ ແລະ ສ້າງເງື່ອນໄຂໃຫ້ພາກສ່ວນທີ່ກ່ຽວຂ້ອງ ໄດ້ຄົ້ນຄວ້າ, ຄັດເລືອກເປົ້າໝາຍໃຫ້ສອດຄ່ອງຕາມມາດຕະຖານ, ເງື່ອນໄຂທີ່ກຳນົດໃນກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອໃຫ້ເປົ້າໝາຍທີ່ຖືກເລືອກຕັ້ງຮັບປະກັນດ້ານໂຄງປະກອບຮຸ່ນອາຍຸ, ເພດ, ເຜົ່າ, ຂົງເຂດວຽກງານ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ບັນລຸຕາມຄາດໝາຍທີ່ກຳນົດໄວ້;

4. ການເກັບກັບຈຳນວນຜູ້ມີສິດປ່ອນບັດເລືອກຕັ້ງຕ້ອງມີຄວາມລະອຽດ, ຄົບຖ້ວນແລະຊັດເຈນກວ່າເກົ່າ, ຄວນມີການປະສານສົມທົບກັບການເກັບກຳສະຖິຕິພົນລະເມືອງແຫ່ງຊາດ ເພາະການເກັບກຳຂຶ້ນບັນຊີຈຳນວນຜູ້ມີສິດປ່ອນບັດເລືອກຕັ້ງຢູ່ເຂດເລືອກຕັ້ງຕ່າງໆໃນຄັ້ງນີ້ ຍັງເອົາຕາມສຳມະໂນຄົວ, ແຕ່ໃນຕົວຈິງຕົວເລກມີການຄາດເຄື່ອນ;

5. ຖືສຳຄັນວຽກງານໂຄສະນາແລະສ້າງຂະບວນການ, ສ້າງໂອກາດໃຫ້ຜູ້ສະໝັກຮັບເລືອກຕັ້ງ ໄດ້ລົງພົບປະ, ແລກປ່ຽນຄຳຄິດຄຳເຫັນກັບຜູ້ມີສິດປ່ອນບັດເລືອກຕັ້ງ ໄດ້ຢ່າງກວ້າງຂວາງ ເພື່ອເຮັດໃຫ້ຜູ້ມີສິດປ່ອນບັດເລືອກຕັ້ງ ມີຄວາມໝັ້ນໃຈ ແລະ ເລືອກເອົາຜູ້ທີ່ຕົນໄວ້ວາງໃຈ ມາເປັນຕົວແທນຢູ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແລະ ເອົາໃຈໃສ່ໂຄສະນາ, ເຜີຍແຜ່ ເພື່ອສ້າງຄວາມຮັບຮູ້, ເຂົ້າໃຈເຖິງຄວາມສຳຄັນ ແລະ ຄວາມຈຳເປັນໃນການເລືອກຕັ້ງ ໃຫ້ແກ່ຜູ້ມີສິດເລືອກຕັ້ງໃນທົ່ວສັງຄົມ ກ່ອນການເລືອກຕັ້ງຢ່າງກວ້າງຂວາງ;

6. ການຄົ້ນຄວ້າຂຶ້ນແຜນການເພື່ອນຳໃຊ້ງົບປະມານໃຫ້ແກ່ການກະກຽມ ແລະ ດຳເນີນການປ່ອນບັດເລືອກຕັ້ງແມ່ນປັດໄຈໜຶ່ງທີ່ສຳຄັນ ເຊິ່ງເປັນການເອື້ອອຳນວຍຄວາມສະດວກໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ເຄື່ອນໄຫວປະຕິບັດສິດ ແລະ ໜ້າທີ່ຂອງຕົນ ບັນລຸຕາມຄາດໝາຍ, ທັນຕາມກຳນົດເວລາ ແລະ ການປະສານງານລະຫວ່າງຄະນະກຳມະການເລືອກຕັ້ງລະດັບຊາດ ແລະ ທ້ອງຖິ່ນຢ່າງກົມກຽວທັນເວລາ ຈະເຮັດໃຫ້ວຽກງານມີຄວາມຄ່ອງຕົວ, ການນຳໃຊ້ເຄື່ອງມືທີ່ທັນສະໄໝໃນການນັບຄະແນນສຽງ ເປັນການຊ່ວຍໃຫ້ການນັບຄະແນນມີຄວາມວ່ອງໄວ, ຊັດເຈນແລະໂປ່ງໃສ.

ກ່ຽວກັບຄຸນລັກສະນະຂອງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ມີຄືດັ່ງນີ້:

I. ຄຸນລັກສະນະຂອງຜູ້ທີ່ໄດ້ຮັບເລືອກຕັ້ງເປັນ ສສຊ ຊຸດທີ X ມີດັ່ງນີ້:

1. ຈຳນວນທັງໝົດມີ 175 ທ່ານ, ຍິງ 52 ທ່ານ (ກວມເອົາ 29.71 %): ຜູ້ສະໝັກຈາກສູນກາງຈຳນວນ 51 ທ່ານ, ຍິງ 14 ທ່ານ ໂດຍມີບັນດາທ່ານກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ກຳມະການສົມບູນ ແລະ ສຳຮອງສູນກາງພັກ ຈຳນວນ 18 ທ່ານ, ຍິງ 03 ທ່ານ; ຜູ້ສະໝັກຈາກທ້ອງຖິ່ນ ຈຳນວນ 124 ທ່ານ, ຍິງ 38 ທ່ານ ໃນນີ້ມີບັນດາທ່ານກຳມະການສູນກາງພັກທີ່ເປັນເລຂາພັກແຂວງ, ນະຄອນຫຼວງ ຈຳນວນ 18 ທ່ານ; ສສຊ ຊຸດທີ IX ສືບຕໍ່ສະໝັກ ໄດ້ຈຳນວນ 32 ທ່ານ, ຍິງ 14 ທ່ານ, ກວມເອົາ18.2%ຂອງຈຳນວນ ສສຊ ທັງໝົດ; ສສຊ ຜູ້ໃໝ່ ມີຈຳນວນ 143 ທ່ານ ເທົ່າກັບ 81.7% ຂອງຈຳນວນ ສສຊ ທັງໝົດ; ຈາກລັດວິສາຫະກິດ ຈຳນວນ 01 ທ່ານ, ຍິງ 01 ທ່ານ; ຈາກທຸລະກິດພາກເອກະຊົນ ຈຳນວນ 02 ທ່ານ, ຍິງ 01 ທ່ານ.

2. ຊົນເຜົ່າ ແຍກຕາມ 4 ໝວດພາສາຄື: ລາວ-ໄຕ ມີ 148 ທ່ານ, ຍິງ 43 ທ່ານ; ມອນ-ຂະແມ ມີ 19 ທ່ານ, ຍິງ 06 ທ່ານ; ມົ້ງ-ອີ້ວມຽນ ມີ 07

ອ່ານຕໍ່ໜ້າ 12



## ສຸຂະສະບາຍຫາຍໂລດາ

# 8 ວິທີແກ້ນອນບໍ່ຫຼັບ

# ຮຽບຮຽງໂດຍ: ດອກຜັກກາດ



ນອນຫຼັບຍາກ ຕ້ອງໃຊ້ເວລາດົນກວ່າຊິຫຼັບ, ນອນຫຼັບບໍ່ແຈບ, ນອນຫຼັບໆຕື່ນໆ, ນອນໄວກວ່າປົກກະຕິ, ຕື່ນນອນແລ້ວບໍ່ສົດຊື່ນ ຄືບໍ່ໄດ້ຫຼັບ ຈົນສົ່ງຜົນປະທົບຕໍ່ໜ້າທີ່ວຽກງານ ແລະ ຄວາມສຳພັນຕໍ່ຜູ້ອື່ນ ເຮັດໃຫ້ຫງຸດຫງິດງ່າຍ, ອາລົມປັ່ນປ່ວນ, ສະໝອງບໍ່ແລ່ນ, ຄິດຊ້າ ເຫຼົ່ານີ້ເປັນຕົ້ນ; ມື້ນີ້ຄໍລຳ "ສຸກສະບາຍຫາຍໂລດາ" ມີສາລະຄວາມຮູ້ມາຝາກ 8 ຂໍ້ ດັ່ງນີ້:

1. ຈັດຫ້ອງນອນໃຫ້ເໝາະສົມແກ່ການນອນ ຢ່າໃຫ້ມີສຽງລົບກວນຄວນປັບອຸນຫະພູມຫ້ອງໃຫ້ເໝາະສົມບໍ່ຮ້ອນ ຫຼື ໜາວເກີນໄປ ທີ່ສຳຄັນຄືຫ້ອງນອນຄວນມືດສະນິດເພື່ອການນອນຫຼັບທີ່ດີມີປະສິດທິພາບ ຄວນປິດໂທລະສັບມືຖືຫຼືນຳໄປວາງໄວ້ໄກຈາກໂຕເຮົາ;

2. ກ່ອນນອນດື່ມນົມອຸ່ນໆຈັກຈອກ ຫຼື ດື່ມນ້ຳຂີງອຸ່ນໆ ຈະຊ່ວຍໃຫ້ຫຼັບສະບາຍຍິ່ງຂຶ້ນ; ຄວນລະວັງໃນຜູ້ທີ່ນອນຫຼັບຍາກຈາກຄວາມຮ້ອນພາຍໃນ ອາດປັບມາດື່ມຢາຫອມທີ່ມີຫຼີດຫອມເຢັນຊິງດື່ມກ່ອນນອນແທນ;

3. ນອນໃຫ້ພຽງພໍ ຢ່ານອນຫຼາຍເກີນໄປຫຼັງຕື່ນນອນຄວນລຸກອອກຈາກຕຽງ ແລ້ວຍ່າງໄປສູດອາກາດຍາມເຊົ້າຄວນນອນຫຼັບສະນິດໃນຊ່ວງ 22:00-02:00;

4. ເຂົ້ານອນ ແລະ ຕື່ນນອນໃຫ້ເປັນເວລາເຮັດໃຫ້ຕິດເປັນນິໄສ;

5. ຖ້ານອນບໍ່ຫຼັບພາຍ 15-20 ນາທີ ຄວນລຸກອອກຈາກຕຽງມາຫາກິດຈະກຳຢ່າງອື່ນເຮັດ ເຊັ່ນ ຟັງເພງແນວທຳມະຊາດ ທີ່ຟັງແລ້ວຮູ້ສຶກຜ່ອນຄາຍ ອ່ານໜັງສືວິຊາການ ຫຼື ທຳມະ, ທຳສະມາທິກ່ອນນອນ, ສູດດົມກິ່ນຫອມເຢັນຈາກເຄື່ອງພົ່ນອາໂຣມ່າ ເຊັ່ນ ກິ່ນນ້ຳມັນຫອມລະເຫີຍຈາກດອກມະລິ, ລາເວັນເດີ ຫຼີກຫຼ່ຽງການເບິ່ງໂທລະທັດ ຫຼື ຫຼິ້ນຄອມພິວເຕີ ເພາະແສງຈາກຈໍຈະກະຕຸ້ນໃຫ້ສະໝອງຕື່ນໂຕ ຫຼີກຫຼ່ຽງການກິນອາຫານຕອນເດິກ ຫຼື ດື່ມນ້ຳຫຼາຍກ່ອນນອນ ຫຼີກລ່ຽງກິດຈະກຳທີ່ໃຊ້ຄວາມຄິດຫຼືຄວາມຄຽດ;

6. ອອກກຳລັງກາຍຢ່າງສະໝ່ຳສະເໝີ ຢ່າງໜ້ອຍມື້ລະ 30-45 ນາທີ 3-4 ມື້ຕໍ່ອາທິດ ການອອກກຳລັງກາຍຈະຊ່ວຍຫຼຸດຄວາມຕຶງຄຽດທາງອາລົມ ແລະ ຮ່າງກາຍໄດ້ ຫາກອອກກຳລັງກາຍໃນຊ່ວງເຊົ້າຈະໄດ້ຜົນດີທີ່ສຸດ ເນັ້ນອອກກຳລັງກາຍແບບ cardio ເພື່ອກະຕຸ້ນໃຫ້ເລືອດລົມໄຫຼວຽນ. ບໍ່ຄວນອອກກຳລັງກາຍຕອນເດິກ ຫຼື ໃກ້ເວລານອນເພາະອຸນຫະພູມໃນຮ່າງກາຍຈະສູງຂຶ້ນ ແລະ ໄປກະຕຸ້ນສະໝອງໃຫ້ເຮັດວຽກ ຈະເຮັດໃຫ້ເຮົາຫຼັບຍາກກວ່າເກົ່າ;

7. ບໍ່ຄວນງີບຫຼັບໃນຕອນກາງເວັນ ເພາະອາດລົບກວນການນອນໃນຊ່ວງຄ່ຳ ຖ້າເຫງົານອນໃຫ້ງີບຫຼັບຫຼັງກິນເຂົ້າທ່ຽງປະມານ 15-30 ນາທີ ບໍ່ຄວນງີບຫຼັບເກີນ 1 ຊົ່ວໂມງ ເປັນອັນຂາດ ຫຼັງ 15:00 ບໍ່ຄວນນອນຫຼັບເພາະຈະເຮັດໃຫ້ຕື່ນມາມຶນງົງໄດ້;

8. ຫຼີກລ່ຽງເຄື່ອງດື່ມທີ່ມີຄາເຟອີນ ຫຼັງຕອນບ່າຍຈົນຮອດຊ່ວງກ່ອນນອນ.

**ແຫຼ່ງທີ່ມາ: ເພດຂ່າວ "ສຸຂະພາບມາກ່ອນ"**




# ໄມ້ແກ່ກາຍຍາມເບັດ ເຫັດແກ່ກາຍຍາມແກງ

**# ໂດຍ: ນາງ ກົງໃຈ ແສງອຳພັນ**

❈ ພຶກສາຊາດພຶດໄມ້
ເບັດໄປຕາມໃຈເຮົາ
ສັນໃດດຽວໂດຍດ້າມ
ກາຍຍາມແກງເພິ່ນເວົ້າ

ລຳແກ່ກາຍຍາມ
ມຸ່ງຫວັງປະສົງໄວ້
ເຫັດບົດຄັນແກ່
ບູຮານນັ້ນກ່າວຈາ

❈ ຄົນກໍໂດຍດັ່ງໄມ້
ປັບປ່ຽນແປງນິໄສ
ສັບສົນລຳຄານຫຍຸ້ງ
ຄັນບໍ່ເຮັດແນ່ແທ້

ຄັນແກ່ກາຍຍາມ
ຍາກໃຈເຫຼືອລົ້ນ
ປັບປຸງຕົນຕອນແກ່ ທ່ານເອີຍ!
ມິມີໄດ້ຮັບຜົນ ດອກນາ

❈ ຫາກວ່າຮູ້ຮີບຮ້ອນ
ປັບປຸງຕອນເຍົາໄວ
ຄາວເມື່ອເຍົາຍັງນ້ອຍ
ຢ້ານເປັນຄືເພິ່ນເວົ້າ

ວອນຮ່ຳຄຳສອນ
ປ່ຽນນິໄສໄວຟ້າວ
ແນວບໍ່ດີຄວນປ່ຽນ
ເໝືອນໄມ້ແກ່ເກີນ

❈ ບູຮານເພິ່ນວ່າໄວ້
ຄຳນວນຈິດໃຈຕົນ
ປະປ່ອຍໄປເລີງເລື້ອຍ
ຄືເຫັດບົດກະດ້າງ

ຄົນໃໝ່ຄວນຈຳ
ຢ່າເປັນຄົນຄືໄມ້
ດົນຫຼາຍເລີຍແກ່
ແກງໄດ້ກໍ່ບໍ່ນົວ ດອກນາ!

❈ ດີແທ້ຕອນໜຸ່ມນ້ອຍ
ສຶກສາທຳຄວາມດີ
ປັບປຸງແປງນິໄສໃຫ້
ຄົນຈຶ່ງຍໍຍົກຍ້ອງ

ຄວນຮ່ຳຮຽນວິຊາ
ໃສ່ຕົນປະດັບເອ້
ສັງຄົມຮັກຮໍ່
ດີແທ້ຊື່ນຊົມ ທ່ານເອີຍ!



## ທັກທາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັບເອງ ບໍ່ເຄັ່ງພິທີການ)*

**# ສຽມທ້ຽນ**

❈ **ຊົມ**ເຊີຍຜົນສຳເລັດ**ກອງປະຊຸມຄັ້ງປະຖົມມະລືກຂອງສະພາແຫ່ງຊາດ ຊຸດທີ X** ທີ່ໄດ້ສຳເລັດເສັດສິ້ນໄປດ້ວຍຜົນສຳເລັດອັນຈົບງາມ 5 ວັນໄດ້ຜ່ານພົ້ນ ຊົມເຊີຍທ່ານ ສສຊ ທີ່ຍົກຍໍບັນຫາ ແຈກປະເດັນເຫັນແຈ້ງທັງອະທິບາຍໄຂຂໍ້ ຈຸດປະສົງປະຊາກ່າວ ເລື່ອງທີ່ຊາວພີ່ນ້ອງ ຂັດຂ້ອງບໍ່ໂລ່ງໃຈ **ບົ້ນບາ!**

❈ **5 ເມສາ**ມໍ່ໃກ້ ວັນໃຫ້ກຳເນີດ **ປກສ** ຂໍອວຍພອນໄຊເດີງ ຕຳຫຼວດລາວຄົນກ້າ ຈະລາຈອນພຽງພ້ອມ ດູແລປະຊາໄພ່ ຕັ້ງແຕ່ເໜືອຮອດໃຕ້ ລາວໄດ້ເພິ່ງພາເຖິງ ຜົນລົບແດດກ້າ ອາສາໃບກລະບາຍທາງ ເດີກຄ່ຳຄືນຍາມນອນ ເຝົ້າລະວັງປົກປ້ອງ ສະໜອງອຳນວຍໃຫ້ ຄວາມສະບາຍທຸກສ່ວນ ເສຍສະຫຼະເລືອດເນື້ອ ເພື່ອປະຊາ ແລະ ຊາດໄດ້ ສະຫງົບພ້ອມພ່ຳສະບາຍ **ທ່ານເອີຍ!**

## 🤗 ຊອບຍິ້ມ 🤗

**# ພົ້ງລົ້ງ**

### ເລື່ອງ: ມຶງແມ່ນໃຜ

ຊີວິດພາຍຫຼັງບ່ານາບຂອງໝູ່ຮັກບົ່ງລົມກັບ

**ຄົນທີ1:** ມື້ວານກູຂີ້ນລົ້ນໄດໄປເຖິງເຮືອນ ແຕ່ກູຄິດບໍ່ອອກວ່າຊິໄປເອົາຫຍັງ?

**ຄົນທີ2:** ກູກະຄືກັບມື້ຄືນນີ້, ກູຍ່າງໄປຕູ້ເຢັນແຕ່ຄິດບໍ່ອອກວ່າຊິເອົາຫຍັງໄປມ້ຽນ ຫຼື ເອົາຫຍັງອອກມາກິນ!!!!!!

"ແລ້ວມຶງເດ!"

**ຄົນທີ3:** ກູຍັງຄິດບໍ່ອອກວ່າສູສອງຄົນແມ່ນໃຜ ແລ້ວເຂົ້າມານັ່ງຢູ່ເຮືອນກູເຮັດຫຍັງ?



## ສຸພາສິດ-ຄະຕິເຕືອນໃຈ

***# ດອກຫຍ້າ***

ດິນບັອກດີນຈີ່ ຍິ່ງກໍ ຍິ່ງສະຫງ່າ
ອິດສາລິດສະຍາ ຍິ່ງກໍ ຍິ່ງມີແຕ່ຫ່າລາຍ



## ຮັບຮອງ...

(ຕໍ່ຈາກໜ້າ 1)

ສຸກອາລຸນ.

ກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ຊຸດທີ X ປະກອບມີ: 1. ກຳມາທິການກົດໝາຍ ແລະ ຍຸຕິທຳ, 2. ກຳມາທິການເສດຖະກິດ ແລະ ການເງິນ, 3. ກຳມາທິການວັດທະນະທຳ-ສັງຄົມ ແລະ ຊົນເຜົ່າ, 4. ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, 5. ກຳມາທິການການຕ່າງປະເທດ ແລະ 6. ຫ້ອງວ່າການສະພາແຫ່ງຊາດ ໂດຍທ່ານບຸນຈັນສິວົງພັນເປັນຫົວຫ້ອງວ່າການສະພາແຫ່ງຊາດ, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ເປັນປະທານກຳມາທິການວັດທະນະທຳ-ສັງຄົມແລະຊົນເຜົ່າ, 3. ທ່ານ ນາງ ທຸມມາລີ ວົງພະຈັນເປັນປະທານກຳມາທິການກົດໝາຍ ແລະ ຍຸຕິທຳ, 4. ທ່ານ ໂພໄຊ ໄຊຄຳພິທູນ ເປັນປະທານກຳມາທິການການຕ່າງປະເທດ, ທ່ານ ພົຈວ. ສຸລິໄຊ ພົຈິດ ເປັນປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ທ່ານ ຈັນທະບູນ ສຸກອາລຸນ ເປັນປະທານກຳມາທິການເສດຖະກິດ ແລະ ການເງິນ.

ທ່ານ ທອງລຸນ ສີສຸລິດ ເປັນປະທານປະເທດ ແລະ ທ່ານ ນາງ ວຽງທອງ ສີພັນດອນ ເປັນຮອງປະທານປະເທດ.

ທ່ານ ສອນໄຊ ສີພັນດອນ ເປັນນາຍົກລັດຖະມົນຕີ.

ກົງຈັກການຈັດຕັ້ງຂອງຄະນະລັດຖະບານ ຊຸດທີ X ເຊິ່ງປະກອບມີ 13 ກະຊວງ ແລະ 2 ອົງການທຽບເທົ່າກະຊວງຄື: 1. ກະຊວງປ້ອງກັນປະເທດ, 2. ກະຊວງປ້ອງກັນຄວາມສະຫງົບ, 3. ກະຊວງການຕ່າງປະເທດ, 4. ກະຊວງຍຸຕິທຳ, 5. ກະຊວງສາທາລະນະສຸກ, 6. ກະຊວງສຶກສາທິການ ແລະ ກິລາ, 7. ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ, 8. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, 9. ກະຊວງການເງິນ, 10. ກະຊວງກະສິກຳແລະສິ່ງແວດລ້ອມ, 11. ກະຊວງອຸດສາຫະກຳ ແລະ ການຄ້າ, 12. ກະຊວງໂຍທາທິການ ແລະ ຂົນສົ່ງ, 13. ກະຊວງເຕັກໂນໂລຊີ ແລະ ການສື່ສານ, 14. ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ 15. ທະນາຄານແຫ່ງສປປລາວ.

ບຸກຄະລາກອນເຂົ້າຮັບຕຳແໜ່ງເປັນຄະນະລັດຖະບານທັງໝົດ 17 ທ່ານ ລວມທັງນາຍົກລັດຖະມົນຕີ ເຊິ່ງມີລາຍຊື່ ແລະ ຕຳແໜ່ງຮັບຜິດຊອບ ດັ່ງນີ້:

1. ທ່ານ ສະເຫຼີມໄຊ ກົມມະສິດ ຮອງນາຍົກລັດຖະມົນຕີ, ຜູ້ປະຈຳການ;
2. ທ່ານ ຄຳພັນ ພົມມະທັດ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງຍຸຕິທຳ;
3. ທ່ານ ທອງສະລິດ ມັງໜໍ່ເມກ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ;
4. ທ່ານ ພົອ. ຄຳລຽງ ອຸທະໄກສອນ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນປະເທດ;
5. ທ່ານ ສັນຕິພາບ ພົມວິຫານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ;
6. ທ່ານ ທອງສະຫວັນ ພົມວິຫານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ;
7. ທ່ານ ນາງ ບຸນຄຳ ວໍລະຈິດ ຜູ້ວ່າການທະນາຄານແຫ່ງ ສປປລາວ;
8. ທ່ານ ພົທ. ວັນທອງ ກອງມະນີ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ;
9. ທ່ານ ບົວຄົງ ນາມມະວົງ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ;
10. ທ່ານ ນາງ ໃບຄຳ ຂັດຕິຍະ ລັດຖະມົນຕີກະຊວງສາທາລະນະສຸກ;
11. ທ່ານ ນາງ ສວນສະຫວັນ ວິຍະເກດ ລັດຖະມົນຕີກະຊວງວັດທະນະທຳ ແລະ ການທ່ອງທ່ຽວ;
12. ທ່ານ ໂພໄຊ ໄຊຍະສອນ ລັດຖະມົນຕີກະຊວງແຮງງານແລະສະຫວັດດີການສັງຄົມ;
13. ທ່ານ ເຫຼັກໄຫຼ ສີວິໄລ ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ;
14. ທ່ານ ມະໄລທອງ ກົມມະສິດ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ;
15. ທ່ານ ລິນຄຳ ດວງສະຫວັນ ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ;
16. ທ່ານສັນຕິສຸກສິມມະລາວົງ ລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ.
17. ທ່ານ ໄພວີ ສີບົວລິພາເປັນປະທານສານປະຊາຊົນສູງສຸດ;
18. ທ່ານ ພົຈວ. ນາງ ລີວົງ ລາວລີ ເປັນຫົວໜ້າອົງການໄອຍະການປະຊາຊົນສູງສຸດ;
19. ທ່ານ ວັນໄຊ ພອງສະຫວັນ ເປັນປະທານອົງການກວດກາແຫ່ງລັດ;
20. ທ່ານ ວຽງທະວີສອນ ເທບພະຈັນ ເປັນປະທານອົງການກວດສອບແຫ່ງລັດ.

## ໂຄງການ...

(ຕໍ່ຈາກໜ້າ 1)

ສຳຫຼວດອອກແບບວິສະວະກຳເບື້ອງຕົ້ນ (Pre-FEED) ກ່ອນການສຳຫຼວດອອກແບບລະອຽດ (Detail Design) ຂອງໂຄງການ(ສະບັບເລກທີ858/ກທຟ, ລົງວັນທີ 12 ພະຈິກ 2025);

- ມີອັດຕາຜົນຕອບແທນ Project IRR= 7.1% ແລະ Equity IRR= 11.2% ແລະ ມີໄລຍະເວລາຂອງການຄືນທຶນ 14 ປີ;
- ລາງລົດໄຟ ເປັນລາງມາດຕະຖານສາກົນ 1,435 ແມັດ (ຄືກັບທາງລົດໄຟລາວ-ຈີນ) ແລະ ນຳໃຊ້ເຕັກໂນໂລຊີສາກົນ;
- ເປົ້າໝາຍການນຳໃຊ້ ແມ່ນເພື່ອຂົນສົ່ງຜູ້ໂດຍສານ ແລະ ສິນຄ້າ ຂອງພາຍໃນປະເທດ ແລະ ພາກພື້ນ;
- ຄວາມໄວອອກແບບ ຂົນສົ່ງໂດຍສານ 150 ກມ/ຊມ ແລະ ຂົນສົ່ງສິນຄ້າໃນລະດັບ 80 ກມ/ຊມ.

2. ດ້ານສິ່ງແວດລ້ອມ-ສັງຄົມ:

ໂຄງການດັ່ງກ່າວ ມີເຂດສະຫງວນແລວທາງລົດໄຟເບື້ອງລະ 50 ແມັດ ແລະ ບາງຊ່ວງຈະໄດ້ສະຫງວນພຽງແຕ່ 20 ແມັດ ເນື່ອງຈາກບໍ່ຢາກໃຫ້ຖືກກະທົບ 3 ປະເພດປ່າ; ກວມເອົາ 4 ຕົວເມືອງ (ທ່າແຂກ 26 ກມ, ມະຫາໄຊ 36 ກມ, ຍົມມະລາດ 63 ກມ ແລະ ບົວລະພາ 22 ກມ), ກວມເນື້ອທີ່ທັງໝົດ 1,628.40 ເຮັກຕາ (ຮຕ), ກວມ 48 ບ້ານ 2,210 ຄອບຄົວ ແລະ ມີຕອນດິນ 3,148 ຕອນ.

ໂຄງການໄດ້ຮັບຮອງມູນຄ່າການຊົດເຊີຍແລ້ວ ຕາມມະຕິຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ (ສະບັບເລກທີ 111/ຄປຈ.ສພຂ, ລົງວັນທີ22 ເມສາ 2025) ແລະ ຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍການນຳໃຊ້ນະໂຍບາຍວ່າດ້ວຍການທົດແທນຄ່າເສຍຫາຍເນື້ອທີ່ດິນ, ສິ່ງປຸກສ້າງແລະພືນລະປູກຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ (ສະບັບເລກທີ 745/ຈຂ, ລົງວັນທີ 6 ພຶດສະພາ 2025); ນອກຈາກນັ້ນ, ຍັງໄດ້ມີການຮັບຮອງວຽກງານສິ່ງແວດລ້ອມດັ່ງນີ້:

- ໄດ້ຮັບການຮັບຮອງເອົາບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (ສະບັບເລກທີ 0222/ກສລ, ລົງວັນທີ 20 ມັງກອນ 2026);
- ໄດ້ໃບຢັ້ງຢືນກ່ຽວກັບແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ (ສະບັບເລກທີ 0223/ກລສ, ລົງວັນທີ 20 ມັງກອນ 2026);
- ໄດ້ຮັບການຢັ້ງຢືນວຽກງານຜົນກະທົບຕໍ່ປ່າໄມ້ (ໂດຍກົມປ່າໄມ້, ກະຊວງກະສິກຳແລະສິ່ງແວດລ້ອມ ສະບັບເລກທີ 5058/ກປມ, ລົງວັນທີ 31 ຕຸລາ 2025) ເຊິ່ງຈະຕ້ອງດຳເນີນການຂໍອະນຸມັດການຫັນປ່ຽນທີ່ດິນປ່າໄມ້ແບບຖາວອນຈຳນວນ 627.62 ຮຕ ແລະ ປູກປ່າທົດແທນຄືນ 609.61 ຮຕ ຕາມລະບຽບການ.

3. ດ້ານການລະດົມທຶນ ແລະ ຄູ່ຮ່ວມມື:

- ໄດ້ມີການລະດົມທຶນຈາກສາກົນ, ບັນດາສະຖາບັນການເງິນຊັ້ນນຳຕ່າງໆພາຍໃນອາຊີ, ເອີຣົບ ແລະ ອາເມລິກາ;
- ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ(MOU)ວ່າດ້ວຍການຮ່ວມມືກັບບັນດາບໍລິສັດ, ລັດວິສາຫະກິດຂະໜາດໃຫຍ່ຈາກ ສ.ເກົາຫຼີ ທີ່ມີຄວາມຊ່ຽວຊານ ແລະ ເປັນມືອາຊີບ ໃນການພັດທະນາພື້ນຖານໂຄງລ່າງ, ການອອກແບບ, ກໍ່ສ້າງ, ການບໍລິການ ແລະ ບູລະນະຮັກສາດ້ານທາງລົດໄຟ.

4. ຜົນປະໂຫຍດໄດ້ຮັບຂອງໂຄງການ:

- ປະກອບສ່ວນຕໍ່ເສດຖະກິດ-ສັງຄົມ21.99ຕື້ໂດລາ;
- ຜົນປະໂຫຍດທັງໝົດທີ່ລັດຖະບານຈະໄດ້ຮັບ 76.33 ຕື້ໂດລາ;
- ອຳນວຍຄວາມສະດວກໃນການຂົນສົ່ງສິນຄ້າ ແລະ ຜູ້ໂດຍສານ ແລະ ສ້າງລາຍຮັບຈາກການຂົນສົ່ງ ໄດ້ຫຼາຍກວ່າ 32.60 ຕື້ໂດລາ;
- ປະຫຍັດເວລາຈາກການຂົນສົ່ງ ເຊິ່ງຕີມູນຄ່າເປັນ 2.79 ຕື້ໂດລາ;
- ສ້າງວຽກເຮັດງານທຳຈາກປີ 2030 ເປັນຕົ້ນໄປ ຈຳນວນ 853 ຄົນ/ວັນ ແລະ ປີ 2050 ຈຳນວນ 10,133 ຄົນ/ວັນ;
- ຂົນສົ່ງສິນຄ້າ ຈາກ 5,079 ໂຕນ/ວັນ ໃນປີ 2030 ເປັນຕົ້ນໄປ ແລະ ເພີ່ມຂຶ້ນເປັນ 47,133 ໂຕນ/ວັນໃນປີ2050.

ຜົນການເຈລະຈາສັນຍາສຳປະທານ:

- ຊື່ໂຄງການ: ໂຄງການທາງລົດໄຟ ແຕ່ຕົວເມືອງທ່າແຂກ ແຂວງຄຳມ່ວນ ຫາ ມູຢ່າ (ຊາຍແດນລາວ-ຫວຽດນາມ) ໄລຍະທາງ 147 ກິໂລແມັດ;
- ຄູ່ສັນຍາ: ລັດຖະບານລາວ ຕາງໜ້າໂດຍຄະນະກຳມະການສົ່ງເສີມແລະຄຸ້ມຄອງການລົງທຶນ ກັບ ບໍລິສັດ ທາງລົດໄຟລາວ-ຫວຽດນາມ ຈຳກັດ (ບໍລິສັດໂຄງການ);
- ຜູ້ພັດທະນາ: ບໍລິສັດ ປີໂຕຣລຽມ ເທຣດດິ້ງ ລາວ ມະຫາຊົນ (ປີໂຕຣເທຣດ);
- ຮູບແບບການລົງທຶນ: ກໍ່ສ້າງ, ດຳເນີນງານ ແລະ ມອບໂອນ (BOT);
- ຄາດຄະເນມູນຄ່າການລົງທຶນ 1,339 ລ້ານໂດລາ;
- ອາຍຸສຳປະທານ: 50 ປີ ນັບແຕ່ວັນໃຫ້ການບໍລິການເປັນຕົ້ນໄປ (COD) ແລະ ສາມາດສະເໜີຄຳຮ້ອງການຂໍຕໍ່ອາຍຸສຳປະທານ ກ່ອນວັນສິ້ນສຸດສັນຍາສຳປະທານ 3 ປີ.

## ຄປຈສພຂ...

(ຕໍ່ຈາກໜ້າ 3)

ໄລສ້າງລາຍຮັບເຂົ້າງົບປະມານແຫ່ງລັດ, ຮັບປະກັນການຊຳລະໜີ້ສິນຕາມກຳນົດເວລາ ແລະ ບໍ່ສ້າງໜີ້ສິນເພີ່ມ.

8. ສືບຕໍ່ສ້າງສະຖຽນລະພາບດ້ານເງິນຕາ, ຍົກສູງການນຳໃຊ້ເງິນກີບ, ຄຸ້ມຄອງການຖືຄອງ ແລະ ໃຊ້ຈ່າຍເງິນຕາຕ່າງປະເທດໃຫ້ເຂັ້ມງວດ, ບໍ່ໃຫ້ຜູກຂາດການນຳໃຊ້ເງິນຕາຕ່າງປະເທດສະກຸນໃດໜຶ່ງ; ຄຸ້ມຄອງການນຳເຂົ້າເງິນຕາຈາກການສົ່ງອອກຜ່ານລະບົບທະນາຄານໃຫ້ໄດ້ 80% ຂຶ້ນໄປ, ເພີ່ມຄັງສຳຮອງໃຫ້ກຸ້ມການນຳເຂົ້າ6-7 ເດືອນຂຶ້ນໄປ ໂດຍສະເພາະການສະໜອງໃຫ້ແກ່ການນຳເຂົ້ານ້ຳມັນເຊື້ອໄຟໃຫ້ພຽງພໍ ແລະ ແກ້ໄຂການຂາດດຸນຊຳລະກັບຕ່າງປະເທດ (BOP) ໃຫ້ຫຼຸດລົງ.

9. ປະຕິບັດຄາດໝາຍດ້ານຊັບພະຍາກອນທຳມະຊາດ ແລະແກ້ໄຂບັນຫາສິ່ງແວດລ້ອມໃຫ້ໄດ້ຕາມຄາດໝາຍ; ເພີ່ມທະວີການຄຸ້ມຄອງ, ຕິດຕາມກວດກາ ແລະ ປະເມີນຄືນ ວຽກງານປົກປັກຮັກສາປ່າໄມ້ ທັງເຂັ້ມງວດໃນການຄຸ້ມຄອງທີ່ດິນ 3 ປະເພດປ່າ ແລະ ອຸທິຍານແຫ່ງຊາດ ເພື່ອຍົກລະດັບເນື້ອທີ່ປົກຫຸ້ມປ່າໄມ້ໃຫ້ກວມເຖິງ70%.

10. ຮີບຮ້ອນຄົ້ນຄວ້າສ້າງແຜນຍຸດທະສາດນ້ຳມັນເຊື້ອໄຟ ແລະ ມີນະໂຍບາຍສົ່ງເສີມດຶງດູດການລົງທຶນໃນກິດຈະການໂຮງງານຜະລິດ ແລະ ປຸງແຕ່ງນ້ຳມັນເຊື້ອໄຟຢູ່ພາຍໃນປະເທດ ຮັບປະກັນໃຫ້ການສະໜອງນ້ຳມັນເຊື້ອໄຟຢູ່ພາຍໃນໃຫ້ພຽງພໍ ແລະ ລາຄາສົມເຫດສົມຜົນ, ຫຼີກລ່ຽງບັນຫາຂາດແຄນນ້ຳມັນເຊື້ອໄຟໃນຕໍ່ໜ້າ ແລະ ໄລຍະຍາວ ທັງຊຸກຍູ້ໃຫ້ຫັນມານຳໃຊ້ພະລັງງານທົດແທນ.

11. ຄຸ້ມຄອງການນຳໃຊ້ຊັບພະຍາກອນທຳມະຊາດຢ່າງເຂັ້ມງວດ, ສ້າງນິຄົມອຸດສາຫະກຳຕົວແບບ, ເຂດອຸດສາຫະກຳປຸງແຕ່ງແຮ່ທາດເປັນຜະລິດຕະພັນສຳເລັດຮູບກ່ອນສົ່ງອອກ; ຄັດເລືອກນັກລົງທຶນທີ່ດີ, ມີຄຸນນະພາບ, ມີຄວາມພ້ອມດ້ານການເງິນ ແລະ ເຕັກນິກວິຊາການແບບມືອາຊີບ ເຂົ້າມາພັດທະນາ; ສຸມໃສ່ກວດກາ ແລະ ປະເມີນຜົນໂຄງການທີ່ໄດ້ຮັບການອະນຸຍາດຂຸດຄົ້ນ-ສຳຫຼວດ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດທີ່ໄດ້ຮັບອະນຸຍາດ ພ້ອມທັງທົບທວນສັນຍາສຳປະທານຂອງບັນດາໂຄງການດັ່ງກ່າວ ເພື່ອຮັບປະກັນໃຫ້ປະເທດຊາດໄດ້ຮັບຜົນປະໂຫຍດສູງສຸດ.

12. ປະເມີນຄືນຍຸດທະສາດການພັດທະນາໄຟຟ້າໃຫ້ມີຄວາມໝັ້ນຄົງ, ມີຄວາມພ້ອມໃນການສະໜອງໄຟຟ້າໃຫ້ພຽງພໍ ໂດຍສຸມໃສ່ພະລັງງານທົດແທນ ຄຽງຄູ່ກັບການຄຸ້ມຄອງລາຄາໄຟຟ້າໃຫ້ເໝາະສົມ.

13. ພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກເປັນຈຸດສຸມ, ເປັນບຸລິມະສິດ ລວມທັງຍົກລະດັບຊີວິດການເປັນຢູ່ໃຫ້ດີຂຶ້ນເປັນກ້າວໆ, ຖືເປັນວາລະແຫ່ງຊາດໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

14. ເພີ່ມທະວີຄວາມສັກສິດໃນການຄຸ້ມຄອງລັດຄຸ້ມຄອງສັງຄົມດ້ວຍກົດໝາຍ, ປະຕິບັດກົດໝາຍຢ່າງເຂັ້ມງວດ ແລະ ເດັດຂາດ, ຫຼຸດຜ່ອນການຍົກເວັ້ນການປະຕິບັດພັນທະພາສີອາກອນຫຼາຍເກີນໄປ, ແກ້ໄຂຜົນການກວດສອບ-ກວດກາໃຫ້ໄດ້ຢ່າງຂາດຕົວ ແລະ ເກັບມອບລາຍຮັບທີ່ກວດພົບເຫັນເຂົ້າງົບປະມານແຫ່ງລັດໃຫ້ຄົບຖ້ວນ.

ເບິ່ງໄວ້ ໄດ້ບົດຮຽນ

# ໃຫ້ບູລິມະສິດສຳລັບ ການພັດທະນາສີຂຽວ

❖ ວິເສດ ສະແຫວງສຶກສາ

ພົບກັນໃນຄໍລຳເກົ່າເຈົ້າເດີມປະຈຳວັນນີ້, ເລື່ອງທີ່ຄວນເບິ່ງໄວ້ເພື່ອເປັນບົດຮຽນນັ້ນ ກ່ຽວກັບບັນຫາສິ່ງແວດລ້ອມໃນຫຼາຍໆມິຕິ ເຊັ່ນການລົງທຶນໃສ່ສິ່ງແວດລ້ອມເອີ້ນວ່າການລົງທຶນສີຂຽວ. ໃນປັດຈຸບັນ, ຫຼາຍໆປະເທດ ກໍຄືອົງການຈັດຕັ້ງການເງິນລະດັບພາກພື້ນ ແລະ ສາກົນ ໄດ້ຖືສຳຄັນເງື່ອນໄຂການສະໜອງທຶນ ເພື່ອການພັດທະນາສີຂຽວ ເຊັ່ນ: ລະບົບທະນາຄານຫວຽດນາມນັ້ນ ໄດ້ກຳນົດນະໂຍບາຍສະໜອງທຶນພັດທະນາໃຫ້ພາກສ່ວນຕ່າງໆບົນເງື່ອນໄຂ“ຕ້ອງມີການປະເມີນດ້ານສິ່ງແວດລ້ອມກ່ອນຈະໄດ້ຮັບທຶນ” ເພື່ອໃຫ້ແນ່ໃຈວ່າການພັດທະນາດັ່ງກ່າວນັ້ນ ເປັນມິດກັບສິ່ງແວດລ້ອມແທ້ ຫຼື ບໍ່; ຢູ່ ອິນໂດເນເຊຍ, ມາເລເຊຍ ແລະ ສິງກະໂປ ກໍເຊັ່ນກັນ, ທະນາຄານຈະໃຫ້ເງິນກູ້ຢືມແກ່ໂຄງການໃດໜຶ່ງນັ້ນ ກໍມີເງື່ອນໄຂໃຫ້ພາກສ່ວນກູ້ຢືມ ມີບົດວິພາກດ້ານສິ່ງແວດລ້ອມແລະຄວາມສ່ຽງຕ່າງໆ ທີ່ຈະສົ່ງຜົນກະທົບຕໍ່ສັງຄົມ ກໍຄືຊີວິດການເປັນຢູ່ຂອງຄົນ. ມີຂ່າວໜ້າສົນໃຈໜຶ່ງອອກມາໃນທ້າຍປີຜ່ານມາ ທີ່ບອກວ່າທະນາຄານໂລກ (WB) ແລະ ທະນາຄານພັດທະນາອາຊີ(ADB) ໄດ້ຕົກລົງສະໜອງເງິນຈຳນວນ 12.5 ຕື້ໂດລາ ໃຫ້ອາຊຽນ ເພື່ອຂະຫຍາຍບັນດາໂຄງການສີຂຽວ ໂດຍ WB ສະໜອງ 2.5 ຕື້ໂດລາ ແລະ 10 ຕື້ໂດລາ ຈາກ ADB, ເງິນຈຳນວນດັ່ງກ່າວ ຈະເລັ່ງໃສ່ການພັດທະນາ ແລະ ສ້າງໂອກາດສຳລັບວຽກເຮັດງານທຳ ແລະ ການດຳເນີນທຸລະກິດໃໝ່ໃນອາຊຽນ ໂດຍນຳໃຊ້ພະລັງງານສະອາດ ກໍຄືພະລັງງານທົດແທນ; ຂ່າວບອກວ່າ ບັນດານັກທຸລະກິດເອກະຊົນໃຫ້ຄວາມສົນໃຈທີ່ສຸດໃນໂຄງການສີຂຽວຢູ່ອາຊຽນນີ້ ສ່ວນໃຫຍ່ມາຈາກກຸ່ມປະເທດອາຣັບ, ຍີ່ປຸ່ນ ແລະ ສປຈີນ. ປັດໄຈຕົ້ນຕໍທີ່ອາຊຽນຄວນຮ່ວມມືກັນພັດທະນາເພື່ອນຳໃຊ້ທຶນດັ່ງກ່າວຕາມເປົ້າໝາຍ ກໍຄືການພັດທະນາພະລັງງານໄຟຟ້າທີ່ເປັນພະລັງງານສະອາດແນໃສ່ເຮັດໃຫ້ໂຄງການດຳເນີນໄປແບບເປັນມິດກັບສິ່ງແວດລ້ອມຢ່າງແທ້ຈິງ.

ຂໍປິດທ້າຍບົດນີ້ດ້ວຍຂ່າວກ່ຽວກັບຂໍ້ແນະນຳສຳຄັນເພື່ອຫຼຸດຜ່ອນຜົນກະທົບຈາກອຸດສາຫະກຳທ່ອງທ່ຽວທີ່ກະທົບຕໍ່ສິ່ງແວດລ້ອມ, ເຮັດໃຫ້ເກີດອາຍແກັສເຮືອນແກ້ວທີ່ເປັນໂຕການເຮັດໃຫ້ອາກາດໃນໂລກຂອງພວກເຮົາຮ້ອນເພີ່ມຂຶ້ນ; ຂໍ້ມູນໄດ້ຊີ້ອອກວ່າ: ໃນປັດຈຸບັນ, ອາຍແກັສເຮືອນແກ້ວທີ່ເກີດຈາກອຸດສາຫະກຳທ່ອງທ່ຽວນັ້ນ ໄດ້ເພີ່ມຂຶ້ນເປັນ 8.8% ຈາກ 7.2% ໃນປີ 2009. ຂໍ້ແນະນຳດັ່ງກ່າວນັ້ນ ມາຈາກບັນດາຊ່ຽວຊານມະຫາວິທະຍາໄລຊື່ດັງ 2 ແຫ່ງຂອງອົດສະຕຣາລີ ແລະ 1 ແຫ່ງ ຂອງປະເທດຊູແອດ (ສະວີເດັນ) ເຊິ່ງລວມມີຂໍ້ສະເໜີໃຫ້ຫຼຸດຜ່ອນຖ້ຽວບິນຍາວຫຼາຍຊົ່ວໂມງ ເພາະຈະເກີດມີອາຍພິດຈາກການເຜົາໄໝ້ນ້ຳມັນເຊື້ອໄຟ, ນຳໃຊ້ພະລັງງານສະອາດສຳລັບພາຫະນະຮັບໃຊ້ນັກທ່ອງທ່ຽວ, ໂຮງແຮມ, ຮ້ານອາຫານ, ຮ້ານກາເຟ ແລະ ສະຖານທີ່ບັນເທີງຕ່າງໆ; ຂໍ້ແນະນຳນີ້ຫຼາຍປະເທດໄດ້ນຳເອົາໄປປະຕິບັດຕາມແຫຼ່ງທ່ອງທ່ຽວສຳຄັນຕ່າງໆເຊັ່ນ: ທີ່ພະລາຊະວັງຕ້ອງຫ້າມຂອງຈີນ, ອະນຸສອນຄວາມຮັກ (ທາດສະມາຮານ) ຂອງອິນເດຍ, ອັງກໍວັດຂອງກຳປູເຈຍ ແລະ ອື່ນໆ.




***#ບ່າວກະບື***

ສຸເດັດ ຫາກໍ່ແຕ່ງດອງມາໄດ້ພຽງ 6 ເດືອນເທົ່ານັ້ນ ເມື່ອເຂົາຈົ່ມທຸກໃຫ້ເພື່ອນຂອງເຂົາຟັງວ່າ: “ເຮົາເກືອບເປັນລົມ ເມື່ອຮອດຮູ້ວ່າເມຍເຮົາເປັນຄົນຂີ້ຕົວະ”

“ໂຕຮູ້ໄດ້ແນວໃດ?” ເພື່ອນເຂົາຖາມ

“ຄືນແລ້ວນີ້ ມັນບອກວ່າມັນອອກໄປທ່ຽວນອກກັບນາລີ, ສາວເລຂາຂອງເຮົາ, ແຕ່ຕົວຈິງແມ່ນເຮົາເອງໄປກັບນາລີ”

***# BAOKBU***

“Soodeth had only been married six months, when he confided to his friends, I've just had a terrible shock. I haxe just discovered that my wife is a liar”.

“How do you know?” asked his friend

“She said she was out with my secretary Naly last night. But actually I was out with Naly last night”

## ຮັບຮອງ...

(ຕໍ່ຈາກໜ້າ 4)

ຊົນສູງສຸດໂດຍແມ່ນສະພາແຫ່ງຊາດ ພິຈາລະນາ, ຮັບຮອງເອົາການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ.

ຈຳນວນສະມາຊິກສະພາຜູ້ພິພາກສາ ບໍ່ໃຫ້ເກີນສິບຫ້າຄົນ.

ສະພາຜູ້ພິພາກສາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າຮ່າງກົດໝາຍ ແລະ ຮ່າງນິຕິກຳອື່ນຂອງສານປະຊາຊົນ;
2. ຄົ້ນຄວ້າຮ່າງຄຳແນະນຳຂອງສານປະຊາຊົນສູງສຸດ ກ່ຽວກັບການປະຕິບັດກົດໝາຍ ແລະ ການດຳເນີນຄະດີຂອງສານປະຊາຊົນ ໃຫ້ຖືກຕ້ອງ ແລະ ເປັນເອກະພາບໃນທົ່ວປະເທດ;
3. ຄົ້ນຄວ້າຮ່າງຄຳແນະນຳທາງດ້ານປະເພນີສານຂອງສານປະຊາຊົນສູງສຸດ;
4. ຄົ້ນຄວ້າຄຳຕັດສິນປະຫານຊີວິດ ຂອງສານປະຊາຊົນທ້ອງຖິ່ນແລະສານທະຫານ ເພື່ອສະເໜີໃຫ້ປະທານສານປະຊາຊົນສູງສຸດ ອອກຄຳຊີ້ຂາດ;
5. ຄົ້ນຄວ້າຄຳສະເໜີຮື້ຟື້ນຄະດີຂອງໄອຍະການປະຊາຊົນສູງສຸດ;
6. ຄົ້ນຄວ້າການແຕ່ງຕັ້ງ ຫຼືປົດຕຳແໜ່ງຮອງປະທານສານປະຊາຊົນສູງສຸດເພື່ອໃຫ້ປະທານສານປະຊາຊົນສູງສຸດ ສະເໜີຕໍ່ປະທານປະເທດ ພິຈາລະນາ;
7. ຄົ້ນຄວ້າການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຜູ້ພິພາກສາຂອງສານປະຊາຊົນສູງສຸດ, ປະທານ, ຮອງປະທານ ແລະ ຜູ້ພິພາກສາຂອງສານປະຊາຊົນ ເພື່ອໃຫ້ປະທານສານປະຊາຊົນສູງສຸດສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ;
8. ກະກຽມເນື້ອໃນ ແລະ ຮູບການກອງປະຊຸມໃຫຍ່ຜູ້ພິພາກສາ;
9. ສະຫຼຸບຕີລາຄາ ແລະ ຖອດຖອນບົດຮຽນກ່ຽວກັບການເຄື່ອນໄຫວວຽກງານຂອງສານເປັນຕົ້ນການດຳເນີນຄະດີ;
10. ຄົ້ນຄວ້າຮ່າງບົດລາຍງານຂອງປະທານສານປະຊາຊົນສູງສຸດກ່ຽວກັບກັບການເຄື່ອນໄຫວວຽກງານຂອງສານ ເພື່ອນຳສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ;
11. ນຳໃຊ້ສິດແລະປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ກອງປະຊຸມສະພາຜູ້ພິພາກສາເປີດຂຶ້ນຢ່າງໜ້ອຍສາມເດືອນຕໍ່ເທື່ອ.

ກອງປະຊຸມສະພາຜູ້ພິພາກສາ ຈະດຳເນີນໄດ້ກໍຕໍ່ເມື່ອຫາກມີສະມາຊິກເຂົ້າຮ່ວມຢ່າງໜ້ອຍສອງສ່ວນສາມຂອງຈຳນວນສະມາຊິກສະພາຜູ້ພິພາກສາທັງໝົດ.

ມະຕິຂອງກອງປະຊຸມສະພາຜູ້ພິພາກສາ ຈະມີຄຸນຄ່າໄດ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກທີ່ເຂົ້າຮ່ວມກອງປະຊຸມ.

## ຜົນສຳເລັດ...

(ຕໍ່ຈາກໜ້າ 9)

ທ່ານ, ຍິງ 03 ທ່ານ; ຈີນ-ຕີເບດ ມີ 01 ທ່ານ.

3. ອາຍຸກະສຽນ: 45 ປີລົງມາ ມີ 19 ທ່ານ, ຍິງ 06 ທ່ານ; 46-55 ປີ ມີ 91 ທ່ານ, ຍິງ 33 ທ່ານ; 56-60 ປີ ມີ 53 ທ່ານ, ຍິງ 11 ທ່ານ; 61 ປີຂຶ້ນໄປ ມີ 12 ທ່ານ, ຍິງ 02 ທ່ານ.

4. ລະດັບການສຶກສາ: ມັດທະຍົມປາຍ ມີ 175 ທ່ານ, ຍິງ 52 ທ່ານ.

5. ລະດັບວິຊາສະເພາະ: ຊັ້ນສູງ ມີ 09 ທ່ານ, ຍິງ 04 ທ່ານ; ປະລິນຍາຕີ ມີ 30 ທ່ານ, ຍິງ 15 ທ່ານ; ປະລິນຍາໂທ ມີ 106 ທ່ານ, ຍິງ 32 ທ່ານ; ປະລິນຍາເອກ ມີ 30 ທ່ານ, ຍິງ 01 ທ່ານ.

6. ລະດັບທິດສະດີ: 45 ວັນ ມີ 06 ທ່ານ, ຍິງ 03 ທ່ານ; ຂັ້ນກາງ ມີ 06 ທ່ານ, ຍິງ 02 ທ່ານ; ຂັ້ນສູງ ມີ 163 ທ່ານ, ຍິງ 47 ທ່ານ.

II. ຄຸນລັກສະນະຂອງຜູ້ທີ່ໄດ້ຮັບການເລືອກຕັ້ງເປັນ ສສຂ ຊຸດທີ V ມີດັ່ງນີ້:

1. ຈຳນວນທັງໝົດ ມີ 745 ທ່ານ, ຍິງ 211 ທ່ານ (ກວມ 28.32 %): ຈາກພະແນການຂອງແຂວງ 229 ທ່ານ, ຍິງ 61 ທ່ານ; ຈາກຂັ້ນເມືອງ 496 ທ່ານ, ຍິງ 144 ທ່ານ; ຈາກລັດວິສາຫະກິດ 07 ທ່ານ; ຈາກທຸລະກິດພາກເອກະຊົນ 13 ທ່ານ, ຍິງ 06 ທ່ານ.

2. ຊົນເຜົ່າ ແຍກຕາມ 4 ໝວດພາສາຄື: ລາວ-ໄຕ ມີ 569 ທ່ານ, ຍິງ 166 ທ່ານ; ມອນ-ຂະແມ ມີ 107 ທ່ານ, ຍິງ 31 ທ່ານ; ມົ້ງ-ອິ້ວມຽນ ມີ 44 ທ່ານ, ຍິງ 06 ທ່ານ; ຈີນ-ຕີເບດມີ25ທ່ານ,ຍິງ08ທ່ານ.

3. ອາຍຸກະສຽນ: 45 ປີລົງມາ ມີ 265 ທ່ານ, ຍິງ 116 ທ່ານ; 46-55 ປີ ມີ 430 ທ່ານ, ຍິງ 89 ທ່ານ; 56-60 ປີ ມີ 49 ທ່ານ, ຍິງ 06 ທ່ານ; 61 ປີຂຶ້ນໄປ ມີ 01 ທ່ານ.

4. ລະດັບການສຶກສາ: ມັດທະຍົມຕົ້ນ ມີ 03 ທ່ານ, ຍິງ 01 ທ່ານ; ມັດທະຍົມປາຍ ມີ 742 ທ່ານ, ຍິງ 211 ທ່ານ.

5. ລະດັບວິຊາສະເພາະ: ຊັ້ນຕົ້ນ ມີ 05 ທ່ານ, ຍິງ 02 ທ່ານ; ຊັ້ນກາງ ມີ 21 ທ່ານ, ຍິງ 04 ທ່ານ; ຊັ້ນສູງ ມີ 109 ທ່ານ, ຍິງ 53 ທ່ານ; ປະລິນຍາຕີ ມີ 355 ທ່ານ, ຍິງ 107 ທ່ານ; ປະລິນຍາໂທ ມີ 231 ທ່ານ, ຍິງ 42 ທ່ານ; ປະລິນຍາເອກ ມີ 24 ທ່ານ, ຍິງ 03 ທ່ານ.

6. ລະດັບທິດສະດີ: 45 ວັນ ມີ 15 ທ່ານ, ຍິງ 09 ທ່ານ; ຂັ້ນຕົ້ນ ມີ 35 ທ່ານ, ຍິງ 12 ທ່ານ; ຂັ້ນກາງ ມີ 241 ທ່ານ, ຍິງ 94 ທ່ານ; ຂັ້ນສູງ ມີ 435 ທ່ານ, ຍິງ 92 ທ່ານ; ບໍ່ຜ່ານ ມີ 19 ທ່ານ, ຍິງ 04 ທ່ານ.

ປະຕິບັດຕາມມາດຕາ 8 ຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເຊິ່ງພາຍຫຼັງທີ່ຄະນະກຳມະການເລືອກຕັ້ງລະດັບຊາດໄດ້ປະກາດລາຍຊື່ຜູ້ທີ່ໄດ້ຮັບການເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ຄະນະກຳມະການເລືອກຕັ້ງຂັ້ນແຂວງໄດ້ປະກາດລາຍຊື່ຜູ້ທີ່ໄດ້ຮັບການເລືອກຕັ້ງເປັນສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V, ມາເຖິງປັດຈຸບັນ ບໍ່ມີຜູ້ສະເໜີຄັດຄ້ານ ຫຼື ສະເໜີປົດຕຳແໜ່ງ ສສຊ ຊຸດທີ X, ສສຂ ຊຸດທີ V ທີ່ໄດ້ຮັບການເລືອກຕັ້ງຜ່ານມາແຕ່ຢ່າງໃດແລະຜ່ານການກວດກາຂອງ ຄລຊ ເຫັນວ່າ ສສຊ ຈຳນວນ 175 ທ່ານ, ຍິງ 52 ທ່ານ ແລະ ສສຂ ຈຳນວນ 745 ທ່ານ, ຍິງ 211 ທ່ານ ທີ່ໄດ້ຮັບການເລືອກຕັ້ງຈາກຜູ້ມີສິດເລືອກຕັ້ງໃນທົ່ວປະເທດ ໃນຄັ້ງວັນທີ 22 ກຸມພາ 2026 ຜ່ານມານັ້ນ ແມ່ນມີຄຸນລັກສະນະຖືກຕ້ອງຕາມມາດຕະຖານທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ສາມາດເປັນຕົວແທນແຫ່ງສິດຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າໃນທົ່ວປະເທດຢ່າງຖືກຕ້ອງຕາມທີ່ກຳນົດໃນລັດຖະທຳມະນູນ ແລະ ກົດໝາຍ.

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ປອ. ພິດສະໄໝ ບຸນວິໄລ

**ຄະນະບັນນາທິການ**
ທ່ານ ສຸລະສັກ ສຸວັນນະວົງ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອນສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ